ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ປະທານປະເທດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມ ຂໍ່ານັບຂອງຄະນະຜູ້ແທນພັກກອມມູນິດຈີນ ນໍາໂດຍ ສະຫາຍ ຫຼິວຈຽນຊາວ ກໍາມະການສູນກາງພັກຫົວໜ້າຄະນະ ພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທີ່ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

(ວັນທີ 8 ກັນຍາ 2023)

ສະບັບ: 259

ປະຈຳເດືອນ ກັນຍາ 2023

Korsangphakmagazine@gmail.com

ວັນທີ 1 ກັນຍາ 2023 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປະກາດມະຕິຕົກລົງ ວ່າດ້ວຍການໃຫ້ພະນັກງານພັກການ-ຮັບອຸດໜູນບໍານານ ໂດຍການເຂົ້າຮ່ວມ ຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ, ຄະນະນຳ ແລະ ພະນັກງານພາຍໃນຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມ.

ໃນລະຫວ່າງຕົ້ນເດືອນກັນຍາ ປີ 2023 ພາຍຫຼັງສຳເລັດດຳເນີນຊີວິດການເມືອງຄະນະບໍລິຫານງານພັກກາງສະໄໝຢູ່ຂັ້ນຕົ້ນ ສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ລົງເຄື່ອນໄຫວພົບປະກັບບັນດາກົມ, ຫ້ອງການ ແລະ ສູນ ພາຍໃນຄະນະຈັດຕັ້ງສູນກາງພັກ ຮັບຟັງການສ່ອງແສງລາຍງານສະພາບການເຄື່ອນໄຫວວຽກງານຂອງບັນດາກົມ ເພື່ອຊຸກຍູ້ ແລະ ໃຫ້ທິດຊີ້ນຳຕໍ່ການປະຕິບັດໜ້າທີ່ຂອງຄະນະພັກ, ຄະນະນຳ, ບັນດາພະນັກງານ, ສະມາຊິກພັກພາຍໃນຄະນະຈັດຕັ້ງສູນກາງພັກ.

ວັນທີ 7 ກັນຍາ 2023 ກະຊວງສາທາລະນະສຸກໄດ້ຈັດກອງປະຊຸມເຜີຍແຜ່, ເຊື່ອມຊຶມ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ XI; ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມ 3 ຂັ້ນຂອງພັກ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກສະບັບເລກທີ211/ຄຈສພກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ໂດຍການເປັນປະທານຂອງສະຫາຍ ປອ.ດຣ ບຸນແຝງ ພູມມະໄລສິດ, ກຳມະການສູນກາງພັກ, ເລຂາຄະນະພັກກະຊວງ, ລັດຖະມົນຕີກະຊວງສາທາລະນະສຸກ, ມີຄະນະພັກກະຊວງ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານເຂົ້າຮ່ວມ.

ວັນທີ 1 ກັນຍາ 2023 ຄະນະຈັດຕັ້ງສູນກາງພັກ ໄດ້ດຳເນີນກອງປະຊຸມເຜີຍແຜ່ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກສະບັບ ເລກທີ 411/ຄລສພ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມ3ຂັ້ນຂອງພັກ, ຄຳແນະນຳ ການຈັດຕັ້ງປະຕິບັດ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມ 3 ຂັ້ນຂອງພັກ ຂອງຄະນະຈັດຕັ້ງສູນກາງພັກສະບັບ ເລກທີ 211/ຄຈສພ ແລະ ຂໍ້ກຳນົດ ສະບັບ ເລກທີ 416/ຄລສພ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະພັກຮາກຖານກຸ່ມບ້ານ ຫຼື ບ້ານໃຫຍ່ ໂດຍການເຜີຍແຜ່ຂອງສະຫາຍ ນາງ ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ສະຫາຍ ປອ ວິສຸກ ພົມພິທັກ ກຳມະການຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີບັນດາຄະນະພັກ, ພະນັກງານ-ລັດຖະກອນທັງໝົດເຂົ້າຮ່ວມ.

ວັນທີ 06 ກັນຍາ 2023 ຄະນະຈັດຕັ້ງສູນກາງພັກໄດ້ປິດການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານນໍາພາ-ຄຸ້ມຄອງ ຂະແໜງການຈັດຕັ້ງທີ່ແຂວງບໍລິຄໍາໄຊ, ໂດຍການເປັນປະທານຂອງສະຫາຍ ນາງ ບຸດສະດີ ທະນະເມືອງ ກໍາມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ສະຫາຍ ວັນວິໄລ ແດນພູຫຼວງ, ຮອງເລຂາພັກແຂວງ, ຜູ້ຊີ້ນໍາວຽກງານພັກ-ພະນັກງານ ແຂວງບໍລິຄໍາໄຊ; ມີສະຫາຍ ຮສ ປອ ໄກສອນ ເພັງໂສພາ ຮອງຄະນະພັກຮາກຖານ ສໍານັກງານອະທິການບໍດີ ຫົວໜ້າຫ້ອງການຫຼັງປະລິນຍາຕີ ມະຫາວິທະຍາໄລແຫ່ງຊາດ, ມີຮອງຫົວໜ້າຄະນະຈັດຕັ້ງແຂວງ, ມີບັນດາສະຫາຍຮອງເລຂາພັກເມືອງ, ຄະນະປະຈໍາພັກ, ຫົວໜ້າຄະນະຈັດຕັ້ງເມືອງ, ມີວິທະຍາກອນຈາກຄະນະຈັດຕັ້ງສູນກາງພັກ ແລະ ສໍາມະນາກອນ ເຂົ້າຮ່ວມ.

ວັນທີ 5 ກັນຍາ 2023 ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຈັດຊຸດຝຶກອົບຮົມ ການນໍາໃຊ້ໂປຣແກຣມຄຸ້ມຄອງຂໍ້ມູນສະມາຊິກພັກໃຫ້ພະນັກງານຂອງກະຊວງ-ອົງການ ໂດຍການເປັນປະທານຂອງສະຫາຍ ພູຊົງ ພິລາເພັດ ກໍາມະການຄະນະພັກ, ຫົວໜ້າຫ້ອງການ ຄະນະຈັດຕັ້ງສູນກາງພັກ, ມີວິທະຍາກອນຈາກພະແນກເຕັກໂນໂລຊີ-ຂໍ້ມູນຂ່າວສານ ທີ່ຂຶ້ນກັບຫ້ອງການ ຄຈສພ, ມີສໍາມະນາກອນທີ່ມາຈາກກະຊວງປ້ອງກັນຄວາມສະຫງົບ, ກະຊວງພາຍໃນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ສູນກາງແນວລາວສ້າງຊາດ ແລະ ສູນກາງຊາວໜຸ່ມເຂົ້າຮ່ວມ.

ປະທານ ໄກສອນ ພົມວິຫານ
ເວົ້າເຖິງການດັດແປງວິທີເຮັດວຽກ

ວິທີເຮັດວຽກທີ່ວິທະຍາສາດຂອງອົງການນຳ ແລະ ຜູ້ຮັບຜິດຊອບ ເປັນບັນຫາໃຫຍ່ບັນຫາໜຶ່ງ ທີ່ມີຄວາມສຳຄັນຕັດສິນເຖິງຄຸນນະພາບ ແລະ ປະສິດທິຜົນຂອງວຽກງານ, ເຖິງຄວາມສາມັກຄີເປັນເອກະພາບພາຍໃນ ແລະ ເຊີດຊູລະດັບຂອງຖັນແຖວພະນັກງານ, ສະມາຊິກພັກໃຫ້ສູງຂຶ້ນ.

ວິທີເຮັດວຽກທີ່ຖືກຕ້ອງ ແມ່ນຕ້ອງເອົານ້ຳໃຈຟົດຟື້ນປະຕິວັດ ຕິດພັນກັບການກະທຳທີ່ມີການຈັດຕັ້ງ, ມີລະບຽບວິໄນຢູ່ສະເໝີ, ແມ່ນເຮັດຖືກກັບແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ. ຈະແມ່ນເຮັດວຽກອັນໃດກໍ່ຕາມ ກໍ່ຕ້ອງມີການຄົ້ນຄວ້າ, ຄິດໄລ່ຢ່າງຮອບດ້ານ ເຮັດແນວໃດມັນຈຶ່ງຈະບັນລຸຄຸນນະພາບສູງ, ທັງປະຢັດແຮງຄົນ, ແຮງຊັບ ແລະ ລວມທັງປະຢັດເວລາໄດ້ຫຼາຍ.

ໃນສະເພາະໜ້ານີ້, ພວກເຮົາຕ້ອງເດັດດ່ຽວເຮັດໃຫ້ການດຳເນີນຊີວິດພາຍໃນເຂົ້າລະບຽບແບບແຜນ. ຕ້ອງດັດແປງເນື້ອໃນຂອງການດຳເນີນຊີວິດ, ຍົກສູງຄຸນນະພາບ ເຮັດແນວໃດໃຫ້ການດຳເນີນຊີວິດໃນແຕ່ລະເທື່ອລ້ວນແຕ່ສາມາດຮັບປະກັນການອອກມະຕິຕົກລົງທີ່ຖືກຕ້ອງ, ຢາກເຮັດໄດ້ ແນວນັ້ນ, ກ່ອນຈະອອກມະຕິຕົກລົງກ່ຽວກັບບັນຫາໃດໜຶ່ງ ແມ່ນຕ້ອງມີການສືບສວນ, ຄົ້ນຄວ້າ, ກຳຂ່າວຄາວສະພາບການຕົວຈິງໃຫ້ພຽງພໍ, ສ້າງແຜນຮ່າງ ແລະ ເລືອກເຟັ້ນເອົາແຜນຮ່າງທີ່ດີກວ່າໝູ່. ແຕ່ວ່າການອອກມະຕິຕົກລົງແລ້ວໆມັນຫາກໍ່ເປັນພຽງການວາງພື້ນຖານໃຫ້ແກ່ທິດທາງກະທຳ, ບັນຫາສຳຄັນແມ່ນຕ້ອງຈັດຕັ້ງປະຕິບັດ, ເຮັດໃຫ້ແຜນນະໂຍບາຍ, ມະຕິຕົກລົງປະກົດຜົນເປັນຈິງ. ຕ້ອງມີການແບ່ງງານຢ່າງຈະແຈ້ງວ່າອົງການໃດຮັບຜິດຊອບປະຕິບັດ, ຜູ້ໃດຮັບຜິດຊອບການກວດກາ ແລະ ວາງກຳນົດເວລາເຮັດສຳເລັດໃຫ້ຈະແຈ້ງ.

ຕ້ອງຕ້ານແບບແຜນວິທີເຮັດວຽກ ແບບຕຳອັນໃດເຮັດອັນນັ້ນ, ຕ້ອງຕ້ານແບບແຜນອູ້ມວຽກອູ້ມງານອ້າຍດຽວ, ບໍ່ມີການແບ່ງງານຢ່າງຈະແຈ້ງ. ຕ້ອງຫຼີກເວັ້ນທີ່ສຸດປະກົດການເຮັດໃຫ້ຄະນະປະຈຳ ຫຼື ເລຂາຄະນະພັກກາຍເປັນຂັ້ນເທິງຂອງຄະນະພັກ, ຫຼີກເວັ້ນການເຮັດວຽກແບບເອກະຊົນ, ລວບສິດ, ເຈົ້າໂຄດ, ຜະເດັດການອ້າຍດຽວ, ແຕ່ກໍ່ຕ້ອງຫຼີກເວັ້ນການເອື່ອຍອີງໃສ່ແຕ່ໝູ່ຄະນະ, ຢ້ານຄວາມຮັບຜິດຊອບ ແລະ ບໍ່ກ້າຕັດສິນວຽກງານໃນຂອບເຂດຮັບຜິດຊອບຂອງຕົນ.

(ຄັດຈາກປຶ້ມລາຍງານການເມືອງລະອຽດຂອງຄະນະບໍລິຫານງານສູນກາງພັກຕໍ່ກອງ
ປະຊຸມໃຫຍ່ຄັ້ງທີ III ຂອງພັກ, ປີ 1982 ໜ້າ 278-279)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະເລຂາທິການສູນກາງພັກ ເລກທີ 411/ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 08 ສິງຫາ 2023

ຄຳສັ່ງ

ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ເຖິງ: - ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຂວງ-ນະຄອນຫຼວງວຽງຈັນ;

- ຄະນະບໍລິຫານງານພັກ, ຄະນະປະຈຳພັກ ກະຊວງ-ອົງການ.

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI;

- ອີງຕາມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI;

- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄະນະເລຂາທິການສູນກາງພັກ ຄັ້ງວັນທີ 31 ກໍລະກົດ 2023.

ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ:

I. ຈຸດປະສົງລະດັບຄາດໝາຍ

1. ເພື່ອເປັນການປັບປຸງພາຍໃນພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນການກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ, ຖືກຕ້ອງຕາມກົດລະບຽບພັກ, ເພີ່ມທະວີຄວາມສາມັກຄີ, ຍົກສູງຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບຂອງການຈັດຕັ້ງພັກ; ເສີມຂະຫຍາຍປະຊາທິປະໄຕ, ເຊີດຊູສະຕິປັນຍາ, ຄວາມຮັບຜິດຊອບ ຂອງຄະນະພັກ ແຕ່ລະຂັ້ນ ແລະ ບັນດາອົງການຈັດຕັ້ງ ໃນລະບົບການເມືອງ;

2. ເພື່ອກວດກາ, ຕີລາຄາການຜັນຂະຫຍາຍນຳພາ-ຊີ້ນຳຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກົດລະບຽບພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ IX; ຕິດພັນກັບການປະຕິບັດມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງທ້ອງຖິ່ນ, ຂະແໜງການ. ພ້ອມນັ້ນ, ກຳນົດທິດທາງ, ຄາດໝາຍສູ້ຊົນແຕ່ລະດ້ານ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຕໍ່ໜ້າ ຂອງຄະນະພັກ ຂັ້ນຕົນ ໃຫ້ສອດຄ່ອງກັບຄວາມເປັນຈິງ, ພາວະວິໄສ, ຮອບດ້ານ ແລະ ສາມາດຈັດຕັ້ງປະຕິບັດໄດ້;

3. ເພື່ອຄັດເລືອກບຸກຄະລາກອນ ທີ່ມີມາດຕະຖານ, ເງື່ອນໄຂຕາມທີ່ກຳນົດໄວ້ ປະກອບເຂົ້າໃນການຈັດຕັ້ງແຕ່ລະຂັ້ນ ໃນລະບົບການເມືອງ, ເພື່ອບຸກທະລຸການສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານ ຂອງຂະແໜງການ, ທ້ອງຖິ່ນ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່

ການເມືອງ ໃນໄລຍະໃໝ່ ແລະ ເພື່ອສ້າງຄວາມເຊື່ອໝັ້ນ, ສັດທາຂອງມະຫາຊົນ ຕໍ່ການນໍາພາຂອງຄະນະພັກ ແຕ່ລະຂັ້ນ;

4. ເພື່ອຍູ້ແຮງການເຄື່ອນໄຫວວຽກງານຮອບດ້ານ ໃນທົ່ວອົງຄະນະພັກ, ປຸກລະດົມສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ພັດທະນາທ້ອງຖິ່ນ ແລະ ຂະແໜງການຕົນ ໃຫ້ກາຍເປັນຂະບວນການກວ້າງຂວາງ, ຟົດຟື້ນ, ຕໍ່ເນື່ອງ; ຜ່ານຂະບວນການດັ່ງກ່າວ ສ້າງໄດ້ກົມກອງ, ບຸກຄົນ ທີ່ດີເດັ່ນ ໃນທຸກຂົງເຂດວຽກງານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ.

II. ການກະກຽມໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ

1. ດ້ານຂະບວນການ

ເພື່ອຮັບປະກັນຊຸກຍູ້ຂະບວນການວຽກງານຮອບດ້ານ ແລະ ສ້າງເງື່ອນໄຂ ໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ອົງຄະນະພັກ ຂັ້ນຂອງຕົນ, ຄະນະພັກ ແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຊຸກຍູ້ ແລະ ນໍາພາບັນດາວຽກງານດັ່ງນີ້:

- ຍູ້ແຮງວຽກງານສຶກສາອົບຮົມການເມືອງ-ແນວຄິດ ດ້ວຍຫຼາຍຮູບການ, ຫຼາຍວິທີ, ແທດເໝາະກັບແຕ່ລະເປົ້າໝາຍ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ວຽກງານການເມືອງ-ແນວຄິດ ເຂົ້າສູ່ຄຸນນະພາບໃໝ່;
- ເອົາໃຈໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຮັບປະກັນເຮັດໃຫ້ທຸກທ້ອງຖິ່ນ, ຂະແໜງການມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນເພື່ອສ້າງເງື່ອນໄຂ ໃຫ້ການພັດທະນາເສດຖະກິດ-ສັງຄົມ;
- ເອົາໃຈໃສ່ການກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນດ້ານຄຸນນະພາບ, ສ້າງໄດ້ສະມາຊິກພັກ ທີ່ດີເດັ່ນ ແລະ ເປັນແບບຢ່າງນໍາໜ້າໃຫ້ແກ່ມະຫາຊົນ;
- ເອົາໃຈໃສ່ບໍາລຸງ-ກໍ່ສ້າງພະນັກງານ ທາງດ້ານທິດສະດີ ຕິດພັນກັບພຶດຕິກໍາຕົວຈິງ, ຫັນພະນັກງານໜຸ່ມແໜ້ນ ລົງກໍ່ສ້າງຮາກຖານ ເພື່ອຮັບປະກັນເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮູ້, ຄວາມສາມາດ, ມີຄຸນທາດການເມືອງໜັກແໜ້ນ ແລະ ສ້າງໄດ້ພະນັກງານ ທີ່ມີມາດຕະຖານ, ເງື່ອນໄຂ ເພື່ອສືບທອດປ່ຽນແທນຢູ່ຄະນະພັກ ແຕ່ລະຂັ້ນ;
- ຊຸກຍູ້ການປະຕິບັດວຽກງານຮອບດ້ານ ຂອງທ້ອງຖິ່ນ ແລະ ຂະແໜງການ, ຍູ້ແຮງຂະບວນການແຂ່ງຂັນ **"ຮັກຊາດ ແລະ ພັດທະນາ"** ຕິດພັນກັບວຽກງານ 3 ສ້າງ, ການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດ ແລະ ປະຕິບັດບັນດາຄໍາຂວັນ, ຂໍ້ແຂ່ງຂັນຂອງແຕ່ລະອົງການ ໃຫ້ກາຍເປັນຮູບປະທໍາ;
- ເອົາໃຈໃສ່ປັບປຸງກົນໄກບໍລິຫານລັດ ເພື່ອເອື້ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນ, ເອົາໃຈໃສ່ກົນໄກການປະສານງານ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ, ສາມາດກວດສອບໄດ້ ແລະ ຫັນເປັນມືອາຊີບ ເທື່ອລະກ້າວ;
- ຍູ້ແຮງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂະແໜງການ ໂດຍສະເພາະແມ່ນບັນດາຄາດໝາຍ ທີ່ໄດ້ກໍານົດໃນແຜນພັດທະນາເສດຖະກິດ-ສັງຄົມ ທີ່ປະຕິບັດຍັງບໍ່ທັນສໍາເລັດ

ຕາມມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຮັບຮອງ;

- ເອົາໃຈໃສ່ຊຸກຍູ້ການສ້າງເສດຖະກິດຄອບຄົວ, ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ; ຍູ້ແຮງຂະບວນການ ການຜະລິດເປັນສິນຄ້າເພື່ອທົດແທນການນຳເຂົ້າ, ສ້າງການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມ ໄປສູ່ຄຸນນະພາບໃໝ່ ຢ່າງແຂງແຮງ;

- ສ້າງຂະບວນການແຂ່ງຂັນສິລະປະວັນນະຄະດີ, ກິລາ ແບບມວນຊົນ ໃຫ້ມີບັນຍາກາດຟົດຟື້ນ, ມ່ວນຊື່ນ ໃຫ້ກາຍເປັນຂະບວນການຂອງມະຫາຊົນ ຢ່າງກວ້າງຂວາງ, ໄປຄຽງຄູ່ກັບການອອກແຮງງານ, ອະນາໄມ ແລະ ປະດັບປະດາສະຖານທີ່ໃຫ້ມີຄວາມສະອາດ, ຈົບງາມ ບົນພື້ນຖານປະຕິບັດຕາມນະໂຍບາຍປະຢັດ.

2. ການກະກຽມດ້ານເນື້ອໃນ

2.1. ການກະກຽມລາຍງານການເມືອງ

ລາຍງານການເມືອງ ຕ້ອງສ່ອງແສງໃຫ້ເຫັນສະພາບຕົວຈິງ, ເງື່ອນໄຂ, ຈຸດພິເສດ ແລະ ໜ້າທີ່ການເມືອງຂອງອົງຄະນະພັກ ຂັ້ນຕົນ; ຕ້ານທັດສະນະລອກແບບ ແລະ ຈົດກ່າຍຈາກພາກສ່ວນອື່ນ. ໂຄງປະກອບຂອງລາຍງານການເມືອງ ແບ່ງອອກເປັນ 02 ພາກຄື:

ພາກທີ I : ຕີລາຄາຮອບດ້ານ ຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຄະນະພັກຂັ້ນຕົນໃນ 5 ປີຜ່ານມາ ຍົກໃຫ້ເຫັນຜົນງານທີ່ພົ້ນເດັ່ນ, ຈຸດອ່ອນຂໍ້ຄົງຄ້າງ, ສາເຫດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມ; ການຕີລາຄາ ຕ້ອງໃຫ້ເລິກເຊິ່ງ, ພາວະວິໄສ, ກົງໄປກົງມາ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ;

ພາກທີ II : ກຳນົດທິດທາງ, ໜ້າທີ່, ນະໂຍບາຍ, ກົນໄກ ແລະ ບັນດາຄາດໝາຍໃຫຍ່ ທີ່ຈະຕ້ອງສູ້ຊົນນຳພາຈັດຕັ້ງປະຕິບັດໃນຕໍ່ໜ້າ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ໃນແຕ່ລະໄລຍະ, ວິໄສທັດ, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ ແລະ ສະພາບຄວາມເປັນຈິງ ກໍຄືທ່າແຮງບົ່ມຊ້ອນຂອງທ້ອງຖິ່ນ ແລະ ຂະແໜງການ.

2.2. ການກະກຽມແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ

ໂຄງປະກອບຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການປະກອບດ້ວຍ 02 ພາກຄື:

ພາກທີ I : ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ ໃນໄລຍະ 5 ປີ ຜ່ານມາ;

ພາກທີ II : ກຳນົດທິດທາງ, ໜ້າທີ່, ມາດຕະການ, ນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ 5 ປີ ຕໍ່ໜ້າ ໃຫ້ສອດຄ່ອງກັບວິໄສທັດ, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ, ສອດຄ່ອງກັບຄວາມສາມາດ ແລະ ທ່າແຮງບົ່ມຊ້ອນ ຂອງທ້ອງຖິ່ນ ແລະ ຂະແໜງການ; ກຳນົດທິດທາງໃນການແກ້ໄຂບັນຫາທາງດ້ານເສດຖະກິດ, ບັນຫາດ້ານການເງິນ-ເງິນຕາຕ່າງໆ ທີ່ເປັນສິ່ງກີດໜ່ວງຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ

ແລະ ຂະແໜງການ.

3. ການກະກຽມດ້ານບຸກຄະລາກອນ

3.1. ກະກຽມບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

ບົດສໍາຫຼວດການນໍາພາລວມຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃຫ້ເອົາໃຈໃສ່ຕີລາຄາການນໍາພາຮອບດ້ານ ເປັນຕົ້ນ: ການນໍາພາດ້ານການເມືອງ; ດ້ານແນວຄິດ; ດ້ານການຈັດຕັ້ງ; ແບບແຜນນໍາພາ, ວິທີເຮັດວຽກ ແລະ ການປະຕິບັດພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ທີ່ໄດ້ຮັບການມອບໝາຍຂອງຄະນະບໍລິຫານງານພັກຕົນ ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ, ບົດຮຽນທີ່ຖອດຖອນໄດ້ ໃນການນໍາພາ-ຊີ້ນໍາວຽກງານຮອບດ້ານຂອງຄະນະພັກ ໄລຍະ 5 ປີ ຜ່ານມາ; ພ້ອມທັງ ກໍານົດມາດຕະການ ແລະ ວິທີການແກ້ໄຂໃນຊຸມປີຕໍ່ໜ້າ **(ລະອຽດ ຈະມີຄໍາແນະນໍາສະເພາະ ຂອງຄະນະກວດກາສູນກາງພັກ).**

3.2. ການດໍາເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

- ການດໍາເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນບັ້ນດໍາເນີນຊີວິດການເມືອງ ເພື່ອຕີລາຄາການນໍາພາລວມ, ສໍາຫຼວດກວດກາ, ຕີລາຄາຄວາມຮັບຜິດຊອບຂອງບຸກຄົນຄະນະພັກ ຕະຫຼອດສະໄໝຜ່ານມາ. ສະນັ້ນ, ເພື່ອຮັບປະກັນໃຫ້ການດໍາເນີນຊີວິດການເມືອງ ມີຄຸນນະພາບ, ຖືກຕ້ອງຕາມຕົວຈິງ ກ່ອນອື່ນໝົດບັນດາສະຫາຍຄະນະພັກ ຕ້ອງຍົກສູງຄວາມຮັບຜິດຊອບ ຕີລາຄາການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນເອງ ຢ່າງພາວະວິໄສ, ໄປຄຽງຄູ່ກັບການຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ ຢ່າງຈິງໃຈ; ພ້ອມກັນນີ້ ກໍເອົາໃຈໃສ່ກວດກາຕີລາຄາກ່ຽວກັບການແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງຈາກຄໍາຕໍານິສິ່ງຂ່າວຕ່າງໆ ຂອງການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານ ຕໍ່ການນໍາພາລວມຂອງຄະນະພັກ ແລະ ຕໍ່ແຕ່ລະສະຫາຍໃນຄະນະພັກ ໃນໄລຍະຜ່ານມາ;
- ກ່ອນການດໍາເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະພັກ, ບັນດາສະຫາຍກໍາມະການຄະນະພັກຕ້ອງໄດ້ດໍາເນີນຊີວິດການເມືອງ ສໍາຫຼວດກວດກາ ຢູ່ໜ່ວຍພັກ ບ່ອນຕົນຮ່ວມຊີວິດພັກ ເພື່ອໃຫ້ສະມາຊິກພັກ ແລະ ຄະນະພັກ ປະກອບຄໍາເຫັນຕໍ່ຕົນເອງ.

3.3. ການດໍາເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ

ກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ ແມ່ນເພື່ອພິຈາລະນາຕົກລົງບັນດາວຽກ ດັ່ງນີ້:

- ຮ່າງລາຍງານການເມືອງຂອງຄະນະພັກ;
- ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຫຼື ແຜນພັດທະນາຂະແໜງການ,
- ຮ່າງບົດສໍາຫຼວດການນໍາພາລວມຂອງຄະນະບໍລິຫານງານພັກ;
- ແຜນຄາດຄະເນຈໍານວນບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກ ຊຸດໃໝ່,
- ຮ່າງລາຍງານຄວາມພ້ອມດ້ານຕ່າງໆ ໃນການກະກຽມດໍາເນີນກອງປະຊຸມໃຫຍ່ ຂັ້ນຕົນ;

ພາຍຫຼັງສໍາເລັດກອງປະຊຸມດັ່ງກ່າວ ແມ່ນໃຫ້ລາຍງານຄວາມພ້ອມດ້ານຕ່າງໆ ແລະ ໜັງສືສະເໜີຂໍອະນຸມັດດໍາເນີນກອງປະຊຸມໃຫຍ່ ຕໍ່ຄະນະພັກ ຂັ້ນເທິງ ເພື່ອໃຫ້ຄະນະພັກຂັ້ນເທິງ ພິຈາລະນາຕົກລົງ.

3.4. ການເລືອກເຟັ້ນບຸກຄະລາກອນ

3.4.1. ທັດສະນະ ແລະ ບັນຫາທີ່ຕ້ອງເອົາໃຈໃສ່ໃນການເລືອກເຟັ້ນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ.

- ຕ້ອງຮັບປະກັນ ໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ, ນິຕິກຳຂອງພັກ ທີ່ກ່ຽວຂ້ອງ; ໃຫ້ເອົາໃຈໃສ່ປະຫວັດຕົ້ນກຳເນີດ ແລະ ການເຄື່ອນໄຫວພົວພັນໃນສັງຄົມ;

- ໃຫ້ເອົາໃຈໃສ່ໂຄງປະກອບເພດ, ເຜົ່າ ມີຈຳນວນເພີ່ມຂຶ້ນ ຕາມຈຸດພິເສດສະເພາະ ຂອງຄະນະພັກແຕ່ລະຂັ້ນ; ຮັບປະກັນ 3 ຮຸ່ນ (ອາວຸໂສ, ກາງ, ໜຸ່ມ), ມີທັງຜູ້ເກົ່າ, ຜູ້ໃໝ່ ໃນອັດຕາສ່ວນ ທີ່ເໝາະສົມ; ໃນນັ້ນ, ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ, ສ້າງໄດ້ພະນັກງານສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ, ຍາວນານ ຕາມທິດທັນເປັນໜຸ່ມ ແຕ່ຕ້ອງຮັບປະກັນຄວາມໜັກແໜ້ນທາງດ້ານການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ ແລະ ສົມຄູ່ກັບໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ;

- ຕ້ອງຄົ້ນຄວ້າເລືອກເຟັ້ນບຸກຄົນ ທີ່ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ເປັນຜູ້ມີອະນາຄົດ, ແຕ່ເພື່ອຮັບປະກັນໃຫ້ມີບຸກຄະລາກອນດັ່ງກ່າວ ຄະນະພັກ ຕ້ອງເອົາໃຈໃສ່ຄັດເລືອກພະນັກງານ, ສະມາຊິກພັກ ຈາກແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເພື່ອຫັນລົງກໍ່ສ້າງຮາກຖານ ຕິດພັນກັບວຽກງານຕົວຈິງຢູ່ຮາກຖານ, ມີການມອບໝາຍວຽກ ໃຫ້ເຮັດທີ່ຈະແຈ້ງ ແລະ ມີການຕິດຕາມກວດກາປົກກະຕິຈາກການຈັດຕັ້ງ; ພ້ອມນັ້ນ ກໍ່ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ໄປບຳລຸງຍົກລະດັບທາງດ້ານທິດສະດີການເມືອງ ຫຼື ດ້ານວິຊາສະເພາະ;

- ໃຫ້ເລືອກເຟັ້ນຈາກຄະນະພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນ, ຮັບປະກັນມາດຕະຖານ, ເງື່ອນໄຂ ທີ່ກຳນົດໄວ້, ແຕ່ບໍ່ຄວນຄັດເລືອກເອົາແຕ່ຄົນທ້ອງຖິ່ນ; ສຳລັບຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບຂອງຄະນະບໍລິຫານງານພັກເມືອງ-ນະຄອນ ຊຸດໃໝ່, ນອກຈາກບັນດາເປົ້າໝາຍ ທີ່ຄັດເລືອກໄດ້ຈາກຮາກຖານພັກສຳນັກງານ-ອົງການແລ້ວ, ຍັງຈະເອົາໃຈໃສ່ເລືອກເຟັ້ນເອົາຄະນະພັກຮາກຖານ ແລະ ຄະນະໜ່ວຍພັກບ້ານ ເພື່ອອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່ ຕາມອັດຕາສ່ວນທີ່ເໝາະສົມ;

- ຕ້ອງປະຕິບັດຖືກຕ້ອງຕາມຫຼັກການ, ຂັ້ນຕອນ ຢ່າງເຂັ້ມງວດ, ພາວະວິໄສ, ເສີມຂະຫຍາຍປະຊາທິປະໄຕຂອງພະນັກງານ-ສະມາຊິກພັກ, ສະຕິປັນຍາລວມຂອງໝູ່ຄະນະ ໂດຍຜ່ານການຄົ້ນຄວ້າ ແລະ ຕົກລົງເປັນເອກະພາບຂອງຄະນະປະຈຳພັກ ຫຼື ຄະນະບໍລິຫານງານພັກ (ບ່ອນທີ່ບໍ່ມີຄະນະປະຈຳພັກ);

- ຜູ້ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່ ແຕ່ລະຂັ້ນ ຕ້ອງໄດ້ຜ່ານການທາບທາມຄຳເຫັນສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ ດັ່ງນີ້:

+ ອົງຄະນະພັກ ທີ່ດຳເນີນກອງປະຊຸມໃຫຍ່ຜູ້ແທນ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ **3 ຮອບ;**

+ ອົງຄະນະພັກ ແລະ ຮາກຖານພັກ ທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ **2 ຮອບ;**

(ລະອຽດ ແມ່ນຈະມີຄໍາແນະນໍາສະເພາະ).

3.4.2. ມາດຕະຖານ

ມາດຕະຖານຄະນະບໍລິຫານງານພັກ, ຄະນະປະຈໍາພັກ, ເລຂາ, ຮອງເລຂາ, ປະທານ, ຮອງປະທານຄະນະກວດກາພັກ ແຕ່ລະຂັ້ນ ແມ່ນໃຫ້ປະຕິບັດຕາມມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງຄະນະບໍຫານງານພັກ ທີ່ໄດ້ກໍານົດໄວ້ໃນກົດລະບຽບພັກ ສະໄໝທີ XI ມາດຕາ 12 ຂໍ້ 2; ມະຕິກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານຂອງພະນັກງານນໍາພາ-ຄຸ້ມຄອງ ມາດຕາ 3, 5, 7, 10, 12;

ສໍາລັບມາດຕະຖານຂອງຄະນະກວດກາພັກ ແຕ່ລະຂັ້ນ ນອກຈາກທີ່ໄດ້ກໍານົດຢູ່ໃນມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030 ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022 (ສະບັບປັບປຸງ ປີ 2022) ມາດຕາ 65 ແລະ 66; ຄໍາແນະນໍາ ຂອງຄະນະກວດກາສູນກາງພັກ ສະບັບເລກທີ 192/ຄກສພ, ລົງວັນທີ 26 ມິຖຸນາ 2017 ກ່ຽວກັບການປັບປຸງການຈັດຕັ້ງຄະນະກວດກາພັກ, ອົງການກວດກາລັດກະຊວງ-ອົງການ ແລະ ທ້ອງຖິ່ນ (ສະບັບປັບປຸງ) ແລະ ບົນພື້ນຖານການຕົກລົງເຫັນດີ ຈາກຄະນະພັກຂັ້ນເທິງ.

3.4.3. ເປົ້າໝາຍ, ເງື່ອນໄຂດ້ານອາຍຸພັກ ແລະ ອາຍຸກະສຽນ

❖ **ເປົ້າໝາຍ**

ເປົ້າໝາຍທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນໃຫ້ຄົ້ນຄວ້າເລືອກເຟັ້ນຈາກຄະນະບໍລິຫານງານພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ ແລະເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນໃນການປະຕິບັດໜ້າທີ່ວຽກງານ, ຮັບປະກັນມາດຕະຖານ, ເງື່ອນໄຂ ທີ່ກໍານົດໄວ້; ເຊິ່ງແຕ່ລະເປົ້າໝາຍແມ່ນມີຕໍາແໜ່ງພັກ ຫຼື ຕໍາແໜ່ງບໍລິຫານລັດ ຖັດລົງມາ 1-2 ຂັ້ນ.

❖ **ເງື່ອນໄຂດ້ານອາຍຸພັກ ແລະ ອາຍຸກະສຽນ:**

- ອາຍຸພັກສົມບູນ: ຜູ້ທີ່ຈະເອົາເຂົ້າສະໝັກຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ, ກະຊວງ-ອົງການຕ້ອງມີອາຍຸພັກ 7 ປີ ຂຶ້ນໄປ; ຜູ້ທີ່ຈະເອົາເຂົ້າສະໝັກຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າຕ້ອງມີອາຍຸພັກສົມບູນ 5 ປີ ຂຶ້ນໄປ ແລະ ຜູ້ທີ່ຈະເອົາເຂົ້າສະໝັກຄະນະພັກຮາກຖານ, ຄະນະໜ່ວຍພັກຕ້ອງມີອາຍຸພັກສົມບູນ 3 ປີ ຂຶ້ນໄປ;

- ເພື່ອຮັບປະກັນລັກສະນະສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ, ຍາວນານ ແລະ ຫັນເປັນໜຸ່ມເທື່ອລະກ້າວ ຈຶ່ງໄດ້ກໍານົດເງື່ອນໄຂດ້ານອາຍຸກະສຽນຂອງຜູ້ຈະອອກສະໝັກເຂົ້າໃນຄະນະພັກແຕ່ລະຂັ້ນ ດັ່ງນີ້:

1). ແຂວງ-ນະຄອນຫຼວງວຽງຈັນ, ກະຊວງ-ອົງການ

- ຄະນະບໍລິຫານງານພັກ ຊຸດເກົ່າ:

+ ເລຂາຄະນະພັກ ທີ່ເປັນກໍາມະການສູນກາງພັກ:	ອາຍຸບໍ່ເກີນ 64 ປີ, 6 ເດືອນ;
+ ເລຂາຄະນະພັກ ທີ່ບໍ່ແມ່ນກໍາມະການສູນກາງພັກ:	ອາຍຸບໍ່ເກີນ 59 ປີ, 6 ເດືອນ;
+ ຄະນະປະຈໍາພັກ ຈະສືບຕໍ່ສະໝັກ:	ອາຍຸບໍ່ເກີນ 59 ປີ;

+ ກຳມະການຄະນະພັກ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 58 ປີ;

- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ.

2). ເມືອງ-ນະຄອນ ແລະ ທຽບເທົ່າ

- ຄະນະບໍລິຫານງານພັກ ຊຸດເກົ່າ:

+ ເລຂາຄະນະພັກ ທີ່ເປັນກຳມະການພັກແຂວງ-ນະຄອນຫຼວງວຽງຈັນ: ອາຍຸບໍ່ເກີນ 57 ປີ, 6 ເດືອນ;

+ ກຳມະການປະຈຳພັກ, ກຳມະການຄະນະພັກ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 57 ປີ;

- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ.

3). ຮາກຖານພັກອ້ອມຂ້າງກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ, ເມືອງ-ນະຄອນ ແລະ ທຽບເທົ່າ

- ຄະນະບໍລິຫານງານພັກ ຊຸດເກົ່າ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 57 ປີ;

- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ;

ກໍລະນີຜູ້ຈະອອກສະໝັກຮັບເລືອກຕັ້ງ ເຂົ້າໃນໂຄງປະກອບຄະນະບໍລິຫານງານພັກ ທີ່ກ່າວມາຂ້າງເທິງນັ້ນ ຫາກມີອາຍຸກະສຽນເກີນ ຕາມທີ່ກຳນົດໄວ້, ແຕ່ມີຄວາມຈຳເປັນ ແມ່ນນຳສະເໜີຕໍ່ຄະນະພັກຂັ້ນເທິງ ຖັດຕົນ ເປັນຜູ້ພິຈາລະນາຕົກລົງ.

4). ຮາກຖານພັກບ້ານ

ເລຂາຮາກຖານພັກບ້ານ ດ້ານອາຍຸກະສຽນ ແມ່ນບໍ່ໄດ້ກຳນົດ, ແຕ່ຕ້ອງຮັບປະກັນມາດຕະຖານດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີບົດບາດ ແລະ ໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກສະມາຊິກພັກ, ມະຫາຊົນ ແລະ ມີສຸຂະພາບດີ; ພ້ອມນັ້ນ, ຄະນະພັກ ແຕ່ລະຂັ້ນ ຕ້ອງເອົາໃຈໃສ່ສ້າງພະນັກງານສືບທອດປ່ຽນແທນ ຂັ້ນບ້ານ ໃຫ້ທັນເປັນໜຸ່ມ ເທື່ອລະກ້າວ.

3.5. ການກຳນົດຈຳນວນຄະນະບໍລິຫານງານພັກ ແຕ່ລະຂັ້ນ

1). ການກຳນົດຈຳນວນຄະນະບໍລິຫານງານພັກ

ຈຳນວນຄະນະບໍລິຫານງານພັກ ຂັ້ນໃດ ແມ່ນກອງປະຊຸມຄົບຄະນະບໍລິຫານງານພັກ ຂັ້ນນັ້ນ ເປັນຜູ້ຄົ້ນຄວ້າ ບົນພື້ນຖານໂຄງປະກອບກົງຈັກການຈັດຕັ້ງ, ຈຳນວນສະມາຊິກພັກ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ອີງຕາມສະພາບຄວາມເປັນຈິງ ຂອງຖັນແຖວພະນັກງານ, ສະມາຊິກພັກ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຂັ້ນຕົນ, ເພື່ອນຳສະເໜີຄະນະພັກ ຂັ້ນເທິງ ຖັດຕົນພິຈາລະນາຕົກລົງ;

ເພື່ອເປັນບ່ອນອີງ ໃຫ້ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຈຶ່ງໄດ້ກຳນົດຂອບເຂດດ້ານຈຳນວນລະອຽດດັ່ງນີ້:

- ຄະນະບໍລິຫານງານພັກ ແຂວງ, ນະຄອນຫຼວງວຽງຈັນ ປະກອບແຕ່ 27 - 41 ສະຫາຍ;

- ຄະນະບໍລິຫານງານພັກກະຊວງ-ອົງການ ປະກອບແຕ່ 07 - 27 ສະຫາຍ;

- ຄະນະບໍລິຫານງານພັກ ກະຊວງປ້ອງກັນປະເທດ ປະກອບແຕ່ 27 - 35 ສະຫາຍ ແລະ ກະຊວງປ້ອງກັນຄວາມສະຫງົບ ປະກອບແຕ່ 25 - 29 ສະຫາຍ;

- ຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ປະກອບແຕ່ 19 - 27 ສະຫາຍ;

- ຄະນະພັກຮາກຖານ ປະກອບແຕ່ 05 - 09 ສະຫາຍ; ຄະນະໜ່ວຍພັກ ປະກອບແຕ່ 03 - 05 ສະຫາຍ;

- ສຳລັບໜ່ວຍພັກ ທີ່ມີສະມາຊິກພັກສົມບູນ ບໍ່ເຖິງ 09 ສະຫາຍ ໃຫ້ປະກອບແຕ່ເລຂາ, ຮອງເລຂາໜ່ວຍພັກ.

2). ການກຳນົດຈຳນວນຄະນະປະຈຳພັກ

ຄະນະບໍລິຫານງານພັກໃດ ທີ່ມີຈຳນວນກຳມະການຄະນະພັກ ແຕ່ 09 ສະຫາຍ ຂຶ້ນໄປ ຈຶ່ງໃຫ້ມີຄະນະປະຈຳພັກ, ແຕ່ຈຳນວນຄະນະປະຈຳພັກ ບໍ່ໃຫ້ເກີນ 1/3 ຂອງຈຳນວນຄະນະບໍລິຫານງານພັກ ຂັ້ນນັ້ນ.

3.6. ການເລືອກຕັ້ງ

- ຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ;

- ຄະນະປະຈຳພັກ ແມ່ນກອງປະຊຸມຄົ້ງປະຖົມມະລຶກຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ;

- ເລຂາ ແລະ ຮອງເລຂາຄະນະພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການລົງປະຊາມະຕິຮັບຮອງເອົາ ແລະ ຕ້ອງແມ່ນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນ, ໄວ້ວາງໃຈ ຈາກຄະນະບໍລິຫານງານພັກ ຂັ້ນນັ້ນ;

- ປະທານ ແລະ ຮອງປະທານຄະນະກວດກາພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ.

3.7. ການກະກຽມຜູ້ແທນສົມບູນ ແລະ ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ

1). ມາດຕະຖານ ຂອງຜູ້ແທນສົມບູນ ແລະ ສຳຮອງ

- ດ້ານຄຸນທາດການເມືອງ: ຕ້ອງແມ່ນຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮັບຜິດຊອບການເມືອງສູງ, ເປັນຜູ້ທີ່ດີເດັ່ນ, ເປັນແບບຢ່າງນຳໜ້າ ໃນການປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບຜິດຊອບ; ເປັນຜູ້ທີ່ມີບົດບາດ, ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈ ຈາກຖັນແຖວສະມາຊິກພັກ-ພະນັກງານ, ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນ, ມີຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການໃນການຄົ້ນຄວ້າພິຈາລະນາບັນຫາຕ່າງໆ ຂອງກອງປະຊຸມ;

- ດ້ານຄວາມຮູ້-ຄວາມສາມາດ: ແມ່ນຜູ້ທີ່ມີຄວາມຮູ້ທາງດ້ານທິດສະດີ, ວິທະຍາສາດໃດໜຶ່ງ ທີ່ແນ່ນອນ ແລະ ມີຄວາມສາມາດໃນການຄົ້ນຄວ້າປະກອບຄຳເຫັນ ແລະ ຕົກລົງຕໍ່ບັນຫາຕ່າງໆໃນກອງປະຊຸມໃຫຍ່, ສາມາດກຳແໜ້ນມະຕິກອງປະຊຸມໃຫຍ່ ທີ່ໄດ້ຮັບຮອງ ເພື່ອນຳໄປເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

- ດ້ານສຸຂະພາບ: ຕ້ອງມີສຸຂະພາບແຂງແຮງດີ, ສາມາດເຂົ້າຮ່ວມກອງປະຊຸມໃຫຍ່ ຈົນສຳເລັດ, ພ້ອມນັ້ນກໍຕ້ອງແມ່ນຜູ້ທີ່ສາມາດສືບຕໍ່ປະຕິບັດໜ້າທີ່ວຽກງານ ຕໍ່າສຸດເຄິ່ງສະໄໝ ຫຼື 30 ເດືອນ ຂຶ້ນໄປ.

2). ເງື່ອນໄຂຜູ້ແທນສົມບູນ ແລະ ສໍາຮອງ

- ຜູ້ແທນສົມບູນ ແລະ ສໍາຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຄະນະພັກ ຂັ້ນເທິງ ຕ້ອງໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຂັ້ນຕົນ ເຊິ່ງໄດ້ຮັບຄະແນນສຽງແຕ່ 50% ຂຶ້ນໄປ; ການບົ່ງຕົວແຕ່ງຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ຂອງອົງຄະນະພັກ ຂັ້ນເທິງ ໃຫ້ປະຕິບັດໄດ້ສະເພາະແຕ່ການຈັດຕັ້ງພັກ ທີ່ບໍ່ສາມາດດໍາເນີນກອງປະຊຸມໃຫຍ່ ຂັ້ນຂອງຕົນໄດ້;

- ກໍລະນີຈໍາເປັນ ຄະນະພັກຂັ້ນຮຽກໂຮມກອງປະຊຸມໃຫຍ່ ມີສິດບົ່ງຕົວແຕ່ງຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນຕົນໄດ້, ແຕ່ຕ້ອງລາຍງານໃຫ້ຄະນະພັກຂັ້ນເທິງ ຖັດຕົນ ຮັບຊາບ.

3). ຂໍ້ຫ້າມຂອງຜູ້ແທນສົມບູນ ແລະ ສໍາຮອງ

- ຫ້າມການເຄື່ອນໄຫວທີ່ມີລັກສະນະແຕະຕ້ອງເຖິງລະບຽບການດໍາເນີນກອງປະຊຸມທາບທາມ ແລະ ການດໍາເນີນກອງປະຊຸມໃຫຍ່, ໂດຍສະເພາະຕໍ່ລະບຽບການເລືອກຕັ້ງ;

- ຫ້າມການກະທໍາທີ່ບິດເບືອນແນວທາງ, ນະໂຍບາຍ ແລະ ຄວາມເປັນຈິງກ່ຽວກັບການເລືອກຕັ້ງ;

- ຫ້າມໂຄສະນາ, ເຜີຍແຜ່, ໃຫ້ຂໍ້ມູນ, ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ອອກສະໝັກຮັບເລືອກຕັ້ງ;

- ຫ້າມປັ່ນປ່ວນ, ສ້າງສະຖານະການ ກໍ່ຄວາມບໍ່ສະຫງົບ ໃນເວລາດໍາເນີນການທາບທາມ ແລະ ເລືອກຕັ້ງ;

- ຫ້າມຮັບ ຫຼື ໃຫ້ ສິນບົນ, ຊື້ຈ້າງ, ຈອບອອຍ ແກ່ບຸກຄົນອື່ນ ດ້ວຍຮູບການຕ່າງໆ ທີ່ພົວພັນເຖິງການລົງຄະແນນສຽງຕໍ່ການທາບທາມ ແລະ ການເລືອກຕັ້ງ;

- ຫ້າມຈົດກ່າຍ, ຖ່າຍພາບບັດທາບທາມ ຫຼື ບັດເລືອກຕັ້ງ ເພື່ອສົ່ງໃຫ້ບຸກຄົນອື່ນ ຢູ່ພາຍໃນ ຫຼື ພາຍນອກກອງປະຊຸມ ໃນເວລາທາບທາມ ແລະ ເລືອກຕັ້ງ; ຫ້າມມີອະຄະຕິ ຕໍ່ຜູ້ອອກສະໝັກເລືອກຕັ້ງ ຫຼື ຜູ້ອອກທາບທາມ;

- ຫ້າມສົນທະນາແລກປ່ຽນຄໍາຄິດເຫັນກັບຄົນອື່ນ ໂດຍກົງ ຫຼື ໃຊ້ໂທລະສັບ ຕິດຕໍ່ຫາກັນ;

- ຫ້າມຫຍຸ້ງກ່ຽວ, ບັງຄັບ, ນາບຂູ່, ຊອກຮູ້, ສອບຖາມຜົນຄະແນນຂອງຕົນເອງ ຫຼື ຄະແນນບຸກຄົນໃດໜຶ່ງນໍາຄະນະຮັບຜິດຊອບ;

- ຫ້າມມີພຶດຕິກໍາອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

4). ການກໍານົດຈໍານວນຜູ້ແທນ

ການກໍານົດຈໍານວນຜູ້ແທນສົມບູນ, ສໍາຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ຂັ້ນໃດ ແມ່ນສິດຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເປັນຜູ້ກໍານົດ; ຄະນະປະຈໍາພັກ ເປັນຜູ້ຕົກລົງແບ່ງປັນຈໍານວນຜູ້ແທນໃຫ້ຄະນະພັກ ຂັ້ນລຸ່ມ ເພື່ອດໍາເນີນການປ່ອນບັດເລືອກຕັ້ງຕາມຫຼັກການສະເໝີພາບ, ລົງຄະແນນສຽງໂດຍກົງປິດລັບ; ເຊິ່ງການກໍານົດຈໍານວນຜູ້ແທນ ແມ່ນໃຫ້ອີງໃສ່ຈໍານວນການຈັດຕັ້ງພັກ ທີ່ຂຶ້ນກັບຄະນະພັກ ຂັ້ນຕົນ;

ການເພີ່ມຂຶ້ນ ຂອງຈໍານວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກ ແຕ່ລະຂັ້ນ ບໍ່ໃຫ້ເກີນ 10% ຂອງຈໍານວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ສະໄໝຜ່ານມາ.

5). ການສິ້ນສຸດເປັນຜູ້ແທນສົມບູນ ແລະ ສໍາຮອງ

ເງື່ອນໄຂການສິ້ນສຸດ ເປັນຜູ້ແທນສົມບູນ ແລະ ສໍາຮອງ ມີດັ່ງນີ້:

- ເສຍຊີວິດ;
- ລາອອກຈາກລັດຖະກອນ ແລະ ອອກພັກການຮັບອຸດໜູນບຳນານ;
- ຖືກລົງວິໄນຂັ້ນປົດຕຳແໜ່ງຂຶ້ນໄປ;
- ພວມຖືກດຳເນີນຄະດີ ສະຖານການກະທຳຜິດທາງອາຍາ ຫຼື ຖືກສານຕັດສິນລົງໂທດ;
- ຖືກຍົກຍ້າຍຈາກອົງຄະນະພັກ ທີ່ໄດ້ຮັບການເລືອກຕັ້ງເປັນຜູ້ແທນ ໄປຮັບໜ້າທີ່ໃໝ່ ຢູ່ອົງຄະນະພັກ ອື່ນ;
- ຖືກໄປຮຽນ ຫຼື ໄປປະຕິບັດໜ້າທີ່ຢູ່ບ່ອນອື່ນ 06 ເດືອນ ຂຶ້ນໄປ;
- ກໍລະນີອື່ນໆ ທີ່ລະເມີດຕໍ່ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆ.

6). ແຂກຖືກເຊີນ

ຈຳນວນ ແລະ ເປົ້າໝາຍແຂກຖືກເຊີນ ເຂົ້າຮ່ວມກອງປະຊຸມໃຫຍ່ພັກ ຂັ້ນໃດ ແມ່ນໃຫ້ຄະນະພັກ ຂັ້ນນັ້ນ ເປັນຜູ້ຕົກລົງ ໂດຍອີງໃສ່ເງື່ອນໄຂດ້ານສະຖານທີ່ ແລະ ຄວາມສາມາດດ້ານງົບປະມານ.

III. ກອງປະຊຸມໃຫຍ່ ແລະ ໄລຍະເວລາດຳເນີນກອງປະຊຸມໃຫຍ່ຄະນະພັກ ແຕ່ລະຂັ້ນ

1. ກອງປະຊຸມໃຫຍ່ຜູ້ແທນ ແລະ ກອງປະຊຸມໃຫຍ່ສະມາຊິກພັກ

- ກອງປະຊຸມໃຫຍ່ຜູ້ແທນ: ອົງຄະນະພັກ, ຮາກຖານພັກໃດ ທີ່ມີຈຳນວນສະມາຊິກພັກ ຫຼາຍກວ່າ 200 ສະຫາຍ ຂຶ້ນໄປ ແມ່ນໃຫ້ດຳເນີນກອງປະຊຸມໃຫຍ່ຜູ້ແທນ;

- ກອງປະຊຸມໃຫຍ່ສະມາຊິກພັກ: ອົງຄະນະພັກ, ຮາກຖານພັກໃດ ມີສະມາຊິກພັກ 200 ສະຫາຍ ລົງມາ ແມ່ນໃຫ້ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ;

ກໍລະນີຄວາມຈຳເປັນ ກໍສາມາດດຳເນີນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກ ໄດ້, ແຕ່ຕ້ອງສະເໜີ ແລະ ໄດ້ຮັບຄວາມເຫັນດີຈາກຄະນະພັກ ຂັ້ນເທິງ.

2. ໄລຍະເວລາດຳເນີນກອງປະຊຸມໃຫຍ່

- ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ: ໃຫ້ສຳເລັດກອງປະຊຸມໃຫຍ່ ຂັ້ນຂອງຕົນ ບໍ່ໃຫ້ກາຍ ເດືອນ**ກັນຍາ (9) ປີ 2025;** ສຳລັບອົງຄະນະພັກກະຊວງ-ອົງການ ທີ່ດຳເນີນກອງປະຊຸມໃຫຍ່ ຫຼັງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ກໍໃຫ້ດຳເນີນກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົນ ສຳເລັດຕາມກຳນົດເວລາດັ່ງກ່າວ;

- ອົງຄະນະພັກຈຳນວນໜຶ່ງ ແມ່ນຈະໄດ້ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ຫຼັງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ (ລະອຽດ ຈະມີຄຳແນະນຳສະເພາະ);

- ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກອ້ອມຂ້າງກະຊວງ-ອົງການ: ໃຫ້ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍ **ເດືອນມີນາ (3) ປີ 2025;**

- ຮາກຖານພັກອ້ອມຂ້າງເມືອງ-ນະຄອນ ແລະ ຮາກຖານພັກບ້ານ: ໃຫ້ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍ **ເດືອນກັນຍາ (9) ປີ 2024;**

ຄະນະພັກແຕ່ລະຂັ້ນ ຕ້ອງດຳເນີນກອງປະຊຸມໃຫຍ່ຂັ້ນຕົນ ສຳເລັດກ່ອນກອງປະຊຸມໃຫຍ່ຄະນະພັກຂັ້ນເທິງ ຖັດຕົນ ບໍ່ໃຫ້ເກີນ 06 ເດືອນ.

3. ກຳນົດເວລາດຳເນີນກອງປະຊຸມໃຫຍ່ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

- ກອງປະຊຸມໃຫຍ່ອົງຄະນະພັກ ກະຊວງ-ອົງການ ໃຊ້ເວລາ 01 - 02 ວັນ;
- ກອງປະຊຸມໃຫຍ່ອົງຄະນະພັກ ແຂວງ ແລະ ນະຄອນຫຼວງ ໃຊ້ເວລາ 02 - 03 ວັນ;
- ກອງປະຊຸມໃຫຍ່ອົງຄະນະພັກ ເມືອງ-ນະຄອນ ແລະ ທຽບເທົ່າ ໃຊ້ເວລາ 01 ວັນເຄິ່ງ - 02 ວັນ;
- ກອງປະຊຸມໃຫຍ່ຮາກຖານພັກ ໃຊ້ເວລາ 01 ວັນ.

IV. ວິທີການຈັດຕັ້ງປະຕິບັດ

1. ຄະນະເລຂາທິການສູນກາງພັກ ເປັນຜູ້ຊີ້ນຳໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້;

2. ມອບໃຫ້ບັນດາອົງການເສນາທິການຂັ້ນສູນກາງ ອອກຄຳແນະນຳກ່ຽວກັບການປະຕິບັດຄຳສັ່ງສະບັບນີ້ ດັ່ງນີ້:

- ຄະນະຈັດຕັ້ງສູນກາງພັກ ອອກຄຳແນະນຳການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ພ້ອມທັງເຮັດໜ້າທີ່ລົງຕິດຕາມ, ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງຄະນະພັກ ແຕ່ລະຂັ້ນ, ໂດຍສະເພາະການກະກຽມດ້ານບຸກຄະລາກອນ; ຊຸກຍູ້, ຕິດຕາມການອະນຸມັດງົບປະມານຈາກກະຊວງການເງິນ ໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ;
- ຄະນະກວດກາສູນກາງພັກ ອອກຄຳແນະນຳ ກ່ຽວກັບການດຳເນີນຊີວິດການເມືອງ, ໂຄງຮ່າງບົດສຳຫຼວດການນຳພາລວມ ຂອງຄະນະພັກ ແຕ່ລະຂັ້ນ ແລະ ໂຄງຮ່າງບົດສຳຫຼວດບຸກຄົນໃນຄະນະພັກ, ສະມາຊິກພັກ;
- ຄະນະກວດກາສູນກາງພັກ ສົມທົບກັບ ຄະນະຈັດຕັ້ງສູນກາງພັກ ຊີ້ນຳ, ຊຸກຍູ້ ແລະ ຕິດຕາມບັ້ນດຳເນີນຊີວິດການເມືອງ ຂອງອົງຄະນະພັກ ຢູ່ທ້ອງຖິ່ນ ແລະ ສູນກາງ;
- ຫ້ອງວ່າການສູນກາງພັກ ອອກຄຳແນະນຳ, ໂຄງຮ່າງ, ກຳນົດເນື້ອໃນ ແລະ ວິທີກະກຽມຮ່າງລາຍງານການເມືອງ ຂອງຄະນະພັກ ແຕ່ລະຂັ້ນ, ພ້ອມທັງລົງຕິດຕາມ, ຊຸກຍູ້ການກະກຽມຮ່າງລາຍງານການເມືອງດັ່ງກ່າວຂອງກະຊວງ-ອົງການ ແລະ ທ້ອງຖິ່ນ;
- ຄະນະໂຄສະນາອົບຮົມສູນກາງພັກ ອອກຄຳແນະນຳກຳນົດເນື້ອໃນໂຄສະນາສຶກສາອົບຮົມການເມືອງ-ແນວຄິດ, ປຸກລະດົມຂະບວນການ ແລະ ອອກຄຳແນະນຳ ໃນການຈັດຕັ້ງເຜີຍແຜ່ຮໍ່າຮຽນເອກະສານສຳຄັນຕ່າງໆ;
- ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ເປັນເຈົ້າການໃນການປຸກລະດົມຂົນຂວາຍມະຫາຊົນ ແລະ ປະຊາຊົນ ບັນດາເຜົ່າ ເຂົ້າຮ່ວມຂະບວນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນຂະບວນການ ຟົດຟື້ນ.

3. ມອບໃຫ້ລັດຖະບານ ຊີ້ນຳບັນດາກະຊວງ-ອົງການ ທີ່ກ່ຽວຂ້ອງ ອອກຄຳແນະນຳ, ໂຄງຮ່າງ, ກຳນົດເນື້ອໃນ, ວິທີກະກຽມຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂະແໜງການຂອງຄະນະພັກ ແຕ່ລະຂັ້ນ, ພ້ອມທັງລົງຕິດຕາມ, ຊຸກຍູ້ການກະກຽມຮ່າງດັ່ງກ່າວ ຂອງທ້ອງຖິ່ນ ແລະ ກະຊວງ-ອົງການ.

4. ມອບໃຫ້ລັດຖະບານ ຊີ້ນຳກະຊວງການເງິນ ຄົ້ນຄວ້າຈັດສັນງົບປະມານຮັບໃຊ້ກອງປະຊຸມໃຫຍ່

ຂອງພັກ ແຕ່ລະຂັ້ນ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

5. ຄະນະພັກ ແຕ່ລະຂັ້ນ ໃຫ້ຮີບຮ້ອນຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍ ແລະ ອອກມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບລວມ, ອະນຸກຳມະການຊ່ວຍວຽກກະກຽມດຳເນີນກອງປະຊຸມໃຫຍ່ ຂັ້ນຂອງຕົນ; ຄົ້ນຄວ້າຂຶ້ນແຜນງົບປະມານ ແລະ ສ້າງແຜນການລະອຽດ ໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ໃຫ້ທັນຕາມເວລາ ທີ່ກຳນົດໄວ້.

6. ອົງຄະນະພັກໃດ ສຳເລັດກອງປະຊຸມໃຫຍ່ແລ້ວ ຕ້ອງສະຫຼຸບຖອດຖອນບົດຮຽນ ແລະ ຮີບຮ້ອນຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃຫຍ່ ແຕ່ຫົວທີ ໃຫ້ເປັນຂະບວນຢ່າງກວ້າງຂວາງ ໃນໝູ່ມະຫາຊົນແນໃສ່ເຮັດໃຫ້ມະຕິກອງປະຊຸມໃຫຍ່ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ເກີດຜົນຕົວຈິງ.

7. ຜ່ານການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ຖ້າມີບັນຫາໃດ ບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ລາຍງານ ຕໍ່ຄະນະເລຂາທິການສູນກາງພັກ (ໂດຍຜ່ານອົງການເສນາທິການ ທີ່ກ່ຽວຂ້ອງ) ເພື່ອໃຫ້ການຊີ້ນຳທັນເວລາ.

8. ຄຳສັ່ງສະບັບນີ້ ປ່ຽນແທນຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07 ພຶດສະພາ 2018 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະເລຂາທິການສູນກາງພັກ

ຜູ້ປະຈຳການ

ປອ ບຸນທອງ ຈິດມະນີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະຈັດຕັ້ງສູນກາງພັກ ເລກທີ 211/ຄຈສພ
ນະຄອນຫຼວງວຽງຈັນ, ລົງວັນທີ 16 ສິງຫາ 2023

ຄຳແນະນຳ
ການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ເຖິງ: - ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຂວງ-ນະຄອນຫຼວງວຽງຈັນ;
- ຄະນະບໍລິຫານງານພັກ, ຄະນະປະຈຳພັກ ກະຊວງ-ອົງການ.

- ອີງຕາມ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ.
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ເລກທີ 18/ກມສພ, ລົງວັນທີ 02 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດເນື້ອໃນຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ທັນເວລາໃນທົ່ວພັກ, ຄະນະຈັດຕັ້ງສູນກາງພັກ ຈຶ່ງໄດ້ອອກຄຳແນະນຳຈັດຕັ້ງປະຕິບັດ ດັ່ງນີ້:

I. ການກະກຽມດ້ານຂະບວນການ, ເນື້ອໃນ ແລະ ການດຳເນີນຊີວິດການເມືອງ.

1. ການກະກຽມດ້ານຂະບວນການ: ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ;

2. ວຽກງານເນື້ອໃນ.

- **ຮ່າງລາຍງານການເມືອງຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ:** ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງຫ້ອງວ່າການສູນກາງພັກ;
- **ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ ຂອງກະຊວງ-ອົງການ:** ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງແຜນການ ແລະ ການລົງທຶນ;
- **ຮ່າງບົດສຳຫຼວດການນຳພາລວມ ແລະ ບຸກຄົນໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ:** ໃຫ້ປະຕິບັດຕາມຄຳແນະນຳຂອງຄະນະກວດກາສູນກາງພັກ.

II. ການເລືອກເຟັ້ນບຸກຄະລາກອນ.

1. ເປົ້າໝາຍເລືອກເຟັ້ນບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບຄະນະ

ບໍລິຫານງານພັກ ແຕ່ລະຂັ້ນ.

ໃຫ້ຄົ້ນຄວ້າເລືອກເຟັ້ນຈາກຄະນະບໍລິຫານງານພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນ ເຊິ່ງແຕ່ລະເປົ້າໝາຍ ແມ່ນມີຕຳແໜ່ງພັກ, ຕຳແໜ່ງບໍລິຫານລັດ ຖັດລົງມາ 1-2 ຂັ້ນ ລະອຽດມີດັ່ງນີ້:

1.1. ກະຊວງ-ອົງການ ປະກອບດ້ວຍ:

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ.

1.2. ແຂວງ-ນະຄອນຫຼວງວຽງຈັນ:

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ຄະນະປະຈຳ, ປະທານຄະນະກຳມາທິການ ແລະ ເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
- ເລຂາ, ຮອງເລຂາຄະນະພັກ, ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງວຽງຈັນ;
- ເລຂາ, ຮອງເລຂາພັກເມືອງ-ນະຄອນ ແລະ ເຈົ້າເມືອງ, ຮອງເຈົ້າເມືອງ-ນະຄອນ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຮອງຫົວໜ້າພະແນກການອ້ອມຂ້າງແຂວງ-ນະຄອນຫຼວງວຽງຈັນ ແລະ ທຽບເທົ່າ ຂຶ້ນໄປ.

1.3. ເມືອງ-ນະຄອນ ແລະ ທຽບເທົ່າ:

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ເລຂາ, ຮອງເລຂາຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາໜ່ວຍພັກຮາກຖານ;
- ເລຂາ, ຮອງເລຂາຄະນະພັກ, ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ;
- ເລຂາ, ຮອງເລຂາຄະນະພັກຮາກຖານບ້ານ ແລະ ເລຂາ, ຮອງເລຂາໜ່ວຍພັກບ້ານ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈຳເມືອງ-ນະຄອນຂຶ້ນໄປ.

1.4. ຮາກຖານພັກ:

1). ຮາກຖານພັກອ້ອມຂ້າງກະຊວງ-ອົງການ:

- ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຫົວໜ້າພະແນກ ຂຶ້ນໄປ;

- ໜ່ວຍພັກຮາກຖານ: ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຫົວໜ້າພະແນກ ຂຶ້ນໄປ.

2). ຮາກຖານພັກອ້ອມຂ້າງແຂວງ-ນະຄອນຫຼວງ:

- ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າຂະແໜງ ຂຶ້ນໄປ;

- ໜ່ວຍພັກຮາກຖານ: ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າຂະແໜງ ຂຶ້ນໄປ.

3). ຮາກຖານພັກອ້ອມຂ້າງເມືອງ-ນະຄອນ:

- ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າໜ່ວຍງານ ຂຶ້ນໄປ;

- ໜ່ວຍພັກຮາກຖານ: ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າໜ່ວຍງານ ຂຶ້ນໄປ.

4). ຮາກຖານພັກບ້ານ:

- ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ນາຍບ້ານ, ຮອງນາຍບ້ານ, ຫົວໜ້າໜ່ວຍງານຂອງບ້ານ ທີ່ເປັນສະມາຊິກພັກສົມບູນ;

- ໜ່ວຍພັກຮາກຖານບ້ານ: ຄະນະໜ່ວຍພັກຮາກຖານບ້ານ ຊຸດເກົ່າທີ່ຍັງຄົບມາດຕະຖານ, ເງື່ອນໄຂ, ນາຍບ້ານ, ຮອງນາຍບ້ານ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານຂອງບ້ານ ທີ່ເປັນສະມາຊິກພັກສົມບູນ.

2. ໂຄງປະກອບຄະນະບໍລິຫານງານພັກ ແຕ່ລະຂັ້ນ

ຄະນະບໍລິຫານງານພັກ ຊຸດໃໝ່ ໃຫ້ເອົາໃຈໃສ່ໂຄງປະກອບເພດ, ເຜົ່າ ມີຈໍານວນເພີ່ມຂຶ້ນ ຕາມຈຸດພິເສດສະເພາະ ຂອງຄະນະພັກ ແຕ່ລະຂັ້ນ; ຮັບປະກັນ 3 ຮຸ່ນຄື: ຮຸ່ນອາວຸໂສ, ຮຸ່ນກາງ, ຮຸ່ນໜຸ່ມ; ໃນນີ້ ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ; ເຊິ່ງຮຸ່ນອາວຸໂສ ແມ່ນຜູ້ທີ່ມີອາຍຸກະສຽນລະຫວ່າງ 56-60 ປີ; ຮຸ່ນກາງລະຫວ່າງ 46 - 55 ປີ ແລະ ຮຸ່ນໜຸ່ມ ແມ່ນອາຍຸກະສຽນ 45 ປີ ລົງມາ.

3. ການກໍານົດຈໍານວນຄະນະປະຈໍາພັກ ແຕ່ລະຂັ້ນ

ອີງຄະນະພັກໃດ ມີຈໍານວນກໍາມະການຄະນະພັກ 09 ສະຫາຍ ຂຶ້ນໄປ ຈຶ່ງໃຫ້ມີຄະນະປະຈໍາພັກ, ແຕ່ຈໍານວນຄະນະປະຈໍາພັກ ຫຼາຍສຸດ ບໍ່ໃຫ້ເກີນ 1/3 ຂອງຈໍານວນຄະນະບໍລິຫານງານພັກ ຂັ້ນນັ້ນ.

ຕົວຢ່າງ: ຄະນະບໍລິຫານງານພັກແຂວງ **(ກ)** ມີຄະນະບໍລິຫານງານພັກ ຈໍານວນ 41 ສະຫາຍ, ຄະນະປະຈໍາພັກ ແມ່ນບໍ່ໃຫ້ເກີນ 13 ສະຫາຍ.

4. ການກໍານົດຈໍານວນຜູ້ອອກຫາບທາມ ແລະ ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ

4.1. ການກໍານົດຈໍານວນຜູ້ອອກທາບທາມບຸກຄະລາກອນ ຮອບສຸດທ້າຍ.

ຈໍານວນຜູ້ອອກທາບທາມບຸກຄະລາກອນ ຮອບສຸດທ້າຍ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງຫຼາຍກວ່າຈໍານວນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່;

ຕົວຢ່າງ: ອີງຄະນະພັກ **(ກ)** ຕ້ອງການຄະນະພັກ ຊຸດໃໝ່ ຈໍານວນ 23 ສະຫາຍ, ຈໍານວນຜູ້ອອກສະໝັກຮັບເລືອກຕັ້ງໃນກອງປະຊຸມໃຫຍ່ ຕ້ອງມີຢ່າງໜ້ອຍ 27 ສະຫາຍ ແລະ ຜູ້ອອກທາບທາບບຸກຄະລາກອນ

ຮອບສຸດທ້າຍ ຕ້ອງມີຢ່າງໜ້ອຍ 32 ສະຫາຍ; ເພື່ອຂີດອອກ 05 ສະຫາຍ, ຮັກສາໄວ້ 27 ສະຫາຍ.

4.2. ການກຳນົດຈຳນວນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ.

- ອີງຄະນະພັກ ທີ່ຕ້ອງການຄະນະບໍລິຫານງານພັກ ແຕ່ 27 ສະຫາຍ ຂຶ້ນໄປ, ຈຳນວນຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນຄະນະບໍລິຫານງານພັກ ທີ່ຕ້ອງການ ຢ່າງໜ້ອຍ 05 ສະຫາຍ;
- ອີງຄະນະພັກ ທີ່ຕ້ອງການຈຳນວນຄະນະບໍລິຫານງານພັກ ແຕ່ 17 - 25 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນ ຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 04 ສະຫາຍ;
- ອີງຄະນະພັກ ຫຼື ຮາກຖານພັກ ທີ່ຕ້ອງການຄະນະພັກ ຈຳນວນ 09 - 15 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈຳນວນຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 03 ສະຫາຍ;
- ອີງຄະນະພັກ ຫຼື ຮາກຖານພັກ ທີ່ຕ້ອງການຄະນະພັກ ຈຳນວນ 03-07 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈຳນວນຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 02 ສະຫາຍ.

ຕົວຢ່າງ: ອີງຄະນະພັກ **(ຂ)** ຕ້ອງການຄະນະພັກ ຊຸດໃໝ່ ຈຳນວນ 15 ສະຫາຍ, ຈຳນວນຜູ້ອອກສະໝັກຮັບເລືອກຕັ້ງໃນກອງປະຊຸມໃຫຍ່ ຕ້ອງມີຢ່າງໜ້ອຍ 18 ສະຫາຍ, ເພື່ອຂີດອອກ 03 ສະຫາຍ, ຮັກສາໄວ້ 15 ສະຫາຍ.

5. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ກະຊວງ-ອົງການ.

5.1. ກະຊວງ-ອົງການ ທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ໃຫ້ດຳເນີນການທາບທາມ 2 ຮອບ ດັ່ງນີ້:

5.1.1. ຮອບທີ 1:

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ :

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
+ ສະມາຊິກພັກສົມບູນທັງໝົດ;

- ເປົ້າໝາຍອອກທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ແຕ່ 01-03 ສະຫາຍ;

❖ **ວາລະ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;
+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກ;
+ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງຮອງຫົວໜ້າກົມ ຂຶ້ນໄປ;

- ເປົ້າໝາຍອອກທາບທາມ ປະກອບດ້ວຍ:

+ ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕໍາແໜ່ງ ແຕ່ 01-03 ສະຫາຍ.

5.1.2. ຮອບທີ 2:

ການຈັດຕັ້ງການທາບທາມ ຮອບທີ 2 (ຮອບສຸດທ້າຍ) ໃຫ້ດໍາເນີນພາຍຫຼັງສໍາເລັດການດໍາເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກກະຊວງ-ອົງການ.

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ສະມາຊິກພັກສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ສະມາຊິກພັກ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນ ຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຮອບທີ 2 (ຄັ້ງສຸດທ້າຍ).

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ຄະນະພັກຮາກຖານ ແລະ ເລຂາໜ່ວຍພັກຮາກຖານ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານ ນັບແຕ່ຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນ ຈາກຜົນການທາບທາມ ຮອບທີ 1, ວາລະທີ 2 ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 2;

- ການຂີດບັດທາບທາມ ແມ່ນກໍານົດຈໍານວນທີ່ຈະຂີດອອກ ໃນແຕ່ລະຕໍາແໜ່ງ.

5.2. ກະຊວງ-ອົງການ ທີ່ດໍາເນີນກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກ ໃຫ້ດໍາເນີນການທາບທາມ 3 ຮອບ ດັ່ງນີ້:

5.2.1. ຮອບທີ 1:

- ເປົ້າໝາຍເຂົ້າຮ່ວມທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານພັກ;

+ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;

+ ພະນັກງານບຳນານ ອາດີດຄະນະບໍລິຫານງານພັກ ທີ່ຍັງຮ່ວມຊີວິດພັກ ຢູ່ກະຊວງ-ອົງການຕົນ;

- ເປົ້າໝາຍອອກທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 01-03 ສະຫາຍ.

5.2.2. ຮອບທີ 2:

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;

+ ຜູ້ແທນສົມບູນ ແລະ ສຳຮອງ ທີ່ໄດ້ຮັບການເລືອກຕັ້ງຈາກບັນດາຮາກຖານພັກ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນບໍ່ກຳນົດຈຳນວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າບັດໃຊ້ການບໍ່ໄດ້.

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;

+ ຜູ້ແທນສົມບູນ ແລະ ສຳຮອງ ທີ່ໄດ້ຮັບການເລືອກຕັ້ງຈາກຮາກຖານພັກ.

- ເປົ້າໝາຍອອກທາບທາມ ປະກອບດ້ວຍ:

+ ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕຳແໜ່ງ ແຕ່ 01-03 ສະຫາຍ.

5.2.3. ຮອບທີ 3:

ການຈັດຕັ້ງການທາບທາມ ຮອບທີ 3 (ຮອບສຸດທ້າຍ) ແມ່ນໃຫ້ດຳເນີນພາຍຫຼັງສຳເລັດການດຳເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກກະຊວງ-ອົງການ;

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສະຫຼຸບການນຳພາລວມ ຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 03 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຜູ້ແທນສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ ທີ່ບໍ່ແມ່ນຄະນະບໍລິຫານງານພັກ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 02 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 3 ໃນວາລະທີ 2 (ຄັ້ງສຸດທ້າຍ);

- ການຂີດບັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ ໃນແຕ່ລະຕຳແໜ່ງ.

5.3. ສຳລັບອົງຄະນະພັກກະຊວງປ້ອງກັນປະເທດ ເນື່ອງຈາກມີຈຸດພິເສດສະເພາະ, ສະນັ້ນ ການທາບທາມບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ແມ່ນຄະນະຈັດຕັ້ງສູນກາງພັກ ຈະສົມທົບກັບຄະນະປະຈຳພັກ ກະຊວງ ເພື່ອຮ່ວມກັນຄົ້ນຄວ້າ ແລ້ວລາຍງານຂໍຄຳເຫັນຈາກສະຫາຍຜູ້ປະຈຳການຄະນະເລຂາທິການສູນກາງພັກ ກ່ອນການປະຕິບັດ.

6. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະ

ນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກແຂວງ-ນະຄອນຫຼວງວຽງຈັນ.

6.1. ຮອບທີ 1:

❖ **ເປົ້າໝາຍເຂົ້າຮ່ວມທາບທາມ ຄະນະບໍລິຫານງານພັກ ປະກອບດ້ວຍ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
- ຄະນະປະຈໍາ, ປະທານ, ຮອງປະທານຄະນະກໍາມາທິການ; ເລຂາ ແລະ ຮອງເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
- ຄະນະບໍລິຫານງານພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າຂະແໜງ ແລະ ທຽບເທົ່າ ຂຶ້ນໄປ;
- ຄະນະບໍລິຫານງານພັກເມືອງ-ນະຄອນ;
- ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການ ແລະ ທຽບເທົ່າຂອງເມືອງ-ນະຄອນ ຂຶ້ນໄປ;
- ຄະນະພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ ແລະ ທຽບເທົ່າ ຂຶ້ນໄປ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
- ພະນັກງານບໍານານ ອາດີດຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ ທີ່ຍັງຮ່ວມຊີວິດພັກ ຢູ່ອົງຄະນະພັກດັ່ງກ່າວ.

❖ **ເປົ້າໝາຍອອກທາບທາມ ຄະນະບໍລິຫານງານພັກ ປະກອບດ້ວຍ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
- ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 01-03 ສະຫາຍ.

6.2. ຮອບທີ 2:

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;
+ ຜູ້ແທນສົມບູນ ແລະ ສໍາຮອງ ທີ່ໄດ້ຮັບການເລືອກຕັ້ງຈາກບັນດາຮາກຖານພັກ;
+ ຄະນະປະຈໍາ, ປະທານຄະນະກໍາມາທິການ ແລະ ເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ;
+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;
+ ຄະນະບໍລິຫານງານພັກເມືອງ-ນະຄອນ;
+ ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ຄອນຫຼວງ;
+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 03 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນບໍ່ກໍານົດຈໍານວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າບັດໃຊ້ການບໍ່ໄດ້;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;

+ ຄະນະປະຈໍາ, ປະທານຄະນະກໍາມາທິການ ແລະ ເລຂາທິການສະພາປະຊາຊົນ ແຂວງ-ນະຄອນຫຼວງວຽງຈັນ;

+ ຄະນະບໍລິຫານງານພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ;

+ ຄະນະປະຈໍາພັກເມືອງ-ນະຄອນ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າພະແນກການອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ທຽບເທົ່າ ຂຶ້ນໄປ.

- ເປົ້າໝາຍອອກທາບທາມ ປະກອບດ້ວຍ:

+ ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກຊຸດເກົ່າ ທີ່ຍັງປະຈໍາການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕໍາແໜ່ງງານ ແຕ່ 01-03 ສະຫາຍ.

6.3. ຮອບທີ 3:

ການທາບທາມຮອບທີ 3 (ຮອບສຸດທ້າຍ) ໃຫ້ດໍາເນີນພາຍຫຼັງສໍາເລັດການດໍາເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ;

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນ

ຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 2 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 3 ໃນວາລະທີ 01; ການຂີດບັດທາບທາມ: ແມ່ນກຳນົດຈຳນວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈຳການ;

+ ຜູ້ແທນສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ ທີ່ບໍ່ແມ່ນຄະນະບໍລິຫານງານພັກ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈຳພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈຳພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈຳນວນຈາກຜົນການທາບທາມ ຮອບທີ 2 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 03 ວາລະທີ 02;

- **ການຂີດບັດທາບທາມ:** ແມ່ນກຳນົດຈຳນວນທີ່ຈະຂີດອອກ ໃນແຕ່ລະຕຳແໜ່ງ.

7. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກເມືອງ-ນະຄອນ ແລະ ທຽບເທົ່າ.

7.1. ຮອບທີ 1:

❖ **ເປົ້າໝາຍເຂົ້າຮ່ວມທາບທາມຄະນະບໍລິຫານງານພັກ ປະກອບດ້ວຍ:**

- ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານອ້ອມຂ້າງເມືອງ-ນະຄອນ ແລະ ທຽບເທົ່າ;
- ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກບ້ານ;
- ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ ແລະ ທຽບເທົ່າ;
- ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈຳເມືອງ-ນະຄອນ ແລະ ທຽບເທົ່າ ຂຶ້ນໄປ;
- ນາຍທະຫານ, ນາຍຕຳຫຼວດ ທີ່ເປັນສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການຂັ້ນເມືອງ ແລະ ທຽບເທົ່າ ຂຶ້ນໄປ;
- ພະນັກງານບຳນານ ອາດີດຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ທີ່ຍັງຮ່ວມຊີວິດພັກຢູ່ອີງຄະນະພັກດັ່ງກ່າວ.

❖ **ເປົ້າໝາຍອອກທາບທາມ ປະກອບດ້ວຍ:**

- ຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ຊຸດເກົ່າ ທີ່ຍັງປະຈຳການ;
- ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 01-03 ສະຫາຍ.

7.2. ຮອບທີ 2:

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກເມືອງ-ນະຄອນ ຊຸດເກົ່າ ທີ່ຍັງຄົບມາດຕະຖານ, ເງື່ອນໄຂ;

+ ຜູ້ແທນສົມບູນ ແລະ ສໍາຮອງ ທີ່ໄດ້ຮັບການເລືອກຕັ້ງຈາກຮາກຖານພັກ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານອ້ອມຂ້າງເມືອງ-ນະຄອນ;

+ ຄະນະພັກກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານບ້ານ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການປະຈໍາເມືອງ ແລະ ທຽບເທົ່າຂຶ້ນໄປ;

+ ນາຍ, ພົນທະຫານ, ນາຍ, ພົນຕໍາຫຼວດ ທີ່ເປັນສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການຂັ້ນເມືອງ ແລະ ທຽບເທົ່າ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນບໍ່ກໍານົດຈໍານວນທີ່ຈະຂີດອອກ, ໃນກໍລະນີ ຂີດອອກໝົດ ຫຼື ບໍ່ຂີດ ຖືວ່າບັດໃຊ້ການບໍ່ໄດ້.

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ;

+ ຄະນະພັກກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ;

+ ຄະນະພັກຮາກຖານບ້ານ ແລະ ຄະນະໜ່ວຍພັກບ້ານ.

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງ-ນະຄອນ ຂຶ້ນໄປ.

- ເປົ້າໝາຍອອກທາບທາມ ປະກອບດ້ວຍ:

+ ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕໍາແໜ່ງງານ ແຕ່ 01-03 ສະຫາຍ,

7.3. ຮອບທີ 3:

ການທາບທາມຮອບທີ 3 (ຮອບສຸດທ້າຍ) ໃຫ້ດໍາເນີນພາຍຫຼັງສໍາເລັດການດໍາເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ.

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາຂະແໜງການ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 02 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 3 ໃນວາລະທີ 01;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ .

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະບໍລິຫານງານພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າຫ້ອງການ ແລະ ທຽບເທົ່າ ປະຈໍາເມືອງຂຶ້ນໄປທີ່ບໍ່ແມ່ນຄະນະບໍລິຫານງານພັກ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 2 ໃນວາລະ 02;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ ໃນແຕ່ລະຕໍາແໜ່ງ.

8. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກ, ຄະນະປະຈໍາພັກ (ຖ້າມີ), ເລຂາ, ຮອງເລຂາຄະນະພັກ, ປະທານ, ຮອງປະທານຄະນະກວດກາພັກ ຂັ້ນຮາກຖານພັກ ໃຫ້ດໍາເນີນ 02 ຮອບດັ່ງນີ້:

8.1. ຮອບທີ 1:

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍ:

+ ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ ຊຸດເກົ່າ ທີ່ຍັງປະຈໍາການ;

+ ສະມາຊິກພັກສົມບູນທັງໝົດ;

- ເປົ້າໝາຍອອກທາບທາມ:

+ ຄະນະພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ແຕ່ 01-03 ສະຫາຍ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ; ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ;

- ເປົ້າໝາຍເຂົ້າຮ່ວມທາບທາມ:

+ **ຄະນະພັກຮາກຖານ ປະກອບດ້ວຍ:** ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງປະຈໍາການ ແລະ ຄະນະໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ;

+ **ໜ່ວຍພັກ ປະກອບດ້ວຍ:** ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈໍາການ ແລະ ສະມາຊິກພັກສົມບູນທັງໝົດ;

- ເປົ້າໝາຍອອກທາບທາມ:

+ ຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ໃຫ້ຜູ້ເຂົ້າຮ່ວມທາບທາມສະເໜີເປົ້າໝາຍໃໝ່ ໃນແຕ່ລະຕໍາແໜ່ງ ແຕ່ 01-03 ສະຫາຍ.

8.2. ຮອບທີ 2:

ການຈັດຕັ້ງການທາບທາມ ຮອບທີ 2 (ຮອບສຸດທ້າຍ) ໃຫ້ດໍາເນີນພາຍຫຼັງສໍາເລັດການດໍາເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກ.

❖ **ວາລະທີ 01:** ແມ່ນການທາບທາມຄະນະບໍລິຫານງານພັກ ແລະ ປະກອບຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາ ແລະ ຮ່າງບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ ຄັ້ງສຸດທ້າຍ;

- ເປົ້າໝາຍເຂົ້າຮ່ວມທາບທາມ ປະກອບດ້ວຍ:

+ ຄະນະພັກຮາກຖານ, ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈໍາການ;

+ ສະມາຊິກພັກສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນ ຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 01, ເພື່ອເອົາອອກທາບທາມ ຮອບທີ 2;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ;

❖ **ວາລະທີ 02:** ແມ່ນການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ:

- ເປົ້າໝາຍເຂົ້າຮ່ວມທາບທາມ:

+ ຄະນະພັກຮາກຖານ ປະກອບດ້ວຍ: ຄະນະພັກຮາກຖານ ຊຸດເກົ່າ ທີ່ຍັງປະຈໍາການ; ເລຂາ ແລະ ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ;

+ ໜ່ວຍພັກ ປະກອບດ້ວຍ: ຄະນະໜ່ວຍພັກ ຊຸດເກົ່າ ທີ່ຍັງປະຈໍາການ ແລະ ສະມາຊິກພັກສົມບູນທັງໝົດ;

- ເປົ້າໝາຍອອກທາບທາມ ໃຫ້ປະຕິບັດດັ່ງນີ້:

ຄະນະປະຈໍາພັກ ຫຼື ເລຂາ, ຮອງເລຂາຄະນະພັກ (ບ່ອນບໍ່ມີຄະນະປະຈໍາພັກ) ສົມທົບກັບພາກສ່ວນຮັບຜິດຊອບບຸກຄະລາກອນ ເຊິ່ງໄດ້ຮັບການມອບໝາຍຈາກຄະນະພັກ ຂັ້ນເທິງ ເປັນຜູ້ຄັດຈ້ອນລາຍຊື່ ແລະ ຈໍານວນຈາກຜົນການທາບທາມ ຮອບທີ 01 ໃນວາລະທີ 02, ເພື່ອເອົາອອກທາບທາມ ຮອບທີ 02 ໃນວາລະ 02;

- ການຂີດບັດທາບທາມ: ແມ່ນກໍານົດຈໍານວນທີ່ຈະຂີດອອກ ໃນແຕ່ລະຕໍາແໜ່ງ.

9. ການດໍາເນີນຊີວິດການເມືອງຂອງຄະນະບໍລິຫານງານພັກ ທ້າຍສະໄໝ

- ການດໍາເນີນຊີວິດການເມືອງ ແມ່ນໃຫ້ປະຕິບັດຕາມບາດກ້າວ, ຂັ້ນຕອນ, ເນື້ອໃນ ທີ່ໄດ້ກໍານົດໄວ້ ຢູ່ໃນຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ຄໍາແນະນໍາຂອງຄະນະກວດກາສູນກາງພັກ;

- ພາຍຫຼັງສໍາເລັດຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃນກໍລະນີມີບັນຫາທີ່ພົວພັນເຖິງເປົ້າໝາຍ ຈະລົງທາບທາມ ໃຫ້ຄະນະຮັບຜິດຊອບ ສະຫຼຸບຜົນການດໍາເນີນຊີວິດການເມືອງ ເພື່ອລາຍງານຕໍ່ກອງປະຊຸມທາບທາມບຸກຄະລາກອນຊາບ ກ່ອນຈະດໍາເນີນການທາບທາມ ຮອບສຸດທ້າຍ; ຄະນະຮັບຜິດຊອບ ຈະຕ້ອງໄດ້ອະທິບາຍ, ຊີ້ແຈງຕໍ່ກອງປະຊຸມຊາບ, ເມື່ອຈໍາເປັນ ກໍໃຫ້ເປົ້າໝາຍບຸກຄະລາກອນ ທີ່ກ່ຽວຂ້ອງ ອະທິບາຍ, ຊີ້ແຈງ; ການສະຫຼຸບຜົນການດໍາເນີນຊີວິດການເມືອງ ໃຫ້ຕີລາຄາບັນຍາກາດ, ຜົນໄດ້ຮັບ, ຄວາມຮັບຜິດຊອບ ຂອງຄະນະພັກ ໃນການສໍາຫຼວດກວດກາກັນຢູ່ພາຍໃນ ໂດຍສະເພາະແມ່ນຄວາມຮັບຜິດຊອບ ຕໍ່ຄໍາເຫັນ, ຄໍາຕິຊົມຂອງສະມາຊິກພັກ ທີ່ຈະຕ້ອງໄດ້ຊີ້ແຈງຕໍ່ການນໍາພາລວມຂອງຄະນະພັກ ແລະ ບຸກຄົນຄະນະພັກ.

10. ກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ

- ໄລຍະເວລາດໍາເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ ໃຫ້ຈັດຂຶ້ນຫຍັບມໍ່ກັບ ມື້ດໍາເນີນກອງປະຊຸມໃຫຍ່ຂອງອົງຄະນະພັກ ຂັ້ນຕົນ ບໍ່ໃຫ້ກາຍ 10 ວັນ ລັດຖະການ;

- ພາຍຫຼັງຄະນະບໍລິຫານງານພັກ ໄດ້ລາຍງານຄວາມພ້ອມ ໃຫ້ຄະນະພັກຂັ້ນເທິງ ສໍາເລັດ, ຄະນະບໍລິຫານງານພັກ ຕ້ອງດໍາເນີນກອງປະຊຸມຄົບຄະນະບໍລິຫານງານພັກ ອີກເທື່ອໜຶ່ງ ເພື່ອແຈ້ງຜົນການຕົກລົງຂອງຄະນະພັກ ຂັ້ນເທິງ ກ່ຽວກັບເນື້ອໃນ ແລະ ບຸກຄະລາກອນອັນລະອຽດ, ເຊິ່ງລວມເຖິງບຸກຄົນຄະນະບໍລິຫານງານພັກ ຊຸດເກົ່າ ຈໍານວນໜຶ່ງ ທີ່ຄະນະພັກຂັ້ນເທິງ ບໍ່ໃຫ້ສືບຕໍ່ສະໝັກເຂົ້າໃນຄະນະບໍລິຫານງານພັກຊຸດໃໝ່.

11. ການກະກຽມຜູ້ແທນສົມບູນ ແລະ ສໍາຮອງ

- ຄະນະປະຈໍາພັກ ເປັນຜູ້ແບ່ງປັນຈໍານວນຜູ້ແທນສົມບູນ ແລະ ສໍາຮອງ ໃຫ້ບັນດາການຈັດຕັ້ງພັກ ທີ່ຂຶ້ນກັບຕົນຕາມຄວາມເໝາະສົມ, ແຕ່ຕ້ອງຮັບປະກັນໃຫ້ທຸກໆການຈັດຕັ້ງພັກ ທີ່ຂຶ້ນກັບອົງຄະນະພັກຕົນ ມີຕົວແທນ

ເຂົ້າຮ່ວມ;

- ການກຳນົດຈຳນວນຜູ້ແທນສົມບູນ ແມ່ນບໍ່ໃຫ້ເກີນ 10% ຂອງຄັ້ງຜ່ານມາ, ແຕ່ຈຳນວນລວມຂອງຜູ້ແທນສົມບູນ ແມ່ນໃຫ້ເປັນຈຳນວນຄີກ.

ຕົວຢ່າງ: ກອງປະຊຸມໃຫຍ່ຜູ້ແທນ ຄັ້ງຜ່ານມາມີຜູ້ແທນສົມບູນ ເຂົ້າຮ່ວມທັງໝົດ 121 ສະຫາຍ, ກອງປະຊຸມໃຫຍ່ຜູ້ແທນຄັ້ງນີ້ ຈະມີຜູ້ແທນເພີ່ມຂຶ້ນບໍ່ເກີນ 12 ສະຫາຍ, ໝາຍຄວາມວ່າຜູ້ແທນສົມບູນຄັ້ງນີ້ ຈະມີຜູ້ແທນສົມບູນເຂົ້າຮ່ວມ ບໍ່ໃຫ້ກາຍ 133 ສະຫາຍ;

- ການເລືອກຕັ້ງຜູ້ແທນສົມບູນ ແລະ ສຳຮອງ ໃຫ້ດຳເນີນເທື່ອດຽວ, ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນຜູ້ແທນສົມບູນ ໃຫ້ເອົາຕາມລຳດັບ 1 ຈົນຮອດລຳດັບສຸດທ້າຍ ຂອງຈຳນວນຜູ້ແທນສົມບູນ, ຖັດໄປແມ່ນເປັນຜູ້ແທນສຳຮອງ ຄົບຕາມຈຳນວນ ທີ່ກຳນົດໄວ້; ໃນກໍລະນີຜູ້ຖັດໄປ ຄະແນນບໍ່ຮອດ 50 ເປີເຊັນ ຂຶ້ນໄປ ແມ່ນໃຫ້ດຳເນີນການປ່ອນບັດເລືອກຕັ້ງຄືນໃໝ່;

ຕົວຢ່າງ: ອົງຄະນະພັກ **(ກ)** ຕ້ອງການຈຳນວນຜູ້ແທນສົມບູນ 15 ສະຫາຍ ແລະ ສຳຮອງ 03 ສະຫາຍ, ຜູ້ອອກສະໝັກຮັບເລືອກຕັ້ງຢ່າງໜ້ອຍ ຕ້ອງມີ 21 ສະຫາຍ; ໝາຍວ່າແຕ່ລຳດັບທີ 1-15 ແມ່ນຜູ້ແທນສົມບູນ, ລຳດັບທີ 16-18 ແມ່ນຜູ້ແທນສຳຮອງ.

ໃນກໍລະນີຜູ້ແທນສົມບູນ ແລະ ສຳຮອງ ມີຄະແນນເທົ່າກັນ ແມ່ນບໍ່ໃຫ້ດຳເນີນການປ່ອນບັດຄືນໃໝ່ ມອບໃຫ້ຄະນະປະທານກອງປະຊຸມໃຫຍ່ ເປັນຜູ້ພິຈາລະນາຕົກລົງ ໂດຍໃຫ້ຖືເອົາຜູ້ທີ່ມີອາຍຸພັກ ແລະ ຕຳແໜ່ງພາຍໃນພັກ ທີ່ສູງກວ່າເປັນເງື່ອນໄຂຕັດສິນ.

12. ໄລຍະເວລາດຳເນີນກອງປະຊຸມໃຫຍ່.

ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງດຳເນີນກອງປະຊຸມໃຫຍ່ ຂັ້ນຕົນ ສຳເລັດກ່ອນກອງປະຊຸມໃຫຍ່ຄະນະພັກຂັ້ນເທິງ ຖັດຕົນ ບໍ່ໃຫ້ເກີນ 06 ເດືອນ;

ຕົວຢ່າງ: ບັນດາອົງຄະນະພັກເມືອງ-ນະຄອນ ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍເດືອນ ມີນາ (3) 2025, ກອງປະຊຸມໃຫຍ່ອົງຄະນະພັກແຂວງ-ນະຄອນຫຼວງ ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍເດືອນ ກັນຍາ (9) 2025.

13. ການກະກຽມລາຍງານຄວາມພ້ອມ ກ່ຽວກັບການກະກຽມດຳເນີນກອງປະຊຸມໃຫຍ່ ຕໍ່ຄະນະພັກຂັ້ນເທິງ.

ຄະນະພັກ ແຕ່ລະຂັ້ນ ຕ້ອງໄດ້ກະກຽມເນື້ອໃນເອກະສານຕ່າງໆດັ່ງນີ້:

- ບົດລາຍງານຄວາມພ້ອມ ໃນການກະກຽມດຳເນີນກອງປະຊຸມໃຫຍ່ ຂັ້ນຕົນ (ໂດຍຫຍໍ້);

- ເອກະສານດ້ານເນື້ອໃນປະກອບດ້ວຍ: ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແຜນພັດທະນາຂອງຂະແໜງການ ແລະ ຮ່າງບົດສໍາຫຼວດການນຳພາລວມຂອງຄະນະບໍລິຫານງານພັກ, ວາລະ ແລະ ຄາດຄະເນເວລາດຳເນີນກອງປະຊຸມໃຫຍ່;

- ຊີວະປະຫວັດຫຍໍ້ການເຄື່ອນໄຫວ ແລະ ຄະແນນການທາບທາມແຕ່ລະຮອບ ຂອງບັນດາເປົ້າໝາຍທີ່ຈະອອກສະໝັກຮັບເລືອກຕັ້ງ ແລະ ກະກຽມເປົ້າໝາຍສຳຮອງ ໄວ້ຈຳນວນໜຶ່ງ;

- ແຜນຄາດຄະເນການສັບຊ້ອນຈັດວາງຄະນະບໍລິຫານງານພັກ ຊຸດໃໝ່; ແຜນຄາດຄະເນ ຜູ້ຈະເປັນ

ຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ.

III. ວິທີຈັດຕັ້ງປະຕິບັດ

1. ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຕ່ລະຂັ້ນ ເຊື່ອມຊຶມ, ກຳແໜ້ນເນື້ອໃນຄຳແນະນຳສະບັບນີ້ ໃຫ້ເລິກເຊິ່ງ ແລະ ຜັນຂະຫຍາຍເປັນອັນລະອຽດ, ເປັນເຈົ້າການເຜີຍແຜ່ໃຫ້ອົງການເສນາທິການ ແລະ ຄະນະພັກຂັ້ນລຸ່ມ ທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ;

2. ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຕ່ລະຂັ້ນ ຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບ, ອະນຸກຳມະການຕ່າງໆໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່, ພ້ອມທັງສ້າງແຜນການເຄື່ອນໄຫວລະອຽດຂອງແຕ່ລະອະນຸກຳມະການ;

3. ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງປະສານສົມທົບກັບອົງການເສນາທິການ ທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ໃຫ້ມີຄວາມຖືກຕ້ອງ ແລະ ມີປະສິດທິຜົນ;

4. ຜ່ານການຈັດຕັ້ງປະຕິບັດ ຖ້າພົບບັນຫາໃດ ບໍ່ຈະແຈ້ງ ຫຼື ມີຄວາມຫຍຸ້ງຍາກ ໃຫ້ລາຍງານຕໍ່ຄະນະເລຂາທິການສູນກາງພັກ (ໂດຍຜ່ານຄະນະຈັດຕັ້ງສູນກາງພັກ) ພິຈາລະນາ ແລະ ໃຫ້ທິດຊີ້ນຳທັນເວລາ;

5. ພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງແຕ່ລະອົງຄະນະພັກແລ້ວ, ຄະນະພັກ ແຕ່ລະຂັ້ນ ຕ້ອງຮີບຮ້ອນຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມໃຫຍ່ ໃຫ້ເລິກເຊິ່ງ, ທົ່ວເຖິງ, ທັນເປັນແຜນດຳເນີນງານ, ແຜນການເຄື່ອນໄຫວລະອຽດໃນແຕ່ລະໄລຍະ, ພ້ອມທັງແບ່ງງານ, ແບ່ງຄວາມຮັບຜິດຊອບ ໃຫ້ບັນດາສະຫາຍກຳມະການຄະນະພັກ ໃຫ້ລະອຽດ ແລະ ຈະແຈ້ງ;

6. ຄຳແນະນຳສະບັບນີ້ ປ່ຽນແທນຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 784/ຄຈສພ, ລົງວັນທີ 14 ກັນຍາ 2018 ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07 ພຶດສະພາ 2018 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຄະນະຈັດຕັ້ງສູນກາງພັກ

ບ.ສີໃສ ລືເດດມູນສອນ

ປັບປຸງວຽກງານກໍ່ສ້າງ-ບຳລຸງ ພະນັກງານ ຢູ່ແຂວງສາລະວັນ

ໂດຍ: ສອນໄຊ ປ້ອງດາລາ

ໃນເງື່ອນໄຂປະຈຸບັນ ການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານນັ້ນ ຕ້ອງຖືມາດຕະຖານຄວາມຮູ້ດ້ານແນວທາງນະໂຍບາຍຂອງພັກ, ທັດສະນະຫຼັກໝັ້ນການເມືອງ ແລະ ຄຸນສົມບັດສິນທຳເປັນບູລິມະສິດ; ຖືຄວາມຮູ້, ຄວາມສາມາດ, ຄວາມບາກບັ່ນສູ້ຊົນ ແລະ ແບບແຜນວິທີເຮັດວຽກເປັນສຳຄັນ ແລະ ຈຳເປັນ; ພະນັກງານຫຼັກແຫຼ່ງຕ້ອງໄດ້ຜ່ານການສຶກສາອົບຮົມ... ຮຽນໃນລະບົບໂຮງຮຽນຂອງພັກ ແລະ ຕ້ອງໄດ້ຜ່ານການຝຶກຝົນທົດສອບໃນຂະບວນການວຽກງານຕົວຈິງ, ຜ່ານການກວດກາຕີລາຄາ ແລະ ເລືອກເຟັ້ນບົນພື້ນຖານຜົນງານອັນເປັນທີ່ຍອມຮັບຈາກກົມກອງ-ທ້ອງຖິ່ນ ກໍຄືສະມາຊິກພັກພະນັກງານ ແລະ ມະຫາຊົນໃນບ່ອນທີ່ຜູ້ນັ້ນສັງກັດຢູ່.

ສະນັ້ນ, ກົມການເມືອງສູນກາງພັກ ຈຶ່ງໄດ້ອອກມະຕິສະບັບເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ສະບັບເລກທີ 072/ກມສພ ລົງວັນທີ 14 ພຶດສະພາ 2019 ວ່າດ້ວຍລະບອບການຮ່ຳຮຽນທິດສະດີການເມືອງ ແລະ ສະບັບເລກທີ 073/ກມສພ, ລົງວັນທີ 14 ພຶດສະພາ 2019 ວ່າດ້ວຍການສ້າງແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ; ມະຕິດັ່ງກ່າວໃນທຸກຂົງເຂດວຽກງານໃນທົ່ວປະເທດຈະຕ້ອງໄດ້ເຜີຍແຜ່ ແລະ ພ້ອມກັນຈັດຕັ້ງປະຕິບັດ ແນໃສ່ເຮັດໃຫ້ການກໍ່ສ້າງ-ບຳລຸງພະນັກງານມີປະສິດທິຜົນເພື່ອຕອບສະໜອງໄດ້ກັບຄວາມຕ້ອງການຂອງໜ້າທີ່ການເມືອງຂອງພັກ ກໍຄືຂອງຂະແໜງການ.

ຍ້ອນບົດບາດ ແລະ ຄວາມສຳຄັນດັ່ງກ່າວນັ້ນ, ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ວຽກງານກໍ່ສ້າງ-ບຳລຸງພະນັກງານຢ່າງຕັ້ງໜ້າ ແນໃສ່ສ້າງພະນັກງານທີ່ມີຄຸນນະພາບຄົບຊຸດ, ການກໍ່ສ້າງ-ບຳລຸງພະນັກງານແມ່ນສຸມໃສ່ພະນັກງານ 3 ຮຸ່ນ (ຮຸ່ນໜຸ່ມ, ຮຸ່ນກາງ ແລະ ຮຸ່ນອາວຸໂສ) ເລີ່ມຈາກຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ຂອງພັກ ໂດຍອີງຕາມແຜນກຳນົດສຸມໃສກໍ່ສ້າງ-ບຳລຸງພະນັກງານນຳພາພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການ ເພື່ອຮັບປະກັນລັກສະນະສືບທອດຢ່າງຕໍ່ເນື່ອງ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

ແຂວງສາລະວັນ ເປັນແຂວງໜຶ່ງທີ່ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ-ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ພ້ອມກັນດຳລົງຊີວິດ ແລະ ສ້າງສາພັດທະນາຕະຫຼອດມາ.

ມາຮອດປີ 2023 ທົ່ວແຂວງສາລະວັນ ມີພະນັກງານລັດຖະກອນໝົດ 7.378 ຄົນ, ຍິງ 3.442 ຄົນ, ຂັ້ນແຂວງ 1.488 ຄົນ, ຍິງ 622 ຄົນ; ຂັ້ນເມືອງ 5.890 ຄົນ,ຍິງ 2.820 ຄົນ; ດ້ານລະດັບວິຊາສະເພາະປະລິນຍາເອກຈຳນວນ 3 ຄົນ, ປະລິນຍາໂທຈຳນວນ 162 ຄົນ, ຍິງ 30 ຄົນ; ປະລິນຍາຕີ ຈຳນວນ 1.952 ຄົນ, ຍິງ698 ຄົນ; ຊັ້ນສູງ ຈຳນວນ3.396 ຄົນ, ຍິງ1.760 ຄົນ; ຊັ້ນກາງຈຳນວນ 1.755 ຄົນ, ຍິງ 902 ຄົນ,

ຊັ້ນຕົ້ນຈຳນວນ 106 ຄົນ, ຍິງ 59 ຄົນ; ບໍ່ມີຊັ້ນຈຳນວນ 4 ຄົນ, ຍິງ 2 ຄົນ.

ໃນໄລຍະ 1 ປີ ທີ່ຜ່ານມາ ແຂວງສາລະວັນ ໄດ້ເອົາໃຈໃສ່ ແລະຖືເປັນສຳຄັນວຽກງານການກໍ່ສ້າງ-ບຳລຸງພະນັກງານ ໂດຍສຸມໃສ່ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຄວາມຮູ້ທາງດ້ານວິຊາສະເພາະ, ທິດສະດີ, ພາສາຈຳນວນ 1 ຄົນ; ນອກຈາກນີ້, ບັນດາເມືອງ, ພະແນກການ-ອົງການ ກໍໄດ້ສົ່ງພະນັກງານໄປກໍ່ສ້າງ-ບຳລຸງວິຊາສະເພາະ ຢູ່ສະຖາບັນການສຶກສາຕ່າງໆ ແລະ ຍັງສົ່ງໄປກໍ່ສ້າງຢູ່ຮາກຖານຈຳນວນໜຶ່ງນຳອີກ ຄຽງຄູ່ກັບຜົນງານທີ່ຍາດມາໄດ້ນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະເຫັນວ່າຍັງມີຂໍ້ຄົງຄ້າງບາງດ້ານ ເຊັ່ນ:

ຕ່າງປະເທດ, ລະບົບໄອທີ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນແຕ່ລະໄລຍະ ຢູ່ຂັ້ນແຂວງລົງຮອດຂັ້ນບ້ານ, ໄດ້ອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂໃຫ້ພະນັກງານທຸກຂົງເຂດໃນທົ່ວແຂວງໄດ້ໄປຍົກລະດັບ ເພື່ອພັດທະນາຕົນເອງດ້ານຕ່າງໆເຊັ່ນ: ບຳລຸງທິດສະດີໄລຍະສັ້ນ, ໄດ້ສົ່ງພະນັກງານໄປສຶກສາຕໍ່ຢູ່ພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 97 ຄົນ ສົ່ງໄປສຶກສາຄົ້ນຄວ້າຢູ່ພາຍໃນຈຳນວນ 64 ຄົນ, ຍິງ 23 ຄົນ, ສົ່ງໄປຍົກລະດັບຢູ່ຕ່າງປະເທດ ໄດ້ທັງໝົດ 33 ຄົນ, ຍິງ 10 ຄົນ ໂດຍສະເພາະແມ່ນ ສສ ຫວຽດນາມ ຈຳນວນ 33 ຄົນ, ຍິງ 11 ຄົນ ແລະ ສົ່ງໄປຍົກລະດັບຢູ່ ສປ ຈີນ

1). ການກໍ່ສ້າງ-ບຳລຸງພະນັກງານ ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງໜ້າທີ່ການເມືອງ ນັບທັງດ້ານປະລິມານ ແລະ ຄຸນນະພາບ, ລະດັບການສຶກສາ, ຄວາມຮູ້ຄວາມສາມາດທາງດ້ານວິທະຍາສາດ, ການປົກຄອງ, ການຄຸ້ມຄອງເສດຖະກິດ, ການປະພຶດປະຕິບັດໃນສັງຄົມ; ການບຳລຸງ-ສ້າງຖັນແຖວພະນັກງານໃຫ້ມີຄວາມຮູ້ດ້ານວິທະຍາສາດ ເຕັກນິກຍັງບໍ່ທັນໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນ, ການຊອກຫາແຫຼ່ງທຶນຕ່າງໆຍັງເຮັດບໍ່ທັນໄດ້ດີ ຍັງມີລັກສະນະລໍຖ້າທຶນຈາກສູນກາງ ຫຼື ທຶນຊ່ວຍເຫຼືອຈາກບ່ອນອື່ນໆ.

2). ການຄັດເລືອກພະນັກງານໄປກໍ່ສ້າງ-ບຳລຸງ

ຢູ່ພາຍໃນ ແລະ ຕ່າງປະເທດຍັງເຮັດບໍ່ທັນໄດ້ດີ, ບໍ່ທັນຮັບປະກັນໄດ້ລັກສະນະສືບທອດ, ປ່ຽນແທນ, ການກໍ່ສ້າງພະນັກງານເພດຍິງ, ຊົນເຜົ່າຍັງເຮັດໄດ້ໜ້ອຍ ເຊິ່ງສັງເກດໃນຕົວເລກສະຖິຕິເຫັນວ່າພະນັກງານເພດຍິງທີ່ມີລະດັບການສຶກສາສູງ ແລະ ມີຕຳແໜ່ງບໍລິຫານສູງແມ່ນກວມອັດຕາສ່ວນໜ້ອຍ.

3). ການກໍ່ສ້າງ-ບຳລຸງພະນັກງານ ແຕ່ລະໄລຍະ ຍັງບໍ່ທັນມີແຜນກຳນົດລະອຽດຈະແຈ້ງ ເພື່ອເປັນບ່ອນອີງ, ບໍ່ທັນມີຈຸດສຸມທີ່ແນ່ນອນເຮັດໃຫ້ການກໍ່ສ້າງພະນັກງານມີແຕ່ປະລິມານບໍ່ໄດ້ຄຸນນະພາບ, ການກໍ່ສ້າງພະນັກງານ ເນັ້ນໜັກໃສ່ແຕ່ສ້າງຢູ່ສະຖາບັນຕ່າງໆບໍ່ທັນໄດ້ເອົາໃຈໃສ່ສ້າງກັບຕົວຈິງ ຫຼື ສົ່ງໄປສ້າງຢູ່ທ້ອງຖິ່ນຮາກຖານ, ຈຶ່ງເຮັດໃຫ້ພະນັກງານຈຳນວນໜຶ່ງມີລະດັບການສຶກສາສູງແຕ່ບໍ່ຮູ້ເຮັດວຽກ.

4). ການກໍ່ສ້າງພະນັກງານຈຳນວນໜຶ່ງ ຍັງມີລັກສະນະສ້າງຕາມຄ່ານິຍົມຂອງບຸກຄົນ, ສ້າງບໍ່ຖືກເປົ້າໝາຍກັບການນຳໃຊ້ພະນັກງານ.

ເພື່ອເຮັດໃຫ້ການບຳລຸງ-ກໍ່ສ້າງພະນັກງານຢູ່ແຂວງສາລະວັນມີປະສິດທິຜົນສູງຂຶ້ນໃນຕໍ່ໜ້າຄວນເອົາໃຈໃສ່ແກ້ໄຂບາງບັນຫາດັ່ງນີ້:

ໜຶ່ງ, ຄະນະພັກແຕ່ລະຂັ້ນຄວນເອົາໃຈໃສ່ສ້າງແຜນກໍ່ສ້າງ-ບຳລຸງພະນັກງານໃຫ້ລະອຽດຈະແຈ້ງ ໂດຍອີງໃສ່ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ການກໍ່ສ້າງ-ບຳລຸງພະນັກງານ ຄວນປະຕິບັດຕາມແຜນກຳນົດໄວ້ໂດຍເລີ່ມຈາກຄວາມຕ້ອງການນຳໃຊ້ພະນັກງານ ແລະ ເລີ່ມຈາກສະພາບຕົວຈິງຂອງແຕ່ລະເປົ້າໝາຍວ່າມີຄວາມຈຳເປັນຕ້ອງກໍ່ສ້າງ ແລະ ບຳລຸງ, ຈະກໍ່ສ້າງ-ບຳລຸງດ້ານໃດ ຈຶ່ງວາງແຜນກໍ່ສ້າງຢ່າງມີຈຸດສຸມ.

ສອງ, ວຽກງານກໍ່ສ້າງ-ບຳລຸງພະນັກງານ: ຄວນຕິດພັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ສ້າງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ, ກໍ່ສ້າງໃຫ້ຖືກຕາມຂັ້ນຕອນທັງຮັບປະກັນດ້ານປະລິມານ, ຄຸນນະພາບ, ໂຄງປະກອບເພດ, ເຜົ່າ, ອາຍຸກະສຽນ, ລະບຽບການທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ ແລະ ຄວນຊອກຫາແຫຼ່ງທຶນຈາກພາຍໃນ ແລະຕ່າງປະເທດໃຫ້ຫຼາຍກວ່າເກົ່າ.

ສາມ, ການກໍ່ສ້າງ-ບຳລຸງພະນັກງານ ຄວນເອົາໃຈໃສ່ທາງດ້ານຄຸນນະພາບເປັນຫຼັກ, ຄວນມີການເລືອກເຟັ້ນເອົາພະນັກງານຜູ້ທີ່ດີເດັ່ນ, ຫ້າວຫັນ, ເປັນແບບຢ່າງນຳໜ້າໄປກໍ່ສ້າງຢູ່ພາຍໃນ ແລະ ຕ່າງປະເທດ. ການສ້າງພະນັກງານຄວນສ້າງທັງພະນັກງານຂັ້ນແຂວງ, ພະນັກງານຂັ້ນເມືອງ ແລະ ຂັ້ນບ້ານໃຫ້ຮາກຖານມີກຳລັງແຮງໃນການພັດທະນາ.

ສີ່, ການກໍ່ສ້າງ-ບຳລຸງພະນັກງານ: ຄວນເອົາໃຈໃສ່ສ້າງທາງດ້ານວິຊາສະເພາະ ຄວບຄູ່ກັບການສ້າງທາງດ້ານທິດສະດີການເມືອງ ແລະ ຄຸນສົມບັດ, ທັດສະນະ, ນອກຈາກນັ້ນສ້າງໃຫ້ມີຄວາມຮູ້ດ້ານໄອທີ, ພາສາຕ່າງປະເທດ ແລະ ອື່ນໆ. ການສ້າງພະນັກງານ ຢູ່ສະຖາບັນການສຶກສາຕ້ອງຕິດພັນກັບການສ້າງໃນຂະບວນວຽກງານຕົວຈິງ ແລະ ສ້າງຢູ່ທ້ອງຖິ່ນຮາກຖານ ຈຶ່ງຈະຮັບປະກັນທາງດ້ານຄຸນນະພາບ ຂອງພະນັກງານ.

ສັງລວມແລ້ວ, ການປັບປຸງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ແຂວງສາລະວັນ ແມ່ນການສ້າງຄວາມເຂັ້ມແຂງພາຍໃນແຂວງ, ແມ່ນຄວາມຈຳເປັນຕ້ອງໄດ້ປັບປຸງໄປຄຽງຄູ່ກັບບັນດາກົງຈັກ, ຕິດພັນກັບການພັດທະນາລະບົບການຈັດຕັ້ງ, ສະນັ້ນ, ຢາກກໍ່ສ້າງ-ບຳລຸງພະນັກງານໃຫ້ມີຄຸນນະພາບຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ ກ່ອນອື່ນຕ້ອງກຳແໜ້ນທັດສະນະຊີ້ນຳຂອງພັກ, ກຳແໜ້ນທິດທາງ, ແນວທາງນະໂຍບາຍຂອງພັກທີ່ວາງໄວ້ ໂດຍສະເພາະແນວທາງກ່ຽວກັບວຽກງານພະນັກງານ ເພື່ອນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍໃຫ້ຖືກຈຸດ, ຖືກເປົ້າໝາຍ ແລະ ເງື່ອນໄຂສະພາບແວດລ້ອມຂອງແຂວງ ພ້ອມທັງຮັບປະກັນການກໍ່ສ້າງ-ບຳລຸງພະນັກງານຢູ່ແຂວງສາລະວັນ ໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ...ຯ

ຄະນະພັກຮາກຖານດ່ານສາກົນແດນສະຫວັນ ເອົາໃຈໃສ່ນຳພາ-ຊີ້ນຳວຽກງານວິຊາສະເພາະຢ່າງຕັ້ງໜ້າ

ໂດຍ: ເຄນດີ ທຳມະວອນ

ດ່ານສາກົນແດນສະຫວັນຕັ້ງຢູ່ເມືອງເຊໂປນ ແຂວງສະຫວັນນະເຂດ, ມີເຂດແດນຕິດກັບດ່ານສາກົນລາວບາວ ແຂວງກວາງຈິ ສ ສ ຫວຽດນາມ ເປັນຂົງເຂດສົ່ງເສີມການລົງທຶນ, ການຄ້າ ແລະ ການບໍລິການຕ່າງໆ ຕາມເສັ້ນທາງຜ່ານຂອງອະນຸພາກພື້ນ, ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ໂດຍມີຄະນະພັກຮາກຖານດ່ານສາກົນແດນສະຫວັນ ນຳພາ-ຊີ້ນຳຢ່າງໃກ້ຊິດ ເຊິ່ງຂຶ້ນກັບການນຳພາ-ຊີ້ນຳໂດຍກົງ ຈາກຄະນະປະຈຳພັກແຂວງສະຫວັນນະເຂດ, ປະກອບມີ 3 ໜ່ວຍພັກຂຶ້ນກັບ ຄື: ໜ່ວຍພັກຫ້ອງການບໍລິຫານດ່ານ, ໜ່ວຍພັກພາສີປະຈຳດ່ານ ແລະ ໜ່ວຍພັກ ຕມ ປະຈຳດ່ານ, ມີສະມາຊິກພັກທັງໝົດ 117 ສະຫາຍ, ຍິງ 25 ສະຫາຍ, ມີຄະນະພັກຮາກຖານ 05 ສະຫາຍ, ມາຈາກສາຍກຳລັງ ປກສ 02 ສະຫາຍ, ມາຈາກຂະແໜງການພາສີ 02 ສະຫາຍ ແລະ ມາຈາກອົງການປົກຄອງ 01 ສະຫາຍ.

ໄລຍະຜ່ານມາ ຄະນະພັກຮາກຖານດ່ານສາກົນແດນສະຫວັນ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ການເມືອງ ໂດຍສະເພາະວຽກງານວິຊາສະເພາະຂອງພະນັກງານ, ເຈົ້າໜ້າທີ່ ແລະ ບັນດາຂະແໜງການທີ່ຂຶ້ນກັບຮາກຖານພັກດ່ານສະຫວັນ ໃນຄວາມຮັບຜິດຊອບຕາມຂອບເຂດສິດ, ໜ້າທີ່ ແລະ ພາລະບົດບາດຂອງແຕ່ລະສະຫາຍ ເປັນຕົ້ນການຕິດຕາມກວດກາ ແລະ ຄຸ້ມຄອງການເຄື່ອນໄຫວດ້ານຕ່າງໆ, ເອົາໃຈໃສ່ສຶກສາອົບຮົມດ້ານການເມືອງ-ແນວຄິດ ຕິດພັນກັບການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດວາງອອກໃນແຕ່ລະໄລຍະໃຫ້ຮັບຮູ້ເຊື່ອມຊຶມ ແລະ ມີຄວາມຕື່ນຕົວເປັນເຈົ້າການປະຕິບັດແນວທາງຂອງພັກ-ລັດ, ກໍ່ຄືການຈັດຕັ້ງປະຕິບັດໜ້າທີ່ການເມືອງ, ລະບຽບກົດໝາຍ ລວມທັງການສ້າງສິ່ງອຳນວຍຄວາມສະດວກທີ່ວ່ອງໄວ, ໂປ່ງໃສໃນການໃຫ້ບໍລິການແຂກຄົນ, ຍານພາຫານະ ແລະ ສິນຄ້າເຂົ້າ-ອອກຜ່ານດ່ານສາກົນໄດ້ຕະຫຼອດປີ. ນອກນີ້ຄະນະພັກຮາກຖານດ່ານສະຫວັນ ຍັງໄດ້ສົ່ງພະນັກງານ, ສະມາຊິກພັກໄປບຳລຸງ-ກໍ່ສ້າງ ເພື່ອຍົກລະດັບທາງດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດໄດ້ 05 ສະຫາຍ, ໄປຍົກລະດັບທິດສະດີການເມືອງພາຍໃນແຂວງລະບົບຊັ້ນຕົ້ນ ໄດ້ 06 ສະຫາຍ ແລະ ຊັ້ນກາງໄດ້ 03 ສະຫາຍ. ໄດ້ມີການຮ່ວມຊີວິດການເມືອງ, ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງພະນັກງານຂະແໜງການຕ່າງໆຢູ່ພາຍໃນດ່ານເປັນປົກກະຕິ, ໄດ້ຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງບັນດາຂະແໜງການຕ່າງໆ ໂດຍປະຕິບັດຕາມລະບຽບການ, ຂອບເຂດສິດ, ໜ້າທີ່ ແລະ ພາລະບົດບາດຂອງການຈັດຕັ້ງສາຍຂວາງເປັນຜູ້ກຳນົດໃນການຄົ້ນຄວ້າ, ສັບຊ້ອນປ່ຽນຖ່າຍ ຫຼື ມີການແຕ່ງຕັ້ງພະນັກງານມາປະຈຳການຢູ່ພາຍໃນດ່ານ; ນອກນີ້ຄະນະພັກຍັງໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງຕັ້ງໜ້າ ຕໍ່ການຈັດຕັ້ງປະຕິບັດວຽກງານວິຊາສະເພາະໃນແຕ່ລະຂົງເຂດວຽກງານ ເປັນຕົ້ນ:

1. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະ

ຫງົບຕາມຂອບເຂດບໍລິເວນຊາຍແດນ ຄະນະພັກໄດ້ເອົາໃຈໃສ່ປະສານສົມທົບກັບອຳນາດການປົກຄອງບ້ານ ລຽບຕາມຊາຍແດນ, ຕຳຫຼວດກຸ່ມ, ກອງຮ້ອຍທະຫານຊາຍແດນ 320, 321 ແລະ ທະຫານຊາຍແດນເບື້ອງ ສສ ຫວຽດນາມ ຮ່ວມກັນກວດກາລາດຕະເວນ ຮັກສາຄວາມສະຫງົບໃນເຂດບໍລິເວນຊາຍແດນ ໄດ້ເຮັດໃຫ້ເຂດຊາຍແດນມີຄວາມສະຫງົບເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ດ້ວຍການຍົກສູງສະຕິຕື່ນຕົວເປັນເຈົ້າການເຂົ້າຮ່ວມຂອງສະມາຊິກພັກ, ພະນັກງານເຈົ້າໜ້າທີ່ປະຈຳດ່ານ ແລະ ພໍ່ແມ່ປະຊາຊົນທີ່ອາໃສ່ຢູ່ເຂດບໍລິເວນຊາຍແດນ ເຊິ່ງເຮັດໃຫ້ກຳລັງຂອງພວກເຮົາສາມາດສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໄດ້ ເຊັ່ນ: ສະກັດກັ້ນການລັກລອບເຂົ້າເມືອງແບບຜິດກົດໝາຍໄດ້ 15 ຄົນ, ຍິງ 03 ຄົນ, ສະກັດກັ້ນການຄ້າຂາຍເຖື່ອນທີ່ບໍ່ຖືກຕ້ອງ ແລະ ການຂົນສົ່ງຢາເສບຕິດປະເພດຢາບ້າໄດ້ 60 ພັນເມັດ ແລະ ຢາໄອ 60 ກິໂລ, ກວດພົບເປົ້າໝາຍບຸກຄົນນອນໃນບັນຊີຫ້າມເຂົ້າປະເທດມີ 18 ຄົນ, ຍິງ 04 ຄົນ, ນອກນີ້ຍັງສາມາດສະກັດກັ້ນປະກົດການຫຍໍ້ທໍ້ອີກຈຳນວນໜຶ່ງ.

2. ວຽກງານກວດກາຄົນເຂົ້າ-ອອກເມືອງ ໃນປີຜ່ານມາສາມາດກວດກາຄົນຜ່ານເຂົ້າ-ອອກເມືອງໄດ້ທັງໝົດ 304.385 ຄົນ, ຍິງ 4.397 ຄົນ, ເດັກນ້ອຍ 17.328 ຄົນ, ມີ 61 ສັນຊາດ ໃນນີ້ ກວດກາຄົນຂາເຂົ້າຜ່ານດ່ານໄດ້ທັງໝົດ 151.724 ຄົນ , ຍິງ 20.174 ຄົນ, ເດັກນ້ອຍ 8.617 ຄົນ ແລະ ກວດກາຄົນຂາອອກເມືອງຜ່ານດ່ານໄດ້ທັງໝົດ 152.661 ຄົນ, ຍິງ 20.223 ຄົນ, ເດັກນ້ອຍ 8.711 ຄົນ.

3. ວຽກງານຈັດເກັບລາຍຮັບທາງດ້ານພາສີ-ອາກອນ ໃນປີ 2022 ຂະແໜງການພາສີປະຈຳດ່ານສາມາດປະຕິບັດແຜນການຈັດເກັບລາຍຮັບມອບເຂົ້າງົບປະມານໄດ້ 160 ຕື້ກວ່າກີບ ເທົ່າກັບ 128.70% ທຽບໃສ່ແຜນການປີ 125 ຕື້ກີບ ປະຕິບັດລື່ນແຜນປີໄດ້ 35 ຕື້ກວ່າກີບ, ຕິດຕາມກວດກາ ແລະ ຄຸ້ມຄອງພາຫະນະຂົນສົ່ງສິນຄ້າຜ່ານເຂົ້າ-ອອກດ່ານໄດ້ທັງໝົດ 96.818 ຄັນ ແລະ ປະຕິບັດການເກັບຄ່າທຳນຽມພາຫະນະຜ່ານເຂົ້າ-ອອກດ່ານ ຜ່ານລະບົບທະນາຄານເປັນຄຸ້ມຄອງຈັດເກັບໄດ້ທັງໝົດ 16 ຕື້ກວ່າກີບ.

4. ວຽກງານການພົວພັນຮ່ວມມືສາກົນ: ໄດ້ເອົາໃຈໃສ່ໃນການປະຕິບັດນະໂຍບາຍພົວພັນຮ່ວມມືກັບຕ່າງປະເທດ ເພື່ອຮັດແໜ້ນຄວາມສາມັກຄີມິດຕະພາບແບບພິເສດ ກັບຄູ່ດ່ານສາກົນຄື: ດ່ານສາກົນແດນສະຫວັນ ແຂວງສະຫວັນນະເຂດ ແລະ ດ່ານສາກົນລາວບາວ ແຂວງກວາງຈີ ສສ ຫວຽດນາມ ແລະ ບັນດາຂະແໜງການຕ່າງໆພາຍໃນທັງສອງດ່ານສາກົນເຊິ່ງໄດ້ມີການຈັດຕັ້ງການພົບປະແລກປ່ຽນບົດຮຽນໃນການນຳພາ-ຊີ້ນຳ, ການພັດທະນາເສດຖະກິດ-ສັງຄົມໃນເຂດຊາຍແດນທັງສອງດ່ານຮ່ວມກັນເປັນປົກກະຕິ ໂດຍພັດປ່ຽນກັນເປັນເຈົ້າພາບໃນທຸກ 3 ເດືອນ ເພື່ອຮ່ວມກັນປຶກສາຫາລືແກ້ໄຂບັນຫາຂໍ້ຫຍຸ້ງຍາກ ແລະ ສ້າງສິ່ງອຳນວຍຄວາມດວກໃຫ້ແກ່ການຂົນສົ່ງສິນຄ້າ ແລະ ບໍລິການດ້ານຕ່າງໆໃຫ້ມີຄວາມສະດວກວ່ອງໄວກວ່າເກົ່າ.

5. ວຽກງານກໍ່ສ້າງຮາກຖານການເມືອງ ຄະນະພັກພວກເຮົາກໍ່ໄດ້ມີການຄົ້ນຄວ້າ ແລະ ຈັດສົ່ງພະນັກງານເຈົ້າໜ້າທີ່ປະຈຳດ່ານລົງເຮັດວຽກງານກໍ່ສ້າງຮາກຖານ ປະຈຳຢູ່ກຸ່ມບ້ານລຽບຊາຍແດນ ຈຳນວນ 08 ສະຫາຍ ເພື່ອຊ່ວຍອຳນາດການປົກຄອງບ້ານໃນການປັບປຸງກົນໄກບໍລິຫານວຽກງານ ຂັ້ນບ້ານ ແລະ ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບຢູ່ເຂດບ້ານລຽບຊາຍແດນ.

ທັງໝົດນັ້ນ ແມ່ນຜົນງານການນຳພາ-ຊີ້ນຳຂອງຄະນະພັກຮາກຖານ ດ່ານສາກົນແດນສະຫວັນຍາດມາໄດ້; ຕໍ່ກັບຜົນງານທີ່ຍາດມາໄດ້ຄືດັ່ງກ່າວກໍ່ຍັງມີຂໍ້ຫຍຸ້ງຍາກຈຳນວນໜຶ່ງ ທີ່ຄະນະພັກຮາກຖານດ່ານສາກົນແດນສະຫວັນຈະໄດ້ພ້ອມກັນສຸມ

ໃສ່ແກ້ໄຂ ຄື: ການປຸກລະດົມຂົນຂວາຍພໍ່ແມ່ປະຊາຊົນ, ບັນດາຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວຢູ່ເຂດຊາຍແດນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເຂດຊາຍແດນຍັງມີຈຳນວນຈຳກັດ, ການຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ໂດຍສະເພາະໃນຂອບເຂດບໍລິເວນຊາຍແດນ ຍັງພົບບັນຫາຫຍຸ້ງຍາກ, ເຈົ້າໜ້າທີ່, ພະນັກງານ ແລະ ສະມາ ຊິກພັກຈຳນວນໜຶ່ງ ຍັງຂາດຄວາມເອົາໃຈໃສ່ເປັນເຈົ້າການເຂົ້າໃນການຄົ້ນຄ້ວາເຊື່ອມຊຶມແນວທາງແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ ລວມທັງການຊອກຮູ້ຮໍ່າຮຽນເອົາບົດຮຽນໃໝ່ໆມານຳໃຊ້ເຂົ້າໃນວຽກງານວິຊາສະເພາະທີ່ຕົນຮັບຜິດຊອບຍັງເຮັດໄດ້ໜ້ອຍ, ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ໜ້າທີ່ວຽກງານຂອງຂະແໜງການຕ່າງໆເປັນຕົ້ນ ອຸປະກອນຮັບໃຊ້, ງົບປະມານ, ອາຄານ-ສະຖານທີ່ບ່ອນເຮັດວຽກຂອງພະນັກງານເຈົ້າໜ້າທີ່ຍັງຈຳກັດ.

ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ເຮັດສຳເລັດໜ້າທີ່ການເມືອງກ່ອນອື່ນໝົດ ຄະນະພັກ, ຄະນະນຳ ຈະຕ້ອງໄດ້ເອົາໃຈໃສ່ນຳພາ-ຊີ້ນຳວຽກງານປົ່ນອ້ອມ ຮອບດ້ານຢ່າງໃກ້ຊິດ ເຊັ່ນ:

- ຄະນະພັກ, ຄະນະນຳ ຕ້ອງເປັນແບບຢ່າງທີ່ດີໃຫ້ແກ່ສະມາຊິກພັກ-ພະນັກງານ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນ, ສະກັດກັ້ນຕ້ານແນວຄິດພັກພວກຈຸ້ມເຈື້ອເຊື້ອສາຍ, ນຳພາປະຕິບັດໜ້າທີ່ການເມືອງດ້ວຍຄວາມຍຸຕິທຳ ແລະ ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ.

- ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນ, ແນວທາງແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ-ລັດຢ່າງເລິກເຊິ່ງ ແລະ ຫັນເອົາແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ມາເປັນແຜນງານ, ໂຄງການອັນລະອຽດ ແທດເໝາະກັບສະພາບຕົວຈິງ, ພ້ອມທັງສຸມທຸກກຳລັງແຮງເຂົ້າໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

- ຕ້ອງຮັບປະກັນຄວາມສາມັກຄີ, ເປັກເອກະພາບໃນຄະນະພັກ, ໜ່ວຍພັກ, ແລະ ມະຫາຊົນ, ຮູ້ນຳໃຊ້ພະນັກງານ-ສະມະຊິກພັກ ຜູ້ທີ່ມີຄວາມຮູ້,

ຄວາມສາມາດ ເຂົ້າຮັບຜິດຊອບວຽກງານໃດໜຶ່ງທີ່ສຳຄັນ ທີ່ການຈັດຕັ້ງພັກ-ລັດມອບໝາຍໃຫ້ ທັງນີ້ ກໍ່ເພື່ອເປັນທຶດສອບ ແລະ ກໍ່ສ້າງເອົາພະນັກງານດັ່ງກ່າວເປັນພະນັກງານສືບທອດໃນຕໍ່ໜ້າ, ຮູ້ປຸກລະດົມສະມາຊິກພັກ ເພື່ອເປັນກຳລັງແຮງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດເປັນຢ່າງດີ.

ໃນຕໍ່ໜ້າ ຄະນະພັກຮາກຖານຈະໄດ້ສືບຕໍ່ສຸມໃສ່ປະຕິບັດບັນດາໂຄງການທີ່ພວມດຳເນີນການໃນປະຈຸບັນ ດັ່ງນີ້:

1. ສືບຕໍ່ຍົກລະດັບໂຄງການຍຸດທະສາດການທະຫານ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຂອບເຂດບໍລິເວນຊາຍແດນຮ່ວມກັບເບື້ອງກຳລັງຂອງ ສສ ຫວຽດນາມ ເພື່ອຮັບປະກັນຄວາມສະຫງົບ ເປັນລະບຽບຮຽບຮ້ອຍຕາມຊາຍແດນຂອງສອງປະເທດ.

2. ຈັດຕັ້ງປະຕິບັດໂຄງການກໍ່ສ້າງຕໍ່ເຕີມປ້ອມສະຖານທີ່ບ່ອນເຮັດວຽກຂອງເຈົ້າໜ້າທີ່ໃຫ້ບໍລິການແຈ້ງເອກະສານຂາອອກດ່ານ ແລະ ໂຄງການປັບປຸງແສງສະຫວ່າງໃນຂອບເຂດດ່ານ.

3. ຈັດຕັ້ງປະຕິບັດໂຄງການກໍ່ສ້າງສະຖານທີ່ເດີ່ນບໍລິການຈອດລົດຂົນສົ່ງສິນຄ້າຂາເຂົ້າ-ຂາອອກທຸກປະເພດ, ລະບົບສາງ ແລະ ບໍລິການຄ່ຽນຖ່າຍສິນຄ້າແບບຄົບວົງຈອນ.

4. ຈັດຕັ້ງປະຕິບັດໂຄງການສ້າງລະບົບຄຸ້ມຄອງ ແລະ ຈັດເກັບຄ່າບໍລິການຕ່າງໆແບບທັນສະໄໝຜ່ານລະບົບທະນາຄານ ແລະ ການຈັດຕັ້ງປະຕິບັດໂຄງການສຳຫຼວດ-ອອກແບບ ກໍ່ສ້າງຈຸດໃຫ້ບໍລິການຄົບວົງຈອນແບບທັນສະໄໝ ໃນເນື້ອທີ່ 32 ເຮັກຕາ ຂອງບໍລິສັດວົງໂລຈິສຕິກ ຢູ່ເຂດດ່ານສາກົນແດນສະຫວັນ ປະຈຸບັນຍັງຢູ່ໃນຂັ້ນຕອນນຳສະເໜີອະນຸມັດເຂົ້າແຜນການລົງທຶນຂອງປີແຂວງ ມີໂຄງການກໍ່ສ້າງ ແລະ ປັບປຸງຕຶກອາຄານດ່ານສາກົນໃໝ່, ໂຄງການກໍ່ສ້າງຂະຫຍາຍເສັ້ນທາງຊ້ອງການສັນຈອນຂອງລົດຂົນສົ່ງສິນຄ້າເບື້ອງຂາອອກດ່ານ, ໂຄງການປັບປຸງບູລະນະສ້ອມແປງປະຕູໂຂງດ່ານສາກົນ ແລະ ໂຄງການກໍ່ສ້າງສະໂມສອນດ່ານໃນມູນຄ່າ 10,919 ຕື້ກີບ.

ສັງລວມແລ້ວ ຜ່ານການເຄື່ອນໄຫວນຳພາ-ຊີ້ນຳວຽກງານຮອບດ້ານພາຍໃນດ່ານ ໄລຍະຜ່ານມາສາມາດຍາດໄດ້ຜົນງານອັນພົ້ນເດັ່ນຫຼາຍດ້ານເປັນຕົ້ນສາມາດກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ ທັງ 3 ໜ່ວຍພັກ 4 ປີຊ້ອນ, ສ້າງໄດ້ກົມກອງດີເດັ່ນ 01 ກົມກອງ, ພັດທະນາຮອບດ້ານພາຍໃນດ່ານ ແລະ ສາມາດສ້າງອົງການຈັດຕັ້ງມະຫາຊົນ ມີຊາວໜຸ່ມ, ແມ່ຍິງ, ກຳມະບານ ສາມາດຍາດໄດ້ຮັບໃບຢັ້ງຢືນໃນການປະຕິບັດຂໍ້ແຂ່ງຂັນ ແລະ ກຳມະບານ 5 ເປັນເຈົ້າໄດ້ 4 ປີຊ້ອນ, ແມ່ຍິງ 3 ດີ, ຊາວໜຸ່ມ 4 ບຸກ. ອັນພົ້ນເດັ່ນແມ່ນສາມາດເກັບລາຍຮັບໄດ້ລື່ນແຜນການທີ່ກຳນົດໄວ້ ທັງສາມາດສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ. ທັງໝົດນັ້ນຍ້ອນໄດ້ຮັບການນຳພາ-ຊີ້ນຳ ຢ່າງໃກ້ສິດຈາກຄະນະພັກຂັ້ນເທິງ, ອຳນາດການປົກຄອງແຂວງ ແລະ ໄດ້ຮັບການຊ່ວຍເຫຼືອຮ່ວມມືຈາກພະແນກການອ້ອມຂ້າງແຂວງ, ເມືອງ, ອຳນາດການປົກຄອງບ້ານໃກ້ຄຽງ ແລະ ທີ່ສຳຄັນກໍ່ແມ່ນຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງຄະນະພັກ, ບັນດາໜ່ວຍພັກ ຕະຫຼອດຮອດສະມາຊິກພັກ-ພະນັກງານພາຍໃນຮາກຖານພັກດ່ານສາກົນແດນສະຫວັນ ມີຄວາມສາມັກຄີເປັນເອກະພາບ ແລະ ໃຫ້ຄວາມຮ່ວມມືຢ່າງຕັ້ງໜ້າປະຕິບັດໜ້າທີ່ວຽກງານດ້ວຍຄວາມຫ້າວຫັນ ຈຶ່ງເຮັດໃຫ້ຄະນະພັກຮາກຖານດ່ານສາກົນແດນສະຫວັນປະສົບຜົນສຳເລັດ ໃນໜ້າທີ່ການເມືອງຂອງຕົນເປັນກ້າວໆມາ ເຊິ່ງເປັນຜົນງານອັນສຳຄັນ ເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແນວທາງຂອງພັກ-ລັດຖະບານກຳນົດໄວ້...ຯ

ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ເອົາໃຈໃສ່ຍົກສູງຄຸນນະພາບຖັນແຖວພະນັກງານ-ລັດຖະກອນ ເພື່ອຕອບສະໜອງໜ້າທີ່ການເມືອງ

ໂດຍ: ສາຍສະໝອນ ແກ້ວບຸນເຮຍ

ໃນພາລະກິດປ່ຽນແປງໃໝ່ ພັກເຮົາໄດ້ຖືເອົາການພັດທະນາຊັບພະຍາກອນມະນຸດເປັນບັນຫາສຳຄັນ ແນໃສ່ເຮັດໃຫ້ຖັນແຖວພະນັກງານໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງໄປຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວຂອງການປະຕິວັດ ຍ້ອນວ່າພະນັກງານມີບົດບາດສຳຄັນເປັນປັດໄຈຕັດສິນທຸກວຽກງານຂອງການປະຕິວັດ. ຍ້ອນແນວນັ້ນ, ພັກເຮົາຍາມໃດ ກໍ່ໄດ້ເອົາບັນດາພະນັກງານ ເປັນກ້ອນທຶນອັນປະເສີດ ແລະ ເປັນຕົວແທນຂອງພັກ ທັງເປັນປັດໄຈຕັດສິນທຸກໄຊຊະນະຂອງການປະຕິວັດ, ພັກເຮົາໄດ້ສຸມທຸກສະຕິປັນຍາ, ທຶນຮອນມະຫາສານ ເຂົ້າໃນການກໍ່ສ້າງ-ບຳລຸງຖັນແຖວພະນັກງານ-ລັດຖະກອນ ໃຫ້ທີ່ຄຸນນະພາບດີ, ມີຄວາມຮູ້, ຄວາມສາມາດ, ຄວາມຈົງຮັກພັກດີ, ຄຸນສົມບັດສິນທຳປະຕິວັດ, ຊື່ສັດບໍລິສຸດຕໍ່ປະຊາຊົນ,ມີຄວາມອົງອາດກ້າແກ່ນ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມອົດທົນພາກພຽນ, ມີຄວາມດຸໝັ່ນເຮັດໃຫ້ສຳເລັດທຸກໜ້າທີ່ວຽກງານ.

ດັ່ງນັ້ນ, ປະທານ ໄກສອນ ພົມວິຫານ ໄດ້ຢັ້ງຢືນວ່າ: ພະນັກງານ ແມ່ນປັດໄຈການຕັດສິນໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ເຖິງວ່າແນວທາງ, ແຜນນະໂຍບາຍຈະຖືກຕ້ອງປານໃດກໍ່ຕາມ ຖ້າຫາກພະນັກງານ, ສະມາຊິກຂາດຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດຍັງບໍ່ພຽງພໍ, ພ້ອມກັບຂາດຄວາມສາມາດໃນບັນດາວຽກງານຕ່າງໆ ເພື່ອນຳພາ ແລະ ການຈັດຕັ້ງປະຕິບັດບັນດາແນວທາງນະໂຍບາຍທີ່ຖືວ່າຖືກຕ້ອງນັ້ນ ກໍພຽງແຕ່ວ່າຢູ່ໃນເຈ້ຍຊື່ໆເທົ່ານັ້ນ.

ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໂດຍກຳນົດທິດທາງໃນວຽກງານພະນັກງານໄວ້ວ່າ: ຕ້ອງສົມທົບລະຫວ່າງການບຳລຸງສ້າງຍົກລະດັບຄວາມຮູ້ຄວາມສາມາດກັບການຊຸກຍູ້ ແລະ ປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດຂອງສະມາຊິກພັກ-ພະນັກງານ ທີ່ນອນໃນແຜນກຳນົດ, ບັນລຸຕາມມາດຕະຖານ ແລະ ເງື່ອນໄຂ ໃຫ້ແກ່ຂະບວນການເລືອກເຟັ້ນ ແລະ ຈັດວາງເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ ແລະ ຖ້າໄດ້ຮັບການສັບຊ້ອນຈັດວາງເຂົ້າສູ່ຕຳແໜ່ງງານນຳພາ-ຄຸ້ມຄອງ, ເວົ້າສະເພາະຂົງເຂດການສຶກສາ ພັກໄດ້

ໃຫ້ຄວາມສຳຄັນໃນການພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ສ້າງສັງຄົມທີ່ປະຊາຊົນເປັນເຈົ້າ, ມີປະຊາທິປະໄຕ, ສະເໝີພາບ ແລະ ຍຸຕິທຳເລີ່ມຈາກສຸມສ້າງຖັນແຖວຄູ-ອາຈານທີ່ໄດ້ມາດຕະຖານດ້ານວິຊາການ ແລະ ຈັນຍາບັນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນລະບົບການສຶກສາທຸກລະດັບ ແລະ ຮັບປະກັນໃຫ້ຄົນລາວ ມີລະດັບການສຶກສາພື້ນຖານທີ່ມີຄຸນນະພາບ ເຊິ່ງເນື້ອໃນຈິດໃຈດັ່ງກ່າວ ແມ່ນປັດໄຈສຳຄັນໃນການພັດທະນາປະເທດຊາດໃນໄລຍະໃໝ່ ທີ່ຂະແໜງການສຶກສາ ຕ້ອງໄດ້ເອົາໃຈໃສ່ຍົກສູງຄຸນນະພາບພະນັກງານຂອງຕົນ ເພື່ອສ້າງໃຫ້ໄດ້ພະນັກງານທີ່ມີຄວາມຮູ້, ຄວາມສາມາດ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ.

ໃນໄລຍະຜ່ານ, ຄະນະພັກ-ຄະນະນຳ ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ໄດ້ນຳພາ-ຊີ້ນຳຂະແໜງການທີ່ເຮັດວຽກງານພະນັກງານຢ່າງເປັນປົກກະຕິ ໃນການບຳລຸງ-ສ້າງພະນັກງານທີ່ຢູ່ໃນສິດຄຸ້ມຄອງຂອງຕົນໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການໃນຂະແໜງການ; ໂດຍໄດ້ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕໃນການຄົ້ນຄວ້າ, ເລືອກເຟັ້ນເປົ້າໝາຍໄປບຳລຸງ-ສ້າງ ບົນພື້ນຖານແຜນກຳນົດພະນັກງານທີ່ກຳນົດໄວ້, ຕົກລົງເປັນເອກະພາບພາຍໃນຄະນະພັກ ແລະ ຮັບປະກັນຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ກຳນົດໄວ້ ໂດຍເລັ່ງໃສ່ພະນັກງານຮຸ່ນກາງ, ຮຸ່ນໜຸ່ມ, ຊົນເຜົ່າ ແລະ ເພດຍິງ ໄປຄຽງຄູ່ກັບການສ້າງພະນັກງານກັບທີ່ ໃນວຽກງານຕົວຈິງຢູ່ແຕ່ລະບ່ອນເປັນສຳຄັນ ແລະ ກໍ່ສ້າງຢູ່ສະຖາບັນການສຶກສາ ທັງພາຍໃນ ແລະ ຕ່າງປະເທດ. ພ້ອມກັນນັ້ນ, ກໍ່ໄດ້ຄົ້ນຄວ້າ, ຄັດເລືອກພະນັກງານທີ່ຢູ່ໃນແຜນກຳນົດພະນັກງານ ທັນລົງກໍ່ສ້າງຮາກຖານການເມືອງ.

ປະຈຸບັນ ພະນັກງານ-ລັດຖະກອນຢູ່ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ລ້ວນແຕ່ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ວຽກງານວິຊາສະເພາະເປັນຢ່າງດີ, ສະແດງອອກທົ່ວພະແນກການມີພະນັກງານ-ລັດຖະກອນທັງໝົດ 100 ຄົນ, ຍິງ 47 ຄົນ. ໃນນັ້ນມີລະດັບວິຊາສະເພາະ: ປະລິນຍາເອກ 1 ຄົນ, ປະລິນຍາໂທ 6 ຄົນ, ຍິງ 2 ຄົນ, ປະລິນຍາຕີ 44 ຄົນ, ຍິງ 24 ຄົນ, ຊັ້ນສູງ 40 ຄົນ, ຍິງ 17 ຄົນ, ຊັ້ນກາງ 9 ຄົນ, ຍິງ 3 ຄົນ; ລະດັບທິດສະດີຊັ້ນສູງ 4 ສະຫາຍ, ຍິງ 1 ສະຫາຍ, ຊັ້ນກາງ 13 ສະຫາຍ, ຍິງ 4 ສະຫາຍ, ຊັ້ນຕົ້ນ 5 ສະຫາຍ, ຍິງ 3 ສະຫາຍ ແລະ ບຳລຸງ 45 ວັນ 7 ສະຫາຍ, ຍິງ 5 ສະຫາຍ, ອັນໄດ້ເຮັດໃຫ້ຖັນແຖວພະນັກງານເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບເທື່ອລະກ້າວ ເຊິ່ງມັນໄດ້ກາຍເປັນກຳລັງແຮງສັງລວມທີ່ມີຄຸນນະພາບ, ມີທັດສະນະຫຼັກໝັ້ນການເມືອງ, ມີຄວາມຮູ້, ຄວາມສາມາດໃນການພັດທະນາຂະແໜງການທີ່ຕົນຮັບຜິດຊອບ.

ເຖິງວ່າໃນແຕ່ລະປີພະນັກງານ-ລັດຖະກອນ ຢູ່ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ຈະໄດ້ຮັບການຍົກສູງຄຸນນະພາບດີຂຶ້ນຕາມລຳດັບກໍ່ຕາມ ແຕ່ຖ້າເມື່ອທຽບກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ກໍຍັງມີບາງຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະໄດ້ເອົາໃຈໃສ່ແກ້ໄຂດັ່ງນີ້:

1. ພະນັກງານ-ລັດຖະກອນ ຈຳນວນໜຶ່ງການຮັບຮູ້, ກຳແໜ້ນແນວທາງ, ມະຕິ, ຄຳສັ່ງ, ລະບຽບກົດໝາຍ, ນິຕິກຳຕ່າງໆທີ່ຕິດພັນກັບຄວາມຮັບຜິດຊອບ ໂດຍ

ສະເພາະແມ່ນວຽກງານສຶກສາຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນສະແດງອອກຢູ່ບ່ອນວ່າການຫັນເອົາແນວທາງ, ມະຕິ, ຄຳສັ່ງ ໄປໃຫ້ເປັນອັນລະອຽດໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນໄດ້ດີ, ມີລັກສະນະແບບລວມໆ, ຂາດຄວາມເປັນເຈົ້າການ ເຮັດໃຫ້ການປະຕິບັດວຽກງານບາງດ້ານບໍ່ທັນບັນລຸຕາມເປົ້າໝາຍທີ່ວາງໄວ້.

2. ການຕິດຕາມກວດກາຊຸກຍູ້ວຽກງານພະນັກງານບໍ່ທັນເປັນລະບົບຕໍ່ເນື່ອງ, ການຄົ້ນຄວ້າ ແລະ ຊອກຫາຈຸດດີ ເພື່ອເສີມຂະຫຍາຍ; ຊອກເຫັນຈຸດອ່ອນ-ຂໍ້ຄົງຄ້າງທີ່ເກີດຂຶ້ນກັບແນວຄິດພະນັກງານ ເພື່ອແກ້ໄຂຍັງບໍ່ທັນກັບສະພາບການ ຈຶ່ງເຮັດໃຫ້ການກໍ່ສ້າງຖັນແຖວພະນັກງານຢູ່ພະແນກສຶກສາທິການ ແລະ ກິລາ ມີຄວາມຈຳກັດ ແລະ ບໍ່ທັນກັບການຂະຫຍາຍຕົວຂອງວຽກງານດີເທົ່າທີ່ຄວນ.

3. ວຽກງານຂຶ້ນແຜນກຳນົດພະນັກງານ ປະສິດທິຜົນບໍ່ທັນສູງ, ການສ້າງແຜນກຳນົດພະນັກງານຍັງບໍ່ທັນຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງບໍ່ທັນຕິດພັນກັບແຜນກຳນົດແຕ່ລະຕຳແໜ່ງງານ; ການຕີລາຄາປະເມີນຜົນດ້ານຄຸນນະພາບຂອງແຜນກຳນົດພະນັກງານ ຍັງມີລັກສະນະຊັກຊ້າ, ໂດຍການຂາດການເກັບກຳຂໍ້ມູນ ເພື່ອປະເມີນຜົນໃນແຕ່ລະປີ, ການສັງລວມ, ວິເຄາະ, ວິໄຈແຜນກຳນົດພະນັກງານນັ້ນຍັງບໍ່ລະອຽດ, ບໍ່ຮັບປະກັນໃຫ້ພະນັກງານທັງ 03 ຮຸ່ນ.

4. ວຽກງານບຳລຸງແລະກໍ່ສ້າງພະນັກງານຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການທາງດ້ານໜ້າທີ່ການເມືອງ, ການຂຶ້ນແຜນບຳລຸງ ແລະ ກໍ່ສ້າງພະນັກງານ ຍັງມີລັກສະນະຄາດຄະເນ, ບໍ່ລະອຽດ, ການກໍ່ສ້າງພະນັກງານ ຕົວຈິງຍັງບໍ່ທັນປະຕິບັດໄດ້ຕາມແຜນຍ້ອນວ່າແຜນທີ່ສ້າງຂຶ້ນນັ້ນຍັງຂາດງົບປະມານ, ພະນັກງານ, ຄູ-ອາຈານສອນຈຳນວນໜຶ່ງຂາດຄວາມກະຕືລືລົ້ນ ບໍ່ຢາກຍົກລະດັບຕົນເອງປະປ່ອຍໃຫ້ອາຍຸຕົນເອງ, ມີແນວຄິດທໍ້ຖອຍຕໍ່ການຮ່ຳຮຽນ, ຕໍ່ການຍົກລະດັບພັດທະນາຕົນເອງ.

ເພື່ອເຮັດໃຫ້ການກໍ່ສ້າງ ແລະ ບຳລຸງຖັນແຖວພະນັກງານຢູ່ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ໃຫ້ດີຂຶ້ນສູ່ຄຸນນະພາບທີ່ຕັ້ງໜ້າກວ່າເກົ່າ, ຜູ້ຂຽນຂໍນຳເອົາບາງຄຳເຫັນ ມາແລກປ່ຽນດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳຂອງພະແນກ ຕ້ອງເອົາໃຈໃສ່ກຳແໜ້ນບັນດານິຕິກຳຕ່າງໆທີ່ຕິດພັນກັບວຽກງານພະນັກງານ ໂດຍສະເພາະແມ່ນ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 031/ກມສພ, ລົງວັນທີ 03 ມັງກອນ 2021 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ ແລະ ມະຕິ ຂອງກົມການເມືອງສູນກາງພັກ ສະບັບ ເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2021 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ເລກທີ 073/ກມສພ, ລົງວັນທີ 14 ພຶດສະພາ 2019 ມະຕິ ວ່າດ້ວຍການສ້າງແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 04/ຄບສພ, ລົງວັນທີ 30 ກັນຍາ 2021 ວ່າດ້ວຍການເພີ່ມທະວີການນຳພາຂອງພັກເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານ ເພື່ອເປັນທິດໃນການຈັດຕັ້ງປະຕິບັດໃຫ້ທິດຊີ້ນຳລວມ, ຫຼັກການ, ຂັ້ນຕອນ ແລະ ວິທີການທີ່ກຳນົດໄວ້.

ສອງ, ການກໍ່ສ້າງ ແລະ ບຳລຸງພະນັກງານຕ້ອງ

ສອດຄ່ອງກັບແຜນກຳນົດພະນັກງານ-ນຳພາຄຸ້ມຄອງ ເປັນຕົ້ນ: ການເລືອກເຟັ້ນເປົ້າໝາຍໄປກໍ່ສ້າງ ແລະ ບຳລຸງ ຍົກລະດັບຕ້ອງນອນໃນແຜນກຳນົດພະນັກງານ, ຕ້ອງ ຜ່ານການຄົ້ນຄວ້າ, ເລືອກເຟັ້ນແບບສັດຈະວິພາກ ມີ ການຕົກລົງເຫັນດີເປັນເອກະພາບຂອງຄະນະພັກ ເພື່ອ ໃຫ້ໄດ້ຕາມມາດຕະຖານຂອງພະນັກງານນຳພາ-ຄຸ້ມ ຄອງໃນລະດັບຕ່າງໆ ເພື່ອບັນຈຸເຂົ້າໃນໂຄງປະກອບ ແຕ່ລະຕຳແໜ່ງງານທີ່ກຳໄວ້.

ສາມ, ການກໍ່ສ້າງ-ບຳລຸງພະນັກງານ ຕ້ອງດຳເນີນ ໄປຢ່າງຄົບຊຸດ, ຮອບດ້ານ ແລະ ຕໍ່ເນື່ອງມີແຜນການ, ໂຄງການ ແລະ ຈຸດສຸມ, ແນໃສ່ຕອບສະໜອງຄວາມ ຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໂດຍສຸມໃສ່ ຝຶກອົບຮົມບຳລຸງ ແລະ ກໍ່ສ້າງພະນັກງານ ໃນສາມປະ ເພດຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ພະ ນັກງານວິຊາການ ແລະ ເລັ່ງໃສ່ສາມດ້ານເຊັ່ນ: ດ້ານຄຸນ ທາດການເມືອງ, ຄວາມຮູ້ທິດສະດີ, ດ້ານວິຊາສະເພາະ ແລະ ພາສາຕ່າງປະເທດ; ໃນນັ້ນ,ຖືເອົາຄຸນທາດການ ເມືອງເປັນກົກ ແລະ ເອົາການປະຕິບັດນະໂຍບາຍເປັນ ການສົ່ງເສີມ ແລະ ກະຕຸກຊຸກຍູ້ພະນັກງານ.

ສີ່, ຄະນະພັກ ຕ້ອງຖືສຳຄັນໃນການປະຕິບັດ ລະບອບນະໂຍບາຍຕໍ່ພະນັກງານ ທີ່ຖືກສົ່ງໄປກໍ່ສ້າງ- ບຳລຸງ ເພື່ອເປັນການຊຸກຍູ້ການສຶກສາໃຫ້ມີຄຸນນະພາບ, ໃນເງື່ອນໄຂສະພາບເສດຖະກິດປະຈຸບັນ. ເພື່ອໃຫ້ເຂົາ ເຈົ້າເອົາໃຈໃສ່ຕໍ່ການຄົ້ນຄວ້າໃຫ້ເລິກເຊິ່ງ, ສອດຄ່ອງ ເພື່ອເປັນການເສີມຂະຫຍາຍສະຕິປັນຍາ, ຄວາມຮູ້, ຄວາມສາມາດ ແລະ ຍົກສູງຄວາມຮັບຜິດຊອບຂອງພະ ນັກງານແຕ່ລະຄົນ ແລະ ໃນຖັນແຖວພະນັກງານເຮັດ ໃຫ້ເຂົາເຈົ້າສາມາດບັນລຸຜົນໃນການຄົ້ນຄວ້າຮ່ຳຮຽນ ຢ່າງມີຜົນສຳເລັດສູງ.

ຫ້າ, ພາຍຫຼັງທີ່ພະນັກງານ ຜ່ານການຍົກລະດັບ ຄວາມຮູ້ມາແລ້ວ ກໍ່ຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາ ແລະ ບັນຈຸຕາມຕຳແໜ່ງທີ່ເໝາະສົມກັບວິຊາທີ່ໄດ້ ຮຽນມາ ເພື່ອທົດສອບໃນຂະບວນການຕົວຈິງ ພ້ອມ ກັນນັ້ນ, ໃນແຕ່ລະປີຕ້ອງດຳເນີນການຕີລາຄາ, ປະເມີນ ຜົນການປະຕິບັດໜ້າທີ່ວຽກງານເປັນປົກກະຕິຕາມ ຂັ້ນຕອນ, ກຳນົດເວລາ ແລະ ມາດຕະຖານແຕ່ລະດ້ານ ຢ່າງເຂັ້ມງວດ, ພ້ອມທັງນຳໃຊ້ຜົນຂອງການປະເມີນ ຜົນໃນການພິຈາລະນາການແຕ່ງຕັ້ງ, ສັບຊ້ອນ, ໝູນ ວຽນ, ສັບປ່ຽນໜ້າທີ່ ແລະ ປະຕິບັດນະໂຍບາຍຕ່າງໆ ໃຫ້ແກ່ພະນັກງານຕາມລະບຽບການ.

ສັງລວມແລ້ວ, ຍົກສູງຄຸນນະພາບຖັນແຖວພະ ນັກງານ-ລັດຖະກອນ ແມ່ນວຽກງານຍຸດທະສາດ ທັງມີ ຄວາມຈຳເປັນ ແລະ ຮີບດ່ວນ, ທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ມີແຜນການ, ມີຈຸດປະສົງ ແລະ ເປົ້າໝາຍຈະແຈ້ງ. ສະນັ້ນ, ຄະນະພັກ ແຕ່ລະຂັ້ນ ຕ້ອງເພີ່ມທະວີເອົາໃຈໃສ່ໃນການຍົກສູງຄຸນນະພາບພະ ນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ບໍ່ວ່າທາງ ດ້ານທິດສະດີ, ວິຊາສະເພາະ ແລະ ຂະບວນການຕົວຈິງ ເພື່ອຮັບປະກັນໃຫ້ພະນັກງານມີຫຼັກໝັ້ນການເມືອງ, ມີ ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້, ຄວາມສາມາດ, ມີແບບແຜນວິທີເຮັດວຽກທີ່ຖືກຕ້ອງ ສາມາດຕອບສະ ໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການ ເມືອງ ປະກອບສ່ວນເຂົ້າໃນການພັດທະນາຂະແໜງ ການຂອງຕົນ ໃຫ້ມີຄວາມເຂັ້ມແຂງ,ໜັກແໜ້ນ ຂຶ້ນ ເລື້ອຍໆ...ຯ

ຍົກສູງບົດບາດພະນັກງານນຳພາ-ຄຸ້ມຄອງເພດຍິງ ຢູ່ແຂວງຜົ້ງສາລີ

ໂດຍ: ສຸກສະດາ ສຸລີໃຈ

ພັກ ແລະ ລັດຖະບານເຮົາຍາມໃດກໍ່ເຫັນໄດ້ບົດບາດຄວາມສຳຄັນຂອງແມ່ຍິງ ແລະ ເອົາໃຈໃສ່ຍົກສູງບົດບາດພະນັກງານນຳພາ-ຄຸ້ມຄອງເພດຍິງ, ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນໂດຍຕະຫຼອດມາ, ເພາະພະນັກງານເພດຍິງແມ່ນໄດ້ປະກອບສ່ວນໃນທຸກຂົງເຂດວຽກງານ, ທັງເປັນກຳລັງແຮງພິເສດທີ່ຜະລິດກຳລັງໃຫ້ແກ່ວຽກງານຕ່າງໆຢ່າງມີປະສິດທິຜົນສູງ. ດ້ວຍເຫດນັ້ນ ພັກ-ລັດຖະບານ, ຈຶ່ງສຶກສາອົບຮົມ, ຍົກລະດັບ-ຄວາມຮູ້, ຄວາມສາມາດ, ສົ່ງໄປບຳລຸງ-ກໍ່ສ້າງທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງສ້າງເງື່ອນໄຂໃຫ້ພະນັກງານນຳພາ-ຄຸ້ມຄອງເພດຍິງ, ໄດ້ເຂົ້າຮ່ວມໃນທຸກຂະບວນການວຽກງານຂອງລັດ ແລະ ສັງຄົມ ຢ່າງກວ້າງຂວາງ, ໂດຍບໍ່ມີຂີດຈຳກັດ, ເຊິ່ງໃນສະໄໝຕໍ່ສູ້ກູ້ຊາດຕ້ານຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ພັກເຮົາໄດ້ມີແນວທາງນະໂຍບາຍທີ່ຖືກຕ້ອງຈຶ່ງເຮັດໃຫ້ແມ່ຍິງຫຼາຍສະຫາຍສະໝັກໃຈເຂົ້າຮ່ວມຕໍ່ສູ້ຄຽງບ່າຄຽງໄຫຼ່ກັບເພດຊາຍ ຢູ່ໃນສະໜາມຮົບຢ່າງອົງອາດກ້າຫານ, ໄດ້ອຸທິດຊີວິດ, ເສຍສະຫຼະເລືອດເນື້ອຂອງຕົນ ເພື່ອອຸດົມການຂອງພັກ, ໃນເງື່ອນໄຂໃໝ່ພັກ ແລະ ລັດຖະບານເຮົາກໍ່ໄດ້ສຸມໃສ່ຍົກສູງບົດບາດຂອງສູນກາງສະຫະພັນແມ່ຍິງລາວ ໃຫ້ເປັນໃຈກາງຄົ້ນຄວ້າຍຸດທະສາດລວມກ່ຽວກັບການພັດທະນາແມ່ຍິງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໃນຂົງເຂດວຽກງານຕ່າງໆໃນທົ່ວປະເທດ; ໄດ້ຫັນສິດຂອງແມ່ຍິງເຂົ້າໃນລັດຖະທຳມະນູນ ແລະ ສືບຕໍ່ຫັນເປັນແຜນດຳເນີນງານແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ; ຍ້ອນແນວນັ້ນ, ຈຶ່ງເຮັດໃຫ້ຖັນແຖວພະນັກງານນຳພາ-ຄຸ້ມຄອງເພດຍິງໃນທຸກຂົງເຂດວຽກງານ ມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ເປັນຕົ້ນແມ່ນມີບົດບາດໃນຂົງເຂດການເມືອງ ໄດ້ຮັບການເຊີດຊູສູງຂຶ້ນ, ມາຮອດປະຈຸບັນພະນັກງານເພດຍິງກາຍເປັນພະນັກງານຫຼັກແຫຼ່ງ, ດຳລົງຕຳແໜ່ງເປັນພະນັກງານນຳພາ-ຄຸ້ມຄອງນັບມື້ນັບເພີ່ມຂຶ້ນ, ຢູ່ໃນກົງຈັກການຈັດຕັ້ງຂອງພັກ-ລັດແຕ່ລະຂັ້ນ, ນັບແຕ່ຂັ້ນກຳມະການກົມການເມືອງສູນກາງພັກ ແລະ ກຳມະການສູນກາງພັກ, ລວມເຖິງຮາກຖານທ້ອງຖິ່ນນັບມື້ນັບສູງຂຶ້ນເລື້ອຍໆ.

ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ສຸມໃສ່ໃນການພັດທະນາຊັບພະຍາກອນມະນຸດໃນເງື່ອນໄຂໃໝ່ແມ່ນຕ້ອງສ້າງໃຫ້ພະນັກງານນຳພາ-ຄຸ້ມຄອງໃຫ້ມີຄວາມພ້ອມໃນທຸກດ້ານ, ສາມາດກາຍເປັນກຳລັງຊຸກດັນຕົ້ນຕໍໃຫ້ແກ່ການພັດທະນາປະເທດຊາດ. ບົນຈິດໃຈດັ່ງກ່າວຕ້ອງສຸມໃສ່ບຳລຸງຍົກລະດັບຢ່າງຕໍ່ເນື່ອງຖັນແຖວນັກຮຽນຮູ້-ປັນຍາຊົນ ແລະ ແຮງງານເຕັກນິກທີ່ມີແລ້ວກັບການເພີ່ມທະວີການກໍ່ສ້າງ, ບຳລຸງແຫຼ່ງຊັບພະຍາກອນບຸກຄົນໃໝ່ຢ່າງຕໍ່ເນື່ອງ ສອດຄ່ອງກັບທິດພັດທະນາບັນດາຄວາມອາດສາມາດບົ່ມຊ້ອນຂອງປະເທດເພື່ອຮັບປະກັນການສະໜອງບຸກຄະລາກອນທີ່ມີຄຸນນະພາບ ໃຫ້ພາກລັດ.

ຍ້ອນເຫັນໄດ້ບົດບາດຄວາມສໍາຄັນດັ່ງກ່າວ, ຄະນະພັກ, ອົງການປົກຄອງແຂວງຜົ້ງສາລີ, ໄດ້ເອົາໃຈໃສ່ເສີມຂະຫຍາຍບົດບາດ ແລະ ຍົກສູງບົດບາດພະນັກງານເພດຍິງ ໃຫ້ໄດ້ດໍາລົງຕໍາແໜ່ງເປັນພະນັກງານນໍາພາ-ຄຸ້ມຄອງໃນຂົງເຂດພັກ, ລັດ, ຂົງເຂດແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນຢ່າງຕໍ່ເນື່ອງ, ພ້ອມທັງ, ເອື້ອອໍານວຍໃຫ້ເຂົ້າຮ່ວມທຸກຂະບວນການວຽກງານຄືກັນກັບເພດຊາຍຕະຫຼອດມາ. ຕິດພັນກັບການບໍາລຸງ-ກໍ່ສ້າງດ້ວຍຫຼາຍຮູບການ, ຫຼາຍວິທີການ, ເປັນຕົ້ນແມ່ນສົ່ງໄປຝຶກອົບຮົມ, ຍົກລະດັບດ້ານທິດສະດີ, ວິຊາສະເພາະ, ເຕັກໂນໂລຊີ, ພາສາຕ່າງປະເທດ ແລະ ອື່ນໆ ຢູ່ພາຍໃນ ແລະ ຕ່າງປະເທດ ແນໃສ່ເຮັດໃຫ້ພະນັກງານນໍາພາ-ຄຸ້ມຄອງເພດຍິງ ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການຈັດຕັ້ງປະຕິບັດວຽກງານທີ່ພັກ-ລັດໄດ້ມອບໝາຍໃຫ້, ມີການນໍາພາ-ຊີ້ນໍາທີ່ດີ, ໄປຕາມພາລະບົດບາດ, ສິດໜ້າທີ່ຂອງຕົນ, ພ້ອມທັງຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະໄດ້ເປັນຢ່າງດີ.

ຕະຫຼອດໄລຍະທີ່ຜ່ານມາ ຄະນະພັກ, ອົງການປົກຄອງແຂວງຜົ້ງສາລີ ໄດ້ເອົາໃຈໃສ່ຕໍ່ກັບການຍົກສູງບົດບາດພະນັກງານເພດຍິງ, ເຫັນວ່າພະນັກງານເພດຍິງ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ແລະ ກາຍເປັນພະນັກງານນໍາພາ-ຄຸ້ມຄອງຢ່າງມີທ່າກ້າວຂະຫຍາຍຕົວສູງຂຶ້ນ ໃນທຸກຂົງເຂດວຽກງານແຕ່ແຂວງລົງຮອດຂັ້ນເມືອງ.

ປະຈຸບັນ, ມີພະນັກງານລັດຖະກອນ ເພດຍິງ 3,362 ຄົນ, ສະມາຊິກພັກສົມບູນ 3,766 ສະຫາຍ, ສະມາຊິກພັກສໍາຮອງ 186, ລະດັບວິຊາສະເພາະ ປະລິນຍາເອກ 1 ສະຫາຍ, ປະລິນຍາໂທ 9 ສະຫາຍ, ປະລິນຍາຕີ 1,014 ສະຫາຍ, ຊັ້ນສູງ 1,503 ສະຫາຍ, ຊັ້ນກາງ 732 ສະຫາຍ, ຊັ້ນຕົ້ນ 103 ສະຫາຍ. ລະດັບທິດສະດີ, ລະບົບບໍາລຸງ ມີ 101 ສະຫາຍ, ຂັ້ນຕົ້ນ 20 ສະຫາຍ, ຂັ້ນກາງ 81 ສະຫາຍ, ຂັ້ນສູງ 26 ສະຫາຍ. ກໍາມະການພັກແຂວງ ຍິງ 4 ສະຫາຍ, ເລຂາໜ່ວຍພັກ 6 ສະຫາຍ, ຮອງເລຂາໜ່ວຍພັກ 10 ສະຫາຍ. ຄະນະໜ່ວຍພັກ 16 ສະຫາຍ.

ພະນັກງານເພດຍິງດໍາລົງຕໍາແໜ່ງເປັນຫົວໜ້າພະແນກ ຈໍານວນ 4 ສະຫາຍ, ຮອງຫົວໜ້າພະແນກ 15 ສະຫາຍ, ຫົວໜ້າຂະແໜງ 109 ສະຫາຍ, ຮອງຫົວໜ້າຂະແໜງ 109 ສະຫາຍ, ຫົວໜ້າຫ້ອງການຂັ້ນເມືອງ 33 ສະຫາຍ, ຫົວໜ້າໜ່ວຍງານ 182 ສະຫາຍ, ຮອງຫົວໜ້າຫ້ອງການຂັ້ນເມືອງ 33 ສະຫາຍ, ເປັນສະມາຊິກສະພາແຫ່ງຊາດ 1 ສະຫາຍ ແລະ ສະພາປະຊາຊົນແຂວງ 7 ສະຫາຍ.[1]

ພະນັກງານນໍາພາ-ຄຸ້ມຄອງເພດຍິງ ຢູ່ແຂວງຜົ້ງສາລີ ໃນໄລຍະຜ່ານມາເຖິງວ່າມີຜົນສໍາເລັດຫຼາຍດ້ານກໍ່ຕາມ, ແຕ່ກໍ່ຍັງມີຂໍ້ຄົງຄ້າງບາງດ້ານດັ່ງນີ້:

1.) ການນໍາພາ-ຊີ້ນໍາຂອງຄະນະພັກ, ຄະນະນໍາໃນບາງຂົງເຂດຕໍ່ກັບການຍົກສູງບົດບາດພະນັກງານເພດຍິງ, ກໍຄືພະນັກງານນໍາພາ-ຄຸ້ມຄອງເພດຍິງຍັງບໍ່ທັນເຮັດໄດ້ດີ ແລະ ແທດເຖິງຕົວຈິງເທົ່າທີ່ຄວນ. ເປັນຕົ້ນແມ່ນ, ຄະນະພັກບາງຂົງເຂດ ບໍ່ຢາກຍົກສູງບົດບາດພະນັກງານເພດຍິງ ເຊິ່ງສະແດງອອກໃນການດໍາລົງຕໍາແໜ່ງຂອງແຕ່ລະປະເພດ ຕໍາແໜ່ງງານໃນແຕ່ລະຂັ້ນກໍ່ບໍ່ໄດ້ຮັບໂອກາດຄືກັນກັບເພດຊາຍ, ການຂຶ້ນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງຍັງບໍ່ທັນເຮັດໄດ້ດີ ແລະ ເປັນຮູບປະທໍາ, ບໍ່ໄປຕາມແຜນການທີ່ໄດ້ກໍານົດໄວ້.

2). ຄວາມເປັນເຈົ້າການຂອງອົງການຈັດຕັ້ງສະຫະພັນແມ່ຍິງຍັງບໍ່ທັນສູງເທົ່າທີ່ຄວນ. ໃນນາມເປັນເສນາທິການໃຫ້ແກ່ຄະນະພັກແຂວງ, ເປັນຕົວແທນ ແລະ ເປັນທີ່ເພິ່ງໃຫ້ແມ່ຍິງບັນດາເຜົ່າກໍ່ຄືພະນັກງານເພດຍິງໃນກົງຈັກການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນ, ໂດຍສະເພາະການຊຸກຍູ້ໃຫ້ຄະນະພັກ-ຄະນະນໍາແຕ່ລະຂັ້ນຍົກສູງ

ບົດບາດພະນັກງານເພດຍິງ ແລະ ພະນັກງານນໍາພາ-ຄຸ້ມຄອງເພດຍິງ ໃຫ້ມີຕໍາແໜ່ງສູງຂຶ້ນນັ້ນຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ, ບໍ່ໄປຕາມພາລະບົດບາດບາດ, ສິດ, ໜ້າທີ່ຂອງຕົນ ແລະ ຍັງບໍ່ທັນເຮັດໄດ້ຕາມແຜນພັດທະນາ, ແຜນງານ, ໂຄງການຂອງສູນກາງສະຫະພັນແມ່ຍິງລາວກໍ່ຄືຂອງສະຫະພັນແມ່ຍິງແຂວງໄດ້ກໍານົດໄວ້.

3). ການບໍາລຸງ-ກໍ່ສ້າງພະນັກງານນໍາພາ-ຄຸ້ມຄອງເພດຍິງຍັງບໍ່ທັນເປັນລະບົບຄົບຊຸດ, ເປັນຕົ້ນແມ່ນການສ້າງເງື່ອນໄຂໃຫ້ພະນັກງານນໍາພາ-ຄຸ້ມຄອງເພດຍິງຍັງມີໜ້ອຍ, ການສົ່ງໄປຍົກລະດັບຄວາມຮູ້-ຄວາມສາມາດ ທາງດ້ານວິຊາສະເພາະ, ເຕັກນິກ, ທິດສະດີ ແລະ ອື່ນໆ ຢູ່ທາງພາຍໃນ ແລະ ຕ່າງປະເທດຍັງມີລັກສະນະຈໍາກັດ. ການບໍາລຸງກໍ່ສ້າງພະນັກງານເພດຍິງ ໃຫ້ດໍາລົງຕໍາແໜ່ງເປັນພະນັກງານນໍາພາ-ຄຸ້ມຄອງເພດຍິງເຂົ້າໃນຂົງເຂດພັກ-ລັດ, ອົງການຈັດຕັ້ງ ແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນຂອງແຂວງຜົ້ງສາລີ ບໍ່ທັນກວ້າງຂວາງ ແລະ ບໍ່ໄປຕາມທິດຂອງພັກ ຈຶ່ງເຮັດໃຫ້ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຕາມແນວທາງຂອງພັກ-ລັດໃນແຕ່ລະໄລຍະ.

4). ພະນັກງານນໍາພາ-ຄຸ້ມຄອງເພດຍິງ ຍັງຂາດຄວາມເປັນແບບຢ່າງນໍາໜ້າ ແລະ ບໍ່ທັນເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ບວກໃສ່ແບບແຜນການນໍາພາ-ຊີ້ນໍາ ເຮັດວຽກງານຕົວຈິງໃນບາງບ່ອນຍັງບໍ່ທັນມີປະສິດທິຜົນສູງ ແລະ ເຮັດບໍ່ສໍາເລັດຕາມການມອບໝາຍຂອງຄະນະພັກຂັ້ນເທິງ, ຍິ່ງໄປກ່ວານັ້ນພະນັກງານນໍາພາ-ຄຸ້ມຄອງເພດຍິງ ໃນບາງຂັ້ນ, ບາງຈໍານວນຍັງມີແນວຄິດເອື່ອຍອີງ, ປຽບທຽບຊົ່ວຊາ ແລະ ຂາດການຊອກຮູ້ຮໍ່າຮຽນໃນວຽກງານທີ່ຕົນຮັບຜິດຊອບ, ພ້ອມດຽວກັນນັ້ນ ບໍ່ຢາກຄົ້ນ, ບໍ່ຢາກຄິດ, ບໍ່ຢາກຊອກຮູ້ຮໍ່າຮຽນນໍາຜູ້ທີ່ມີປະສົບການຫຼາຍກ່ວາ. ພະນັກງານນໍາພາ-ຄຸ້ມຄອງ ບາງສະຫາຍຍັງຫ່າງເຫີນມະຫາຊົນ, ບໍ່ຢາກຟັງຄໍາຄິດເຫັນ, ການຕໍານິ, ຕິຊົມຂອງໝູ່ມະຫາຊົນ ຫຼື ເພື່ອນຮ່ວມງານນໍາກັນ, ເອົາຄວາມຄິດຂອງໂຕເປັນໃຫຍ່ໃນການຕັດສິນບັນຫາວຽກງານຕ່າງໆ. ມີແນວຄິດລັກສະນະອ້າຍດຽວ, ຊ້າຍຈັດຂວາໂພດ, ເວົ້າຫຼາຍເຮັດໜ້ອຍ, ບໍ່ຢາກກໍ່ສ້າງພະນັກງານເພື່ອນຮ່ວມງານດຽວກັນ, ການຕັດສິນ ແລະ ແກ້ໄຂບັນຫາໃນດ້ານວຽກງານຕ່າງໆ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.

ເຖິງວ່າໃນໄລຍະທີ່ຜ່ານມາຄະນະພັກ, ຄະນະນໍາແຕ່ລະຂັ້ນໄດ້ເອົາໃຈໃສ່ ໃນການຍົກສູງບົດບາດພະນັກງານນໍາພາ-ຄຸ້ມຄອງເພດຍິງ ແລະ ມີຜົນສໍາເລັດຫຼາຍດ້ານກໍ່ຕາມ, ເຫັນວ່າຍັງຈະໄດ້ເອົາໃຈໃສ່ບາງດ້ານດັ່ງຕໍ່ໄປນີ້.

ໜຶ່ງ: ຄະນະພັກ, ຄະນະນໍາໃນແຕ່ລະຂັ້ນຈະໄດ້ເອົາໃຈໃສ່ຕໍ່ກັບການຍົກສູງບົດບາດພະນັກງານເພດຍິງ, ກໍ່ຄືພະນັກງານນໍາພາ-ຄຸ້ມຄອງເພດຍິງໃຫ້ສູງຂຶ້ນກ່ວາເກົ່າ ແລະ ແທດເຖິງຕົວຈິງຢ່າງມີສັດຈະວິພາກ ເພື່ອໃຫ້ພະນັກງານເພດຍິງ, ມີສ່ວນຮ່ວມ ແລະ ໄດ້ຮັບໂອກາດໃນການເຂົ້າເຖິງທຸກຂະບວນການວຽກງານຕ່າງໆ ແລະ ດໍາລົງຕໍາແໜ່ງຂອງແຕ່ລະປະເພດຕໍາແໜ່ງງານໃນແຕ່ລະຂັ້ນຄືກັນກັບເພດຊາຍ, ສຸມໃສ່ປັບປຸງນັບຕັ້ງແຕ່ການຂຶ້ນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງໃຫ້ຖືກຕ້ອງ ແລະ ໄປຕາມແຜນການທີ່ໄດ້ກໍານົດໄວ້, ເພື່ອແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນທຸກຂົງເຂດມີພະນັກງານເພດຍິງດໍາລົງຕໍາແໜ່ງເປັນພະນັກງານນໍາພາ-ຄຸ້ມຄອງ ຊີ້ນໍາວຽກງານຫຼາຍຂຶ້ນກ່ວາເກົ່າ ແລະ ໄປລວງດຽວ, ຕາມທິດຂອງພັກ-ລັດ, ກໍ່ຄືອໍານາດການປົກຄອງໃນແຕ່ລະຂັ້ນວາງອອກ.

ສອງ: ອົງການຈັດຕັ້ງສະຫະພັນແມ່ຍິງແຂວງຕ້ອງໄດ້ເອົາໃຈໃສ່ເຮັດໜ້າທີ່ຂັບເຄື່ອນຕາມພາລະບົດບາດຂອງຕົນຢ່າງເຕັມສ່ວນ ເພື່ອຊຸກຍູ້ໃຫ້ຄະນະພັກ-ຄະນະນໍາແຕ່ລະຂັ້ນເອົາໃຈບໍາລຸງສ້າງ ແລະ ຍົກສູງບົດບາດພະນັກງານເພດຍິງໃຫ້ກາຍເປັນພະນັກງານນໍາພາ-ຄຸ້ມຄອງໃນທຸກເຂດວຽກງານຂອງພັກ-ລັດ ແຕ່ແຂວງລົງ

ຮອດຂັ້ນເມືອງ, ຫຼາຍຂຶ້ນກ່ວາເກົ່າ ເພື່ອແນໃສ່ໃຫ້ບັນລຸຕາມຈຸດປະສົງ, ລະດັບຄາດໝາຍຕາມແຜນພັດທະນາ, ແຜນງານ, ໂຄງການ ຂອງສະຫະພັນແມ່ຍິງແຂວງໄດ້ກຳນົດໄວ້. ພ້ອມທັງ, ສຶກສາອົບຮົມໃຫ້ພະນັກງານເພດຍິງມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມຈົ່ງຮັກພັກດີຕໍ່ປະເທດຊາດ ແລະ ພາລະກິດຂອງຕົນ. ສຸມໃສ່ພັດທະນາພະນັກງານເພດຍິງຢ່າງຮອບດ້ານ, ທັງສົ່ງເສີມໃຫ້ແມ່ຍິງມີບາດລ້ຽວໃໝ່ໃນສັງຄົມ, ແກ້ໄຂໃຫ້ພະນັກງານນຳພາ-ຄຸ້ມຄອງເພດຍິງໄດ້ຮັບໂອກາດ ແລະ ມີເງື່ອນໄຂໄດ້ຮັບການພັດທະນາດີຂຶ້ນຄືກັບເພດຊາຍໄປຕາມທິດຂອງພັກວາງອອກໃນແຕ່ລະໄລຍະ.

ສາມ: ຄະນະພັກແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ການບຳລຸງ-ກໍ່ສ້າງພະນັກງານນຳພາ-ຄຸ້ມຄອງເພດຍິງຢ່າງເປັນລະບົບຕໍ່ເນື່ອງ, ເປັນຕົ້ນແມ່ນ ສ້າງທຸກເງື່ອນໄຂ ແລະ ເອື້ອອຳນວຍໃຫ້ພະນັກງານນຳພາ-ຄຸ້ມຄອງເພດຍິງໄດ້ຮັບໂອກາດ ແລະ ໄປຕາມແຜນຍຸດທະສາດທີ່ໄດ້ກຳນົດໄວ້, ທັງສົ່ງໄປຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ, ທິດສະດີ ແລະ ອື່ນໆຢູ່ທັງພາຍໃນ ແລະ ຕ່າງປະເທດໃຫ້ນັບມື້ຫຼາຍຂຶ້ນ. ແນໃສ່ສ້າງພະນັກງານເພດຍິງຕາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງເພດຍິງໃນແຕ່ລະຂັ້ນ ແລະ ໃຫ້ດຳລົງຕຳແໜ່ງເປັນພະນັກງານນຳພາ-ຄຸ້ມຄອງເພດຍິງ ເຂົ້າໃນຂົງເຂດພັກ-ລັດ, ອົງການຈັດຕັ້ງແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນໃຫ້ນັບມື້ເພີ່ມຂຶ້ນເລື້ອຍໆ ແລະ ທຽມທັນກັບເພດຊາຍ.

ສີ່: ພະນັກງານນຳພາ-ຄຸ້ມຄອງເພດຍິງ ຕ້ອງໄດ້ເອົາໃຈໃສ່ເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນຄົນອື່ນ, ພ້ອມທັງເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ມີອັນພົ້ນເດັ່ນສູງຂຶ້ນກ່ວາເກົ່າ. ໂດຍມີແບບແຜນການນຳພາ-ຊີ້ນຳທີ່ດີ ເພື່ອເຮັດວຽກງານຢ່າງມີປະສິດທິຜົນ ແລະ ເຮັດສຳເລັດຕາມການມອບໝາຍຂອງຄະນະພັກຂັ້ນເທິງ, ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ ແລະ ດຸໝັ່ນໃນການຄົ້ນຄ້ວາຮ່ຳຮຽນໃນດ້ານຕ່າງໆຢ່າງຕັ້ງໜ້າ, ພະນັກງານນຳພາ-ຄຸ້ມຄອງເພດຍິງຕ້ອງຕີຖອຍທັດສະນະແນວຄິດເອື່ອຍອີງ, ປຽບທຽບຊັ່ງຊາ ແລະ ບໍ່ຢາກຊອກຮູ້ຮ່ຳຮຽນໃນດ້ານວຽກງານຕ່າງໆ, ພ້ອມທັງ, ຖືເອົາມະຫາຊົນເປັນກົກ ແລະ ຟັງຄຳຄິດເຫັນ, ການຕຳນິຕິຊົມຂອງໝູ່ມະຫາຊົນ ເພື່ອປັບປຸງ ແລະ ມາພັດທະນາ.

ຫ້າ: ຄະນະພັກ-ຄະນະນຳແຕ່ລະຂັ້ນຕ້ອງເອົາໃຈໃສ່ຍົກສູງບົດບາດພະນັກງານເພດຍິງ ແລະ ພະນັກງານນຳພາ-ຄຸ້ມຄອງເພດຍິງດ້ວຍການສົ່ງໄປບຳລຸງກໍ່ສ້າງ ແລະ ຍົກສູງຄວາມຮູ້, ຄວາມສາມາດ, ທາງດ້ານວິຊາສະເພາະຢູ່ທາງພາຍໃນ ແລະ ຕ່າງປະເທດຢ່າງເປັນລະບົບຕໍ່ເນື່ອງ. ເພື່ອແນໃສ່ເຮັດໃຫ້ພະນັກງານນຳພາ-ຄຸ້ມຄອງເພດຍິງໃນທຸກຂົງເຂດວຽກງານຂອງພັກ-ລັດໃນແຕ່ລະຂັ້ນ ມີຄວາມຮູ້, ຄວາມສາມາດຢ່າງກວ້າງຂວາງ.

ສັງລວມແລ້ວ, ການຍົກສູງບົດບາດພະນັກງານນຳພາ-ຄຸ້ມຄອງເພດຍິງ ແມ່ນວຽກງານຍຸດທະສາດໜຶ່ງທີ່ສຳຄັນຂອງພັກ ເພື່ອແນໃສ່ເຮັດໃຫ້ແມ່ຍິງມີບົດບາດໃນສັງຄົມ, ມີຄວາມສະເໝີພາບທຽບທັນກັບເພດຊາຍທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ເຮັດໃຫ້ພະນັກງານເພດຍິງກາຍເປັນພະນັກງານນຳພາ-ຄຸ້ມຄອງນັບມື້ຫຼາຍຂຶ້ນ, ທັງເຮັດໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ພັດທະນາຕົນເອງຢ່າງຮອບດ້ານ ເພື່ອສາມາດໄປນຳພາຈັດຕັ້ງປະຕິບັດວຽກງານໃນຂົງເຂດຕົນຮັບຜິດຊອບຢ່າງມີປະສິດທິຜົນ, ບົນພື້ນຖານຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ໃຫ້ເກີດດອກອອກຜົນຢ່າງແທ້ຈິງ ໃຫ້ແກ່ພັກ-ລັດ ໃຫ້ສົມກັບວ່າແມ່ຍິງລາວມີຄວາມອົງອາດກ້າຫານ, ສາມາດນຳພາ-ຊີ້ນຳ ໃນທຸກວຽກງານຢ່າງມີຄວາມຮັບຜິດຊອບສູງ ແລະ ເຮັດສຳເລັດຕາມຄະນະພັກຂັ້ນເທິງໄດ້ມອບໝາຍໃຫ້ ແລະ ໄວ້ວາງໃຈ...໗

ສະຫາຍ ຄຳເຜີຍ ອິນທິແສງ ຕົວແບບໃນການປູກໝາກກ້ຽງເປັນສິນຄ້າ

ໂດຍ: ຄຳສະຫວັນ ພິມມະວົງ

ເພື່ອສືບຕໍ່ສ້າງພື້ນຖານເສດຖະກິດຂອງເມືອງໃຫ້ມີຄວາມເຂັ້ມແຂງ ຕາມທິດທາງລວມຂອງພັກທີ່ໄດ້ກຳນົດໄວ້ແຕ່ລະໄລຍະ ແລະ ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວ ອີງຄະນະພັກເມືອງວິລະບູລີ ຄັ້ງທີ V ທີ່ກຳນົດໄວ້ວ່າ: ສຸມໃສ່ນຳພາການຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າຕາມກົນໄກເສດຖະກິດຕະຫຼາດທີ່ມີການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ນຳໃຊ້ພາກສ່ວນເສດຖະກິດຕ່າງໆຢ່າງເປັນລະບົບໃນນັ້ນເອົາໃຈໃສ່ສົ່ງເສີມເສດຖະກິດຄອບຄົວຂອງຊາວກະສິກອນເປັນພື້ນຖານ, ສູ້ຊົນຜະລິດເຂົ້າ ແລະ ສະບຽງອາຫານຕ່າງໆໃຫ້ກຸ້ມກິນ ແລະ ກາຍເປັນເປັນສິນຄ້າ, ຂຸດຄົ້ນທ່າແຮງບົ່ມຊ້ອນຂອງເມືອງໃນທຸກດ້ານຖືເອົາໂຄງປະກອບເສດຖະກິດກະສິກຳ-ປ່າໄມ້ຕິດພັນກັບການບໍລິການ ເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກຳໃນອະນາຄົດ; ຂຸດຄົ້ນທ່າແຮງບົ່ມຊ້ອນ ຂອງເມືອງເປັນຕົ້ນແມ່ນການລ້ຽງສັດໃຫຍ່, ປູກມັນຕົ້ນ, ໝາກກ້ຽງ, ໝາກນ໋ອດ, ພິກໄທ, ກ້ວຍ, ຢາງພາລາ, ຢາງບົງ ແລະ ໄມ້ຊະນິດຕ່າງໆ, ຂະຫຍາຍເນື້ອທີ່ ແລະ ຍົກລະດັບສະມັດຕະພາບການຜະລິດເຂົ້ານາດ້ວຍການນຳໃຊ້ເຕັກນິກເຂົ້າໃນການຜະລິດສູງຂຶ້ນ. ຄະນະພັກ, ຄະນະນຳຂອງເມືອງ, ຫ້ອງການກະສິກຳ-ປ່າໄມ້ເມືອງ ກໍໄດ້ເຮັດໜ້າທີ່ປຸກລະດົມຂົນຂວາຍພາກສ່ວນທີ່ກ່ຽວຂ້ອງ, ດຶງດູດການລົງທຶນ, ການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດເຂົ້າໃສ່ການຜະລິດ ໃນນັ້ນ, ບໍລິສັດລ້ານຊ້າງ, ບໍລິສັດໄອເລີນບາກລາວ ໄດ້ໃຫ້ການຊ່ວຍເຫຼືອທາງດ້ານແນວພັນ, ພື້ນຖານວັດຖຸ, ເຕັກນິກໃນການປູກໄມ້ໃຫ້ໝາກ ຮ່ວມກັບປະຊາຊົນກໍ່ຄືຊາວກະສິກອນໃນເບື້ອງບໍລິສັດມາສຳຫຼວດດິນ ແລະ ໄດ້ເອົາວິຊາການມາຈາກປະເທດອົດສະຕາລີເອົາດິນຂອງບ້ານນຳໄປວິໄຈ ເຫັນວ່າຄຸນນະພາບດີສາມາດປູກໝາກກ້ຽງໄດ້ ເຊິ່ງບ້ານນາຫອຍເປັນບ້ານໜຶ່ງທີ່ມີເນື້ອທີ່ເໝາະສົມໃນການປູກໝາກກ້ຽງໃນໂຄງການດັ່ງກ່າວ. ດ້ວຍເຫດນັ້ນ, ປະຊາຊົນພາຍໃນບ້ານນາຫອຍຈຳນວນໜຶ່ງ ຈຶ່ງໄດ້ຕັດສິນໃຈທົດລອງເຮັດສວນປູກໝາກກ້ຽງ ເປັນສິນຄ້າ. ເຊິ່ງໄລຍະນັ້ນມີພຽງ 12 ຄອບຄົວປູກໝາກກ້ຽງ ເຊິ່ງໄລຍະທຳອິດທາງບໍລິສັດໄດ້ສະໜອງເບ້ຍໝາກກ້ຽງຈຳນວນ 100 ຕົ້ນຕໍ່ຄອບຄົວ, ປີ 2016 ເພີ່ມຂຶ້ນເປັນ 19 ຄອບຄົວ, ປີ 2017 ເຖິງປະຈຸບັນມີຈຳນວນ 37 ຄອບຄົວ ເຊິ່ງຄອບຄົວຂອງສະຫາຍ ຄຳເຜີຍ ອິນທິແສງ ທີ່ໄດ້ຮັບທຶນຈາກໂຄງການດັ່ງກ່າວ ແລະ ກໍ່ແມ່ນຄອບຄົວຕົວແບບປູກໝາກກ້ຽງເປັນສິນຄ້າ ຂອງບ້ານນາຫອຍທີ່ລາຍຮັບໃນການປູກໝາກກ້ຽງ 200 ກວ່າລ້ານກີບຕໍ່ປີ ເຊິ່ງສະຫາຍກໍ່ແມ່ນອາດີດເລຂາໜ່ວຍພັກບ້ານ ແລະ ກໍ່ແມ່ນຄົນພື້ນຖານມານາຫອຍເມືອງ ວິລະບູລີ ແຂວງສະຫວັນນະເຂດ ມາແຕ່ກຳເນີດ ສະຫາຍໄດ້ສ້າງຄອບຄົວໃນປີ 1971 ກັບນາງ ໂພສີ ອິນທິແສງ ມີລູກນຳກັນ

4 ຄົນ, ຍິງ 1 ຄົນ. ຄອບຄົວຂອງສະຫາຍ ໂດຍເລີ່ມປູກໝາກກ້ຽງຈາກ 100 ຕົ້ນໃນປີ 2015ໃນເນື້ອທີ່ ທັງໝົດ 4 ເຮັກຕາ ມູນຄ່າການລົງທຶນເບື້ອງຕົ້ນແມ່ນຊື້ເບ້ຍໝາກກ້ຽງຈາກບໍລິສັດໄອເລີນບາກລາວ ນຳມາຈຳໜ່າຍໃຫ້ໃນລາຄາເບ້ຍລະ 30.000 ກີບ ໃນມູນຄ່າການລົງທຶນເບື້ອງຕົ້ນ 3 ລ້ານກວ່າກີບ ແລະ ໄດ້ຂະຫຍາຍການປູກມາເລື້ອຍໆມາເຖິງປະຈຸບັນ ມີຈຳນວນ 2.000 ຕົ້ນ, ໄລຍະພຽງ 3 ປີ ກໍສາມາດເກັບຜົນລະລິດໄດ້ ເຊິ່ງສາມາດເກັບກ່ຽວໄດ້ປີລະຄັ້ງ, ໄລຍະທຳອິດຈະໄດ້ຂາຍໃຫ້ສະເພາະບໍລິສັດໄອເລີນບາກລາວ ນັບແຕ່ປີ 2018-2021 ແມ່ນດິນທີ່ສາມາດປູກໄດ້ຂະໜາດຄວາມກ້ວາງແມ່ນ 40 ຊມ x 40 ຊມ, ໄລຍະຫ່າງຂອງຕົ້ນແມ່ນ 3 ແມັດ, ໄລຍະຕໍ່ແຖວ 5 ແມັດ, ສາຍພັນທີ່ນຳມາປູກໃນສວນມີທັງໝົດ 9 ສາຍພັນຄື: ສາຍພັນ ອະພອນໂລ, ສາຍພັນໂຮໂຍ, ສາຍພັນ ຟຣີມອນ, ສາຍພັນ ຟາມີໂຣ, ສາຍພັນລາມ, ສາຍພັນ ເມີກອດ, ສາຍພັນ ສະເລັດຕີອານາ, ສາຍພັນໝາກນາວ, ສາຍພັນເລມອນບັນດາສາຍພັນດັ່ງກ່າວ ລ້ວນແຕ່ນຳເຂົ້າມາຈາກປະເທດອົດສະຕາລີ.

ການບົວລະບັດຮັກສາ: ຕ້ອງໄດ້ໝັ່ນຕັດຫຍ້າເປັນປະຈຳ, ຕັດຕອນກິ່ງງ່າ, ໃສ່ຝຸ່ນ ແລະ ຕິດຕາມພະຍາດ

ໄດ້ຮັບຜົນຜະລິດ (ຄັ້ງທີ1) ໝາກກ້ຽງລາຄາ 4.000-6.000ກີບ/ກິໂລ, ສະເລ່ຍລາຍຮັບ 36 ລ້ານກີບ, ມາຮອດປີ 2022 ແມ່ນໄດ້ຈຳໜ່ອຍສົ່ງອອກສູ່ທ້ອງຕະຫຼາດເອງ ໂດຍບໍ່ໄດ້ສົ່ງໃຫ້ບໍລິສັດໄດ້ຮັບຜົນຜະລິດແມ່ນໄດ້ 20 ໂຕນ, ຂາຍໃນລາຄາ 10.000/ ກິໂລ ສາມາດສ້າງໄດ້ຮັບສະເລ່ຍ 200 ກວ່າລ້ານກີບ/ປີ.

ສຳລັບວິທີການປູກ ແລະ ບົວລະບັດຮັກສາ ວິທີການປູກ: ເລີ່ມແຕ່ຂັ້ນຕອນກະກຽມດິນນັ້ນແມ່ນມີຄວາມສຳຄັນ ຕ້ອງເປັນດິນທີ່ໄດ້ມີການວິໄຈມາແລ້ວ ທີ່ເກີດຂຶ້ນ ແລະ ໃຊ້ຢາກຳຈັດມັນໃຫ້ທ່ວງທັນເວລາ ເມື່ອພົບພະຍາດເປັນຕົ້ນພະຍາດໄຮແດງ. ສຳລັບນ້ຳແມ່ນຕ້ອງພຽງພໍຖ້ານ້ຳບໍ່ພຽງພໍຜົນກະທົບຕາມມາແມ່ນໝາກບໍ່ຈັບ, ເກີດພະຍາດ ແລະ ບໍ່ສາມາດອອກດອກ.

ນອກຈາກອາຊີບປູກໝາກກ້ຽງແລ້ວ ຍັງມີອາຊີບສຳຮອງຄື: ປູກມັນຕົ້ນຂາຍມັນຕົ້ນດິບ 72 ລ້ານກີບ/ປີ, ຂາຍມັນຕົ້ນແຫ້ງ19,2 ລ້ານກີບ/ປີ, ປູກກະລໍ່າປີ ລາຍຮັບ 3 ລ້ານກີບ/ປີ, ປູກໝາກເຜັດຂາຍ 4-5ລ້ານກີບ/ປີ, ປູກໝາກຖົ່ວ, ໝາກເຂືອ, ໝາກແຕງ ຂາຍລາຍຮັບ 5

ລ້ານກີບ/ປີ ຕະຫຼາດຈຳໜ່ອຍແມ່ນມີຢູ່ເມືອງ ທ່າແຂກ ແຂວງ ຄຳມ່ວນ, ເມືອງເຊໂນ, ນະຄອນໄກສອນ ພົມວິຫານ ແຂວງສະຫວັນນະເຂດ ແລະ ຕະຫຼາດລາວ-ບາວສສ ຫວຽດນາມ ສະເລ່ຍລາຍຮັບທັງໝົດຂອງຄອບຄົວແມ່ນຫຼາຍຮ້ອຍລ້ານ/ປີ ຈາກຜົນສຳເລັດທີ່ກ່າວມານັ້ນ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເປັນກ້າວໆມາ ສະແດງອອກປະຈຸບັນມີເຮືອນແໜ້ນໜາຖາວອນ ຈຳນວນ 2 ຫຼັງ, ມີເນື້ອທີ່ທຳການຜະລິດ, ມີພາຫະນະຮັບໃຊ້ໃນຄອບຄົວຄື: ລົດ 6 ລໍ້ 1 ຄັນ, ລົດກະບະ 1 ຄັນ, ລົດຈັກ 4 ຄັນ ແລະ ມີເງິນເກັບອອມໄວ້ໃຊ້ຈ່າຍຍາມຈຳເປັນຈຳນວນໜຶ່ງ.

ຄຽງຄູ່ກັບຜົນສຳເລັດ ແລະ ຂໍ້ສະດວກທີ່ກ່າວມານັ້ນ, ຜ່ານການຈັດຕັ້ງປະຕິບັດເຫັນວ່າ ຍັງມີຂໍ້ຫຍຸ້ງຍາກຈຳນວນໜຶ່ງ ເປັນຕົ້ນນໍ້າທີ່ຈະໃຊ້ເຂົ້າໃນການຜະລິດບໍ່ຕອບສະໜອງໄດ້ຕາມຄວາມຕ້ອງການ, ບັນຫາສັດຕູພືດໄຮແດງ ທີ່ສ້າງຜົນກະທົບຕໍ່ຜົນຜະລິດ ເຮັດໃຫ້ຕົ້ນໄມ້ເກີດພະຍາດ ແລະ ຜົນຜະລິດບໍ່ໄດ້ມາດຕະຖານທີ່ກຳນົດໄວ້, ຕໍ່ກັບບັນຫາດັ່ງກ່າວ, ຈຶ່ງສະເໜີໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງຊ່ວຍເຫຼືອດ້ານການວິຊາການລົງມາຕິດຕາມເປັນປົກກະຕິ, ການສະໜອງນໍ້າຍັງບໍ່ພຽງພໍກັບສວນທີ່ມີການຂະຫຍາຍອອກໃໝ່, ສະໜອງຢາບຳລຸງຕົ້ນໝາກກ້ຽງ ແລະ ຢາຂ້າພະຍາດໄຮແດງ, ພ້ອມກັນນັ້ນ, ສະເໜີໃຫ້ອົງການທີ່ກ່ຽວຂ້ອງຊອກຫາວິທີທາງແກ້ໄຂກໍລະນີໝາກກ້ຽງຕົກເກາດໃນການແປຮູບຜະລິດຕະພັນ ເປັນສິນຄ້າ.

ເພື່ອຢັ້ງຢືນເຖິງຜົນສຳເລັດໃນໂອກາດສຳພາດຕົວແບບຂອງບ້ານນາຫອຍ ຍັງໄດ້ສຳພາດ ສະຫາຍຄຳໄສ ອິນທະປັນຍາ ຮັກສາການຫ້ອງການກະສິກຳ-ປ່າໄມ້ເມືອງ ວິລະບູລີຍັງໄດ້ຢັ້ງຢືນຕື່ມອີກວ່າ: "ໃນການປູກຕົ້ນໄມ້ໃຫ້ໝາກ ໃນໄລຍະຜ່ານມາຖືວ່າມີການຂະຫຍາຍຕົວດີ ໂດຍເລີ່ມແຕ່ປີ 2015 ເປັນຕົ້ນມາໃນການປູກມາກ້ຽງ ມາຮອດປີ 2019 ໄດ້ຮັບຜົນຜະລິດ. ຫຼາຍຄອບຄົວທີ່ປູກກໍ່ເປັນທ່າແຮງອັນໜຶ່ງທາງດ້ານເສດຖະກິດຂອງເມືອງ. ດັ່ງຄອບ ຄົວສະຫາຍ ຄຳເຜີຍ ອິນທິແສງ ກໍ່ເປັນຄອບຄົວໜຶ່ງທີ່ພົ້ນເດັ່ນໃນການປູກໝາກກ້ຽງເປັນສິນຄ້າ ເຊັ່ນດຽວກັບຫຼາຍຄອບຄົບທີ່ປູກສາມາດເປັນຄອບຄົວທີ່ພົ້ນທຸກໄດ້. ໃນຕໍ່ໜ້ານີ້ຫ້ອງການກະສິກຳ-ປ່າໄມ້ເມືອງ ກໍ່ໄດ້ມີທິດໃນການຂະຫຍາຍການກ້າເບ້ຍ ເພື່ອສະໜອງໃຫ້ແກ່ຊາວກະສິ

ອ່ານຕໍ່ໜ້າ 53

ບາງບົດຮຽນການກໍ່ສ້າງ, ປັບປຸງພັກ ໃນ ລະບົບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນໄລຍະໃໝ່

ແປ ແລະ ຮຽບຮຽງໂດຍ: ແພງໃຈ ທຳມະວົງສາ

ພັກກອມມູນິດຫວຽດນາມ ໃຫ້ຄວາມສຳຄັນຕໍ່ວຽກງານການກໍ່ສ້າງພັກ ແລະ ການປັບປຸງປົວແປງພັກ ເພາະມັນແມ່ນຫຼັກການແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ. ໃນເງື່ອນໄຂທີ່ເປັນພັກກຳອຳນາດ, ການກໍ່ສ້າງພັກ ແລະ ປັບປຸງປົວແປງພັກຕິດພັນກັບການກໍ່ສ້າງລະບົບການເມືອງ; ເຮັດໃຫ້ພັກ ແລະ ແຕ່ລະອົງການໃນລະບົບການເມືອງປອດໃສ ແລະ ເຂັ້ມແຂງ; ຮັບປະກັນສະຖຽນລະພາບ, ຄວາມສອດຄ່ອງ, ຄວາມສົມບູນ ແລະ ການພົວພັນກັນ ຂອງການຈັດຕັ້ງ ແລະ ການເຄື່ອນໄຫວ; ເສີມສ້າງຄວາມສາມາດສະກັດກັ້ນ,ປ້ອງກັນ ແລະ ລົບລ້າງຄວາມສ່ຽງທັງຫມົດຂອງການເສື່ອມໂຊມພາຍໃນພັກ.

ໃນໄລຍະ 10 ປີຜ່ານມາ, ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມໄດ້ອອກມະຕິ, ຄຳສັ່ງສຳຄັນຫຼາຍສະບັບກ່ຽວກັບການກໍ່ສ້າງພັກ ແລະ ປັບປຸງລະບົບການເມືອງຢ່າງເປັນເອກະພາບ ແລະ ເປັນລະບົບຄົບຊຸດ; ສຸມໃສ່ຊີ້ນຳຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີປະສິດທິຜົນ. ໃນເອກະສານຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ໃນຫົວຂໍ້ສຳຄັນທີ່ເນັ້ນໜັກເຖິງການກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ. ການກໍ່ສ້າງ, ປັບປຸງພັກ ແລະ ກໍ່ສ້າງລະບົບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງ ມີຄວາມສຳພັນທາງດ້ານວິໄນ ແລະ ມີຜົນກະທົບເຊິ່ງກັນ ແລະ ກັນ; ໃນນັ້ນ, ການກໍ່ສ້າງ ແລະ ປັບປຸງພັກແມ່ນຂໍກຸນແຈ, ສ້າງກຳລັງໝູນຊຸກຍູ້ການກໍ່ສ້າງລະບົບການເມືອງ; ພ້ອມກັນນັ້ນ, ກໍ່ເຮັດໃຫ້ລະບົບການເມືອງປອດໃສ, ເຂັ້ມແຂງ ເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ, ສ້າງພື້ນຖານອັນໜັກແໜ້ນ ເພື່ອເສີມຂະຫຍາຍບົດບາດນຳພາຂອງພັກໃນລະບົບການເມືອງ ແລະ ທົ່ວສັງຄົມ. ການກໍ່ສ້າງລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ, ຮັດແໜ້ນສາຍພົວພັນອັນສະໜິດແໜ້ນລະຫວ່າງພັກ ແລະ ປະຊາຊົນ, ຈະເປັນການເພີ່ມທະວີກຳລັງແຮງຂອງທົ່ວພັກ ແລະ ທົ່ວປວງຊົນທັງຊາດ, ເສີມຂະຫຍາຍທ່າແຮງ ແລະ ຫົວຄິດປະດິດສ້າງ, ເຂົ້າໃນການພັດທະນາປະເທດຊາດຢ່າງແຂງແຮງ ບົນພື້ນຖານດັ່ງກ່າວ ເປັນສ່ວນສຳຄັນເຂົ້າໃນການກໍ່ສ້າງພັກເຮັດໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ. ສະນັ້ນສາມາດຢັ້ງຢືນໄດ້ວ່າ: ການເພີ່ມທະວີການກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ ແມ່ນຄວາມຮຽກຮ້ອງຕ້ອງການອັນດັບໜຶ່ງ, ທີ່ຂາດບໍ່ໄດ້ໃນຂະບວນການປ່ຽນແປງໃໝ່ຂອງປະເທດຊາດ, ການເຊື່ອມໂຍງທາງດ້ານເສດຖະກິດ, ການປັບປຸງກົງຈັກ ແລະ ຍົກສູງຄວາມສາມາດນຳພາຂອງພັກ ແລະ ອຳນາດການປົກຄອງ, ປະກອບສ່ວນຍົກສູງປະສິດ

ທີພາບ ແລະ ປະສິດທິຜົນໃນການເຄື່ອນໄຫວຂອງລະບົບການເມືອງ, ຊຸກຍູ້ປະຊາທິປະໄຕສັງຄົມນິຍົມ, ຮັບປະກັນຄວາມໝັ້ນຄົງຂອງລະບົບການເມືອງ, ຄວາມເຂົ້າອົກເຂົ້າໃຈລະຫວ່າງການປະດິດສ້າງທາງດ້ານເສດຖະກິດ ແລະ ນະວັດຕະກຳທາງດ້ານການເມືອງ, ນຳພາປະເທດຊາດໃຫ້ມີການພັດທະນາຢ່າງວ່ອງໄວ ແລະ ຍືນຍົງ.

ພັກກອມມູນິດຫວຽດນາມ ໄດ້ເອົາໃຈໃສ່ເປັນພິເສດຕໍ່ວຽກງານການກໍ່ສ້າງ ແລະ ປັບປຸງພັກ, ໂດຍສ່ອງແສງໃຫ້ເຫັນ 03 ເນື້ອໃນໃຫຍ່ຄື:

① ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ; ② ຊຸກຍູ້ປະຊາທິປະໄຕພາຍໃນພັກ, ຕໍານິຕິຊົມ; ຕົນເອງ ແລະ ຕໍານິຕິຊົມກັນຢ່າງເປັນປົກກະຕິ ແລະ ແຂງແຮງ; ③ ສຸມໃສ່ສ້າງຈິດສໍານຶກແຫ່ງມະນາຈິດປະຕິວັດ, ເດັດດ່ຽວລົບລ້າງລັດທິເອກະຊົນ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ຈະພາໃຫ້ເກີດການເສື່ອມໂຊມພາຍໃນພັກ. ທັດສະນະດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງເລິກເຊິ່ງ ໃນທົ່ວພັກກອມມູນິດຫວຽດນາມ; ເປີດບັ້ນກໍ່ສ້າງ, ປັບປຸງພັກຢ່າງກວ້າງຂວາງ ແລະ ເຮັດເປັນປະຈຳ. ກ່ອນການພັງທະລາຍຂອງຮູບແບບສັງຄົມນິຍົມໃນອະດີດສະຫະພາບໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກ, ວຽກງານກໍ່ສ້າງພັກ ແລະ ປັບປຸງປົວແປງພັກ ໄດ້ຮັບຄວາມເອົາໃຈໃສ່ເປັນພິເສດຈາກພັກກອມມູນິດຫວຽດນາມ.

ນັບແຕ່ກອງປະຊຸມຄົບຄະນະສູນກາງພັກ ຄັ້ງທີ 6 ແລະ 7 (ສະໄໝທີ VI) ໃນປີ 1989, ພັກກອມມູນິດຫວຽດນາມ ໄດ້ຮັບຮອງເອົາບັນດານະໂຍບາຍ, ມະຕິກ່ຽວກັບການປົກປັກຮັກສາພື້ນຖານອຸດົມການຂອງພັກ, ເສັ້ນທາງກ້າວສູ່ສັງຄົມນິຍົມ, ຕ້ານຜົນກະທົບອັນໃຫຍ່ຫຼວງຈາກວິກິດການສັງຄົມນິຍົມໃນທົ່ວໂລກ. ກອງປະຊຸມຄົບຄະນະ ຄັ້ງທີ III ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ VII (ເດືອນ 6/1992) ໄດ້ອອກມະຕິ ກ່ຽວກັບບາງວຽກງານການປະຕິຮູບ ແລະ ປັບປຸງພັກ; ໃນນັ້ນ, ໄດ້ສະແດງອອກຢ່າງກົງໄປກົງມາເຖິງຂໍ້ບົກຜ່ອງທີ່ກາຍເປັນໄພອັນຕະລາຍທີ່ບໍ່ອາດຄາດຄະເນໄດ້, ນັ້ນແມ່ນ: ພາຍໃນພັກ, ສະມາຊິກພັກຈຳນວນໜຶ່ງ ໄດ້ເສື່ອມຖອຍທາງດ້ານມະນາຈິດປະຕິວັດ, ໄດ້ຫຼົງລືມອຸດົມຄະຕິຂອງຕົນ, ເກີດການຫັນປ່ຽນ ແລະ ຂາດຄວາມເຊື່ອໝັ້ນ, ບາງສະຫາຍໄດ້ຮັບຜົນກະທົບຈາກທ່າອ່ຽງແນວຄິດສວຍໂອກາດ, ຢາກນຳພາປະເທດໄປສູ່ເສັ້ນທາງໃໝ່ຕາມລະບອບປະຊາທິປະໄຕແບບນາຍທຶນ; ພະນັກງານ, ສະມາຊິກພັກຫຼາຍສະຫາຍໄດ້ມີແນວຄິດລັດທິເອກະຊົນ, ກາຍເປັນການເສື່ອມໂຊມດ້ານການເມືອງແນວຄິດ ແລະ ສໍ້ລາດບັງຫຼວງ.

ມາຮອດປີ 1999, ຕໍ່ໜ້າຄວາມຮຽກຮ້ອງຕ້ອງການໃໝ່ຂອງການປະຕິວັດ, ຈຸດອ່ອນຈຳນວນໜຶ່ງຂອງພັກກອມມູນິດຫວຽດນາມ ໄດ້ຮັບການເປີດເຜີຍເຊັ່ນ: ການເສື່ອມໂຊມດ້ານການເມືອງ-ແນວຄິດ, ການສໍ້ລາດບັງຫຼວງ ແລະ ສິ່ງຫຍໍ້ທໍ້ຕ່າງໆເກີດຂຶ້ນກັບພະນັກງານ, ສະມາຊິກພັກ. ດັ່ງນັ້ນ, ກອງປະຊຸມຄົບຄະນະຄັ້ງທີ 6 (ສະໄໝທີ VIII) ຄະນະບໍລິຫານງານສູນກາງພັກໄດ້ອອກມະຕິສະບັບໜຶ່ງ ກ່ຽວກັບບັນຫາພື້ນຖານ ແລະ ຮີບດ່ວນໃນປະຈຸບັນຂອງວຽກງານກໍ່ສ້າງພັກ. ຈົນກ້າວເຂົ້າສູ່ໄລຍະດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ພັກກອມມູນິດຫວຽດນາມໄດ້ຮັບຮູ້ຢ່າງກົງໄປກົງມາວ່າ: ວຽກງານກໍ່ສ້າງພັກຍັງມີຂໍ້ຈຳກັດ ແລະ ຂໍ້ຄົງຄ້າງຫຼາຍດ້ານ, ເຖິງແມ່ນຈຸດອ່ອນ ແລະ ຂໍ້ບົກຜ່ອງທີ່ແກ່ຍາວມາຫຼາຍສະໄໝຈະໄດ້ຮັບການແກ້ໄຂ ແຕ່ກໍ່ຍັງຊັກຊ້າ. ຖ້າຫາກບໍ່ແກ້ໄຂ, ຈະເປັນການທ້າທາຍຕໍ່ການນຳພາຂອງພັກ ແລະ ຄວາມໝັ້ນຄົງຂອງລະບົບການເມືອງ. ພະນັກງານ, ສະມາຊິກພັກຈຳນວນຫຼວງຫຼາຍ, ລວມທັງຜູ້ດຳລົງຕຳແໜ່ງຂັ້ນນຳພາ-ຄຸ້ມຄອງ, ພະນັກງານການນຳລະດັບສູງຈຳນວນໜຶ່ງ,

ໄດ້ເສື່ອມໂຊມດ້ານອຸດົມການການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ; ແລ່ນນຳແຕ່ຊື່ສຽງ, ລາບຍົດ, ຕຳແໜ່ງ, ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່, ເຮັດຕາມອຳເພີໃຈຕົນເອງ. ຈາກສະພາບການດັ່ງກ່າວ, ກອງປະຊຸມຄົບຄະນະບໍລິຫານງານສູນກາງສະໄໝທີ XI, XII, XIII ຂອງພັກກອມມູນິດຫວຽດນາມໄດ້ອອກມະຕິກ່ຽວກັບວຽກງານການກໍ່ສ້າງ ແລະ ປັບປຸງພັກ. ໃນນັ້ນ, ກອງປະຊຸມຄະນະ ຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XIII ໄດ້ອອກມະຕິສະບັບເລກທີ 21-KL/TW, ລົງວັນທີ 25 ຕຸລາ 2021 ກ່ຽວກັບການເລັ່ງລັດການກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງ; ເດັດດ່ຽວສະກັດກັ້ນ, ແກ້ໄຂຢ່າງເຂັ້ມງວດຕໍ່ພະນັກງານ ແລະ ສະມາຊິກພັກທີ່ເສື່ອມໂຊມທາງດ້ານອຸດົມການການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນການດຳລົງຊີວິດ ສ່ອງແສງໃຫ້ເຫັນເຖິງຂະບວນເກີດການຫັນປ່ຽນດ້ວຍຕົວເອງຂອງສະມາຊິກພັກ. ນີ້ແມ່ນບັນດາຂີດໝາຍສຳຄັນທີ່ສຸດ ເພື່ອຢືນຢັນວ່າ ພັກກອມມູນິດຫວຽດນາມ ຍາມໃດກໍ່ເດັດດ່ຽວໝຽວແໜ້ນ, ເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ປະຈຸບັນ, ສ.ສ ຫວຽດນາມໄດ້ມີກາລະໂອກາດ ແລະ ມີທ່າແຮງຫຼາຍປະການ, ແຕ່ກໍ່ຍັງປະເຊີນໜ້າກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ. ພາລະກິດປະຕິວັດຂອງພັກ ແລະ ປະຊາຊົນຫວຽດນາມໄດ້ກ້າວເຂົ້າສູ່ໄລຍະແຫ່ງການຊຸກຍູ້ການຫັນປະເທດເປັນອຸດສາຫະກຳ ແລະ ທັນສະໄໝ, ເຊື່ອມໂຍງເຂົ້າກັບສາກົນຢ່າງຕັ້ງໜ້າ. ໄພອັນຕະລາຍ 4 ດ້ານຂອງພັກກອມມູນິດຫວຽດນາມ ທີ່ຊີ້ອອກຢູ່ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ VII ແມ່ນຍັງມີຢູ່ ແລະ ຍິ່ງຮ້າຍແຮງກວ່າເກົ່າອີກ. ໃນສະພາບການດັ່ງກ່າວ, ໄດ້ຮຽກຮ້ອງໃຫ້ພັກກອມມູນິດຫວຽດນາມ ຕ້ອງໄດ້ຍູ້ແຮງວຽກງານກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ ເພື່ອຍົກສູງຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບຂອງພັກ; ຍົກສູງປະສິດທິພາບ, ປະສິດທິຜົນໃນການເຄື່ອນໄຫວວຽກງານຂອງລັດ; ປັບປຸງບັນດາເນື້ອໃນ, ວິທີການ, ຍົກສູງຄຸນນະພາບ ແລະ ປະສິດທິຜົນການເຄື່ອນໄຫວຂອງແນວໂຮມປະເທດຊາດຫວຽດນາມ ແລະ ບັນດາອົງການຈັດຕັ້ງການເມືອງ-ສັງຄົມ; ສົມທົບກັນຢ່າງແໜ້ນແຟ້ນ ແລະ ກົມກຽວກັນລະຫວ່າງ ກໍ່ສ້າງ ແລະ ຕ້ານ, ໃນນັ້ນ ກໍ່ສ້າງ ແມ່ນວຽກງານພື້ນຖານ, ຍຸດທະສາດ, ຍາວນານ, ຕ້ານ ແມ່ນວຽກງານທີ່ສຳຄັນ, ຮີບດ່ວນ ແລະ ເປັນປະຈຳ. ສ້າງບາດກ້າວພັດທະນາໃໝ່ຂອງພັກກອມມູນິດຫວຽດນາມ ໃນດ້ານສະຕິປັນຍາ, ຄວາມກ້າຫານທາງດ້ານການເມືອງ, ມີຄຸນສົມບັດສິນທຳປະຕິວັດຢ່າງແທ້ຈິງ; ຕິດພັນສະໜິດແໜ້ນກັບປະຊາຊົນ, ສ້າງຄວາມເຊື່ອໝັ້ນໄວ້ວາງໃຈຂອງປະຊາຊົນ; ສ້າງໃຫ້ພັກມີບົດບາດອິດທິພົນ ແລະ ຄວາມສາມາດນຳພາຢ່າງພຽງພໍ ເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ, ເຮັດສຳເລັດພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດ ໂດຍສະເພາະແມ່ນສຸມໃສ່ປະຕິບັດໜ້າທີ່ ແລະ ແກ້ໄຂບັນຫາສຳຄັນຈຳນວນໜຶ່ງຢ່າງກົງໄປກົງມາດັ່ງນີ້:

ໜຶ່ງ, ສືບຕໍ່ປ່ຽນແປງໃໝ່ການສຶກສາອົບຮົມທາງດ້ານການເມືອງ, ແນວຄິດ; ສຸມໃສ່ກໍ່ສ້າງພັກກ່ຽວກັບຈັນຍາບັນ, ເພີ່ມທະວີຄວາມຮັບຜິດຊອບເປັນແບບຢ່າງຂອງພະນັກງານ, ສະມາຊິກພັກ, ພິເສດແມ່ນຜູ້ເປັນຫົວໜ້າ.

ປັບປຸງປະສິດທິຜົນຂອງວຽກງານສຶກສາອົບຮົມການເມືອງ-ແນວຄິດ, ສ້າງຄວາມສາມັກຄີພາຍໃນພັກ ແລະ ຄວາມສາມັກຄີເປັນເອກະພາບໃນສັງຄົມ. ສືບຕໍ່ເອົາໃຈໃສ່ສຶກສາຮ່ຳຮຽນຢ່າງເລິກເຊິ່ງ, ຮອບດ້ານ

ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ບັນດາທັດສະນະ ແລະ ທິດທາງທີ່ໄດ້ລະບຸໄວ້ໃນເອກະສານຂອງກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກເຊັ່ນ; ມະຕິ, ຄຳສັ່ງ ແລະ ລະບຽບການຕ່າງໆຂອງຄະນະບໍລິຫານງານສູນກາງພັກ. ໃຫ້ຖືເປັນການເຄື່ອນໄຫວທາງດ້ານການເມືອງຢ່າງຮອບດ້ານຂອງພັກ ແລະ ລະບົບການເມືອງ, ບໍ່ພຽງແຕ່ກຳແໜ້ນຈິດໃຈຊີ້ນຳ ແລະ ເນື້ອໃນເອກະສານຂອງພັກເທົ່ານັ້ນ ຫາກຍັງວິເຄາະ, ປຽບທຽບ ພ້ອມທັງເຜີຍແຜ່, ເຊື່ອມຊຶມ ແລະ ໂຄສະນາໃຫ້ສອດຄ່ອງກັບສະພາບຕົວຈິງຂອງອົງຄະນະພັກແຕ່ລະຂັ້ນ. ເຊີດຊູຄວາມເປັນແບບຢ່າງນຳໜ້າ, ມີສະຕິເປັນເຈົ້າຕົນເອງ ເພື່ອປູກຝັງ ແລະ ບຳລຸງສ້າງຄຸນສົມບັດສິນທຳປະຕິວັດຂອງພະນັກງານ ແລະ ສະມາຊິກພັກ ໂດຍສະເພາະແມ່ນບັນດາພະນັກງານການນຳ, ຜູ້ທີ່ມີຕຳແໜ່ງບໍລິຫານທຸກຂັ້ນຕ້ອງເປັນເຈົ້າການ, ເປັນຜູ້ບຸກເບີກ ແລະ ເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນ.

ສອງ, ເອົາໃຈໃສ່ກໍ່ສ້າງຖັນແຖວພະນັກງານ, ພິເສດແມ່ນພະນັກງານຂັ້ນຍຸດທະສາດ ແລະ ການນຳທຸກຂັ້ນ, ສົມທົບກັບການເສີມຂະຫຍາຍລັກສະນະປະດິດສ້າງ, ປັບປຸງກົງຈັກການຈັດຕັ້ງໃນລະບົບການເມືອງໃຫ້ປອດໃສ, ແທດຕົວຈິງ ແລະ ມີປະສິດທິຜົນ.

ການກໍ່ສ້າງຖັນແຖວພະນັກງານຕ້ອງມາຈາກຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ວຽກງານໃນໄລຍະໃໝ່; ຜ່ານການເຄື່ອນໄຫວປະຕິບັດຕົວຈິງ; ເອົາໃຈໃສ່ໃນວຽກງານລວມຂອງການກໍ່ສ້າງ ແລະ ປັບປຸງພັກ; ເຊື່ອມໂຍງກັບການປ່ຽນໃໝ່ແບບແຜນນຳພາຂອງພັກ ແລະ ຮັດແໜ້ນກົນໄກການຈັດຕັ້ງຂອງລະບົບການເມືອງໃຫ້ປອດໃສ, ມີປະສິດທິພາບ ແລະ ມີປະສິດທິຜົນ; ສົມທົບກັບການຍົກສູງຄວາມຮູ້, ການບຳລຸງສ້າງແຫຼ່ງຊັບພະຍາກອນມະນຸດ, ພິເສດແມ່ນແຫຼ່ງຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ, ດຶງດູດ, ເລືອກເຟັ້ນ ແລະ ນຳໃຊ້ຜູ້ທີ່ມີພອນສະຫວັນ. ປັບປຸງ ແລະ ດັດແປງປະສິດທິພາບຂອງການວາງແຜນ, ການໝູນວຽນຂອງພະນັກງານ ແລະ ການຕີລາຄາພະນັກງານ. ສືບຕໍ່ຊອກຫາພະນັກງານ, ສະມາຊິກພັກ ຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ, ໂດຍສະເພາະແມ່ນພະນັກງານຂັ້ນຍຸດທະສາດເພື່ອກະກຽມດ້ານບຸກຄະລາກອນ, ຮັບປະກັນການສືບທອດປ່ຽນແທນ, ສະຖຽນລະພາບ, ປະດິດສ້າງ ແລະ ພັດທະນາໄປໃນທາງທີ່ມີຄຸນນະພາບ ແລະ ຮັບປະກັນທາງດ້ານປະລິມານ; ຮັບປະກັນຄວາມດຸ່ນດ່ຽງ ແລະ ຄວາມກົມກຽວລະຫວ່າງການໝູນວຽນຂອງພະນັກງານ ແລະ ການພັດທະນາແຫຼ່ງພະນັກງານທ້ອງຖິ່ນ; ຍົກສູງຄຸນນະພາບຂອງພະນັກງານທາງດ້ານການເມືອງ-ແນວຄິດ, ຄຸນນະພາບ ແລະ ຄວາມສາມາດໃຫ້ແກ່ບັນດາຂົງເຂດສຳຄັນ, ຂົງເຂດຫຍຸ້ງຍາກ ແລະ ສັບສົນ; ຍົກສູງຄຸນນະພາບການປະເມີນຜົນພະນັກງານໄປສູ່ຄວາມຍຸຕິທຳຢ່າງແທ້ຈິງ, ມີເປົ້າໝາຍ, ມີມາດຕະຖານທີ່ຈະແຈ້ງ; ປະຕິບັດນະໂຍບາຍຊຸກຍູ້ ແລະ ປົກປ້ອງພະນັກງານທີ່ມີຄວາມດຸໝັ່ນ, ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ມີຄວາມມານະພະຍາຍາມ ເພື່ອຜົນປະໂຫຍດລວມ.

ສາມ, ສຸມໃສ່ປັບປຸງກົນໄກ, ນະໂຍບາຍທີ່ເປັນເອກະພາບ ແລະ ມີປະສິດທິຜົນ.

ການປັບປຸງກົນໄກ, ນະໂຍບາຍທີ່ເປັນເອກະພາບ ແລະ ມີປະສິດທິຜົນ ຕ້ອງສຸມໃສ່ສ້າງຈາກຄວາມເປັນຈິງ ແລະ ທັນການກັບການຈັດຕັ້ງປະຕິບັດແນວທາງຂອງພັກ; ກວດກາຄືນ, ປັບປຸງ, ສ້າງບັນດາລະບຽບການໃຫ້ຄົບຖ້ວນສົມບູນ; ປັບປຸງລະບົບກົດໝາຍຢ່າງຄົບຖ້ວນ, ສອດຄ່ອງ, ເປັນເອກະພາບ, ທັນການ, ເປັນໄປໄດ້,ໝັ້ນຄົງ, ທົ່ວເຖິງ, ໂປ່ງໃສ; ກໍ່ສ້າງ ແລະ ປັບປຸງບັນດາສະຖາບັນກໍ່ສ້າງພັກ, ລະບົບການເມືອງ, ຕ້ານການສໍ້ລາດບັງຫຼວງໃຫ້ກໍ່ສ້າງ, ຕ້ານສົມບູນຂຶ້ນ, ລະຫວ່າງການກໍ່ສ້າງ

ຄຸນສົມບັດສິນທຳປະຕິວັດ ແລະ ຕ້ານລັດທິບຸກຄົນ; ດັ່ງນັ້ນ, ຊ່ວຍໃຫ້ບັນດາພະນັກງານ, ສະມາຊິກພັກເພີ່ມທະວີການຕ້ານການລໍ້ລວງທັງໝົດ, ບໍ່ໃຫ້ມີການສໍ້ລາດບັງຫຼວງ, ການເສຍຫາຍດ້ານອຸດົມການການເມືອງ, ຄຸນສົມບັດ, ພຶດຕິກຳ, ການດຳລົງຊີວິດ, ປະກອບສ່ວນສະກັດກັ້ນ ແລະ ຕ້ອງສະກັດກັ້ນຢ່າງໜັກແໜ້ນກວ່າເກົ່າອີກ; ການປ້ອງກັນ, ຕ້ານ, ສະກັດກັ້ນ ແລະ ປິ່ນປົວທຸກປະເພດ ພະຍາດ ທີ່ເກີດຂຶ້ນໃນເງື່ອນໄຂເສດຖະກິດຕະຫຼາດ, ການເຊື່ອມໂຍງກັບສາກົນ; ຮັກສາລະບຽບວິໄນຂອງພັກຢ່າງເຂັ້ມງວດ. ກວດກາຄືນ, ປັບປຸງ ແລະ ປະຕິບັດໜ້າທີ່ໃຫ້ສຳເລັດ; ກຳນົດໜ້າທີ່, ຂອບເຂດສິດ, ຄວາມຮັບຜິດຊອບ, ສາຍພົວພັນຮ່ວມມືຂອງບັນດາຄະນະພັກ, ອຳນາດການປົກຄອງທຸກຂັ້ນ, ຮັບປະກັນການພົວພັນອັນດີງາມລະຫວ່າງ ການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ຄວາມເປັນເຈົ້າຂອງປະຊາຊົນ; ກຳນົດຂອບເຂດສິດອຳນາດ ແລະ ຄວາມຮັບຜິດຊອບຢ່າງຈະແຈ້ງ.

ສີ່, ເພີ່ມທະວີການກວດກາໃນການປະຕິບັດວິໄນຂອງພັກ; ເດັດດ່ຽວຕໍ່ສູ້ຕ້ານການສໍ້ລາດບັງຫຼວງ; ແກ້ໄຂບັນດາສະມາຊິກພັກທີ່ລະເມີດລະບຽບວິໄນຢ່າງເຂັ້ມງວດ.

ສ້າງການຫັນປ່ຽນຢ່າງຕັ້ງໜ້າໃນວຽກງານກວດກາ, ຕິດຕາມກວດກາ ໃນການປະຕິບັດວິໄນຂອງພັກ, ສົມທົບຢ່າງກົມກຽວລະຫວ່າງສະກັດກັ້ນກັບການປະຕິບັດວິໄນຕໍ່ຜູ້ລະເມີດ. ປັບປຸງ, ປ່ຽນແປງໃໝ່ວິທີການ,ຂັ້ນຕອນ ແລະ ທັກສະໃນການປະຕິບັດວຽກງານກວດກາ ໃນການປະຕິບັດວິໄນຂອງພັກໃຫ້ເຂັ້ມງວດ, ມີວິທີການທີ່ວິທະຍາສາດກວ່າເກົ່າ; ໃນນັ້ນ, ສຸມໃສ່ປັບປຸງບັນດາກົນໄກ, ມາດຕະການເຄື່ອນໄຫວກວດສອບ, ສະກັດກັ້ນ, ຕ້ານບັນດາຂໍ້ບົກຜ່ອງ ແລະ ພຶດຕິກຳທີ່ເປັນການລະເມີດຂອງບັນດາອົງການພັກ, ສະມາຊິກພັກແຕ່ຫົວທີ. ເພີ່ມທະວີການກວດກາ, ຕິດຕາມກວດກາການຈັດຕັ້ງພັກ, ຜູ້ເປັນຫົວໜ້າ, ພະນັກງານຫຼັກແຫຼ່ງຢູ່ບັນດາຂະແໜງການທີ່ເກີດການລະເມີດໄດ້ງ່າຍ, ບ່ອນມີຫຼາຍບັນຫາຮີບຮ້ອນເກີດຂຶ້ນ, ສັງຄົມມີຄວາມສົນໃຈ. ສຸມໃສ່ການກວດກາດ້ວຍຕົນເອງ, ຕິດຕາມກວດກາດ້ວຍຕົນເອງ, ທັນການ, ກວດພົບຈາກພາຍໃນ. ເພີ່ມທະວີການຄຸ້ມຄອງຊັບສິນ ແລະ ລາຍຮັບຂອງພະນັກງານໃຫ້ສອດຄ່ອງກັບລະບຽບການຂອງພັກ ແລະ ກົດໝາຍຂອງລັດ. ໃຫ້ຄວາມສຳຄັນໃນການປ່ຽນແປງໃໝ່, ປັບປຸງບູລະນະກົງຈັກການຈັດຕັ້ງຂອງຄະນະກຳມະການກວດກາຂັ້ນຕ່າງໆ, ກໍ່ສ້າງຖັນແຖວພະນັກງານກວດກາ ໃຫ້ມີຄວາມຊື່ສັດ, ບໍລິສຸດ, ມີຄວາມກ້າຫານ, ມີຄວາມຮູ້, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດລະບຽບພັກ ແລະ ກົດໝາຍຂອງລັດ.

ຫ້າ, ເສີມຂະຫຍາຍບົດບາດ ແລະ ຄວາມຮັບຜິດຊອບຂອງບັນດາອົງການເລືອກຕັ້ງ, ແນວໂຮມປະເທດຊາດ ຫວຽດນາມ, ບັນດາອົງການຈັດຕັ້ງການເມືອງ-ສັງຄົມ; ເອົາໃຈໃສ່ຢ່າງແທ້ຈິງໃນການກໍ່ສ້າງ, ປັບປຸງພັກໃນລະບອບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງ.

ຍົກສູງຄຸນນະພາບ, ປະສິດທິຜົນການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນທຸກຂັ້ນ; ຕິດຕາມກວດກາ, ຄວາມຄິດເຫັນຂອງສັງຄົມ, ແນວໂຮມປະເທດຊາດ ຫວຽດນາມ ແລະ ບັນດາອົງການຈັດຕັ້ງການເມືອງ-ສັງຄົມ; ສືບຕໍ່ສ້າງກົນໄກໃຫ້ສົມບູນຄົບຊຸດເພື່ອໃຫ້ປະຊາຊົນມີສ່ວນຮ່ວມໃນການກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງ. ບູລະນະລະບຽບການຂອງພັກໃຫ້ດີ, ພ້ອມກັນນັ້ນກໍ່ສ້າງລະບຽບການໃຫ້ສົມບູນຄົບຊຸດກ່ຽວກັບການຕ້ານການສໍ້ລາດບັງຫຼວງ, ລະບຽບການໃນການຄວບຄຸມອຳນາດຢ່າງເປີດເຜີຍ, ໂປ່ງໃສ, ຊັດເຈນ ເພື່ອໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນທຸກຂັ້ນໄດ້

ເຂົ້າຮ່ວມ. ສຸມໃສ່ປູກຝັງຈັນຍາບັນ ແລະ ບຳລຸງສ້າງຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດຂອງພະນັກງານ, ສະມາຊິກພັກ; ຊຸກຍູ້ເຂົ້າຮ່ວມການຕິດຕາມກວດກາ ແລະ ປະກອບຄຳເຫັນໃສ່ວຽກງານກໍ່ສ້າງພັກ, ກໍ່ສ້າງລະບົບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງ. ບັນດາເລຂາຄະນະພັກ, ອຳນາດການປົກຄອງທຸກຂັ້ນຕ້ອງເພີ່ມທະວີຄວາມຮັບຜິດຊອບ, ປະຕິບັດລະບຽບການຂອງພັກ, ລັດຢ່າງເຂັ້ມງວດ; ຮັບມື ແລະ ຊີ້ນຳແກ້ໄຂບັນດາບັນຫາທີ່ໄດ້ຮັບການຮ້ອງຮຽນ ແລະ ຄຳຮ້ອງທຸກຂອງປະຊາຊົນໂດຍໄວ, ໂດຍສະເພາະແມ່ນບັນຫາທີ່ກ່ຽວຂ້ອງເຖິງຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດຂອງພະນັກງານ ແລະ ສະມາຊິກພັກ.

ທັງໝົດທີ່ກ່າວມານັ້ນ, ແມ່ນບາງບົດຮຽນກ່ຽວກັບວຽກງານການກໍ່ສ້າງ, ປັບປຸງພັກ ໃນລະບົບການເມືອງໃຫ້ປອດໃສ ແລະ ເຂັ້ມແຂງຂອງພັກກອມມູນິດຫວຽດນາມ; ວຽກງານກໍ່ສ້າງ, ປັບປຸງພັກໃນລະບົບການເມືອງຂອງ ສສ ຫວຽດນາມ ປະຈຸບັນນັບມື້ນັບເຂັ້ມແຂງ, ຮອບດ້ານ ຂຶ້ນເລື້ອຍໆ; ຂ້າພະເຈົ້າເຫັນວ່າຫຼາຍດ້ານສອດຄ່ອງກັບສະພາບຕົວຈິງຂອງວຽກງານກໍ່ສ້າງພັກ ໃນໄລຍະໃໝ່ຂອງພັກປະຊາຊົນປະຕິວັດລາວເຮົາ ຈຶ່ງໄດ້ຍົກເອົາເນື້ອໃນຂ້າງເທິງມາແລກປ່ຽນກັບຜູ້ອ່ານ...ຯ

ສະຫາຍ ຄຳເຜີຍ ອິນທິແສງ ອະດີດເລຂາໜ່ວຍພັກ...

ຕໍ່ຈາກໜ້າ 47

ກອນ ເຊິ່ງໃນປີນີ້ມີ 28.000-30.000 ເບ້ຍຈະຂະຫຍາຍເນື້ອທີ່ 35-75 ເຮັກຕາ ພ້ອມທັງຊອກຫາວິທີທາງໃນການຕອບສະໜອງແຫຼ່ງນໍ້າໃຫ້ແກ່ການຜະລິດ"

ທັງໝົດນັ້ນ ໄດ້ສະແດງໃຫ້ເຫັນວ່າແນວທາງນະໂຍບາຍຂອງພັກ-ລັດແມ່ນຖືກຕ້ອງ ໂດຍສະເພາະແມ່ນການຫັນເອົາການຜະລິດແບບທຳມະຊາດມາເປັນການຜະລິດເປັນສິນຄ້າ ເຮັດໃຫ້ປະຊາຊົນສາມາດຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ດັ່ງຄຳເຫັນຂອງປະທານ ຄຳໄຕ ສີພັນດອນທີ່ວ່າ: "ຕ້ອງເລີ່ມຈາກຄອບຄົວຊາວກະສິກອນ ຕາມທິດເອົາຄອບຄົວເປັນຈຸລັງ ຫຼື ຫົວໜ່ວຍພື້ນຖານແລ້ວສ້າງກຸ່ມບ້ານ ຫຼື ກຸ່ມເສດຖະກິດ-ສັງຄົມ, ເຂດເສດຖະກິດຄົບຊຸດ, ເສີມຂະຫຍາຍສະຕິເປັນເຈົ້າ, ຈິດໃຈເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ມີການປະສານສົມທົບ ແລະ ໃຊ້ຫຼາຍກຳລັງ; ປຸກລະດົມປະຊາຊົນເປັນເຈົ້າການສ້າງສາພັດທະນາດ້ວຍຕົນເອງ "ຈາກຜົນສຳເລັດຂອງສະຫາຍ ຄຳເຜີຍ ອິນທິແສງ ນີ້ສະແດງໃຫ້ເປັນວ່າສະຫາຍເປັນຕົວແບບໜຶ່ງທີ່ໄດ້ຫັນເອົາແນວທາງນະໂຍບາຍຂອງພັກ-ລັດວາງອອກມາຈັດຕັ້ງປະຕິບັດຈົນປະກົດຜົນເປັນຈິງ

ສຸດທ້າຍນີ້ ສະຫາຍ ຄຳເຜີຍ ອິນທິແສງ ໄດ້ແຊປະສົບການທີ່ເຮັດໃຫ້ມີຜົນສຳເລັດປັດໄຈສຳຄັນແມ່ນຕ້ອງມີມັກຮັກໃນອາຊີບ, ກຳນົດເປົ້າໝາຍ, ມີແຜນການຊັດເຈນ, ມີຄວາມມະນະອົດທົນສູງ, ກ້າຕັດສິນໃຈກ້າສ່ຽງເຖິງຜົນໄດ້ຜົນເສຍ ແລະ ທັງເຮັດແທ້ທຳຈິງ ຈຶ່ງຈະໄດ້ຮັບຜົນສຳເລັດ ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ຮຽນຮູ້ນຳວິຊາການແນະນຳທີ່ຖືກຕ້ອງຕາມຫຼັກວິຊາການ. ຖ້າຫາກທ່ານໃດມີຄວາມສົນໃຈ ຢາກສ້າງອາຊີບກໍ່ສາມາດຕິດຕໍ່ມາຫາຂ້າພະເຈົ້າ ພ້ອມທີ່ຈະໃຫ້ການແນະນຳວິທີການຕ່າງໆໃນການປູກ ຕາມເບີໂທນີ້: 030 4424478 ຫຼື ຈະມາຮຽນຮູ້ຕົວຈິງໄດ້ຢູ່ບ້ານ ນາຫອຍ ເມືອງວິລະບູລີ ແຂວງສະຫວັນນະເຂດ...ຯ

ວາລະສານກໍ່ສ້າງພັກ, ສະບັບ 259 ກັນຍາ 2023

ຜູ້ຊີ້ນໍາ
ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

ຄະນະບັນນາທິການ
ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ວິລັດ ສຸນີຈັນ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ

ບັນນາທິການ, ອອກແບບ ແລະ ຈັດໜ້າ
ທ່ານ ເຄນດີ ທໍາມະວອນ
ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຣັກ
ທ່ານ ນ. ແສງຄໍາ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສນຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈໍາໜ່າຍ
ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈໍາໜ່າຍ)
ທ່ານ ນ. ຈັນອາລີຈິດ ສົມພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

ນາມປາກກາ	ຫົວຂໍ້ບົດ	ໜ້າ
	ຄໍາສອນ	
******	-ປະທານໄກສອນ ພົມວິຫານ ເວົ້າເຖິງການດັດແປງວິທີເຮັດວຽກ	1
	ນິຕິກໍາ	
******	-ຄໍາສັ່ງ ວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ	2
******	-ຄໍາແນະນໍາ ການຈັດຕັ້ງປະຕິບັດຄໍາສັ່ງຂອງຄະນະເລຂາທິການສູນກາງພັກ	14
	ທິດສະດີ ແລະ ພຶດຕິກໍາ	
ສອນໄຊ ປ້ອງດາລາ	-ປັບປຸງວຽກງານກໍ່ສ້າງ-ບໍາລຸງພະນັກງານ ຢູ່ແຂວງ ສາລະວັນ	30
ເຄນດີ ທໍາມະວອນ	-ຄະນະພັກຮາກຖານດ່ານສາກົນແດນສະຫວັນ ເອົາໃຈໃສ່ນໍາພາ-ຊີ້ນໍາວຽກງານ	33
	ຄົ້ນຄວ້າ-ແລກປ່ຽນ	
ສາຍສະໝອນ ແກ້ວບຸນເຮຍ	-ພະແນກສຶກສາທິການ ແລະ ກິລາ ແຂວງຄໍາມ່ວນ ເອົາໃຈໃສ່ຍົກສູງຄຸນນະພາບ	37
ສຸກສະດາ ສຸລິໃຈ	-ຍົກສູງບົດບາດພະນັກງານນໍາພາ-ຄຸ້ມຄອງເພດຍິງ ຢູ່ແຂວງຜົ້ງສາລີ	41
	ວຽກດີຄົນເດັ່ນ	
ຄໍາສະຫວັນ ພົມມະວົງ	-ສະຫາຍ ຄໍາເຜີຍ ອິນທິແສງ ຕົວແບບໃນການປູກໝາກກ້ຽງເປັນສິນຄ້າ	45
	ບົດຮຽນຕ່າງປະເທດ	
ແພງໃຈ ທໍາມະວົງສາ	-ບາງບົດຮຽນການກໍ່ສ້າງ, ປັບປຸງພັກ ແລະ ລະບົບການເມືອງໃຫ້ປອດໃສ ແລະ	48
	-ສາລະບານ	54